# ໂຮມນິທານເດັ່ນຈາກອາຊີ
# ສຳຫຼັບຫຼານນ້ອຍ



ເຫຼັ້ມ III

ແປໂດຍ: ສິມແສງ ໄຊຍະວົງ

ຜູ້ຊ່ວຍກວດ: ທຸມພັນ ຣັດຕະນະວົງ

ສະຖາບັນຄົ້ນຄ້ວາວັດທະນະທຳ

ກະຊວງຖະແຫຼງຂ່າວແລະວັດທະນະທຳ

# ໂຮມນິທານເດັ່ນຈາກອາຊີ ສຳຫຼັບຫຼານນ້ອຍ

ເຫຼັ້ມ III



ແປໂດຍ: ສີມແສງ ໄຊຍະວົງ

ຜູ້ຊ່ວຍກວດ: ທຸມພັນ ຣັດຕະນະວົງ

ສະຖາບັນຄົ້ນຄ້ວາວັດທະນະທຳ

ກະຊວງຖະແຫຼງຂ່າວແລະວັດທະນະທຳ

*จัดพิมโดย*

ສະຖາບັນຄົ້ນຄວ້າວັດທະນະທຳ

ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ

**ດ້ວຍການສະໜັບສະໜູນ**

ຈາກ ກອງທຶນໂຕໂຢຕ້າ

*The Toyota Foundation*

ສະຫງວນລິຂະສິດ

ອຸດທິດແກ່

ຫຼານນ້ອຍ ຜູ້ທີ່ໄດ້ຈາກໄປ

ປາງສົງຄາມ

ຢ່າງບໍ່ມີມື້ກັບມາ

# ຫລານ ທີຮັກ

ຫຼານທີ່ຮັກຂອງລຸງແລະຂອງຊາດ ຫຼານຮູ້ແລ້ວບໍ່ວ່າແຕ່ລະຊາດແຕ່ລະພາສານັ້ນມີພູມີປະເທດແລະທ້ອງທີ່ບ່ອນຢູ່ອາໄສຂອງຕົນ ແຕກຕ່າງກັນ ມີພາສາປາກເວົ້າແຕກຕ່າງກັນ ມີຫນ້າຕາ ບໍ່ເຫມືອນກັນແລະ ມີຮີດຄອງປະເພນີຫຼາກຫຼາຍແລະແຕກຕ່າງກັນໄປ. ແຕ່ກໍ່ມີອັນຄ້າຍຄືກັນຢູ່ຫຼາຍຢ່າງ ແລະຫຼານຮູ້ບໍ່ວ່າແມ່ນຫຍັງ ? ກໍ່ແມ່ນຄວາມມັກມີຊີວິດອັນອີ່ມຫນຳສຳລານ ມັກສັນຕິສຸກ ມັກຄວາມເປັນທຳຄວາມມີມະນຸດສະທຳ ແລະຄວາມບໍ່ເອົາປຽບເອົາລັດກັນໃນສັງຄົມ ຄວາມປາຖະຫນານັ້ນເອງທີ່ເຮັດໃຫ້ມະນຸດເຮົາເລີ່ມຫັນຫນ້າເຂົ້າຫາກັນ ຮັກແພງກັນ ເຫັນໃຈກັນ ແລະຊ່ວຍເຫຼືອເຊິ່ງກັນແລະກັນ. ໄທລາວເຮົາທຸກເຜົ່າແລະເຂດແຄວ້ນ ມີຄວາມປາຖະຫນາແບບນີ້ ຢ່າງເປັນມູນເຊື້ອມາແລ້ວ ແລະລະດັບວັດທະນະທຳທາງຈິດໃຈປະເພດນີ້ພວກເຮົາເຄີຍມີສູງສົ່ງມາແລ້ວ ເຊັ່ນຄວາມມີເມດຕາຈິດ ເອື້ອອາລີ ຈິດໃຈຜ່ອງໃສ ບໍລິສຸດ ຊື່ສັດ ເຄົາລົບຢຳເກງ ເອື້ອເຟື້ອແລະຮັກຜູ້ອື່ນສິ່ງສຳຄັນ ແມ່ນພວກເຮົາມີວັດທະນະທຳທີ່ໃຫ້ຄວາມເຄົາລົບ ພໍ່ແມ່ເຖົ້າແກ່ລຸງຕາ ຄູບາອາຈານແລະຜູ້ອະວຸໂສຕ່າງໆ ແລ້ວພວກຫຼານທີ່ເປັນຄົນຮຸ່ນຫຼັງ ຈິ່ງພາກັນຮັກສາແລະຂະຫຍາຍຄວາມດີອັນນີ້ໄວ້ເຖີດຈົ່ງຕັ້ງໃຈຮຽນ ຮຽນນຳຄູບາອາຈານຜູ້ມີຄຸນ ຮຽນນຳບົດຮຽນ ແລະຍອດປັນຍາຂອງພີ່ນ້ອງເພື່ອນບ້ານພວກເຮົານຳດ້ວຍ.

ເມື່ອອ່ານ " ນິທານເດັ່ນຈາກອາຊີ " ນີ້ແລ້ວພວກທ່ານຈະຮູ້ວ່າບໍ່ວ່າຊາດໃດໆໃນໂລກ ກໍ່ມີສະຕິປັນຍາ ມີບົດຮຽນທີ່ດີ ແລະມີຄວາມມຸ່ງມາດປາຖະໜາໃນຊີວິດແບບດຽວກັນ ອັນນັ້ນວ່າ ເປັນບົດຮຽນດີອີກໃຫ້ແກ່ພວກທ່ານ. ຂໍໃຫ້ພວກທ່ານຈົ່ງໃຫ້ຄວາມເຄົາລົບ ປິຕາມາດາ ຄູບາອາຈານແລະເຖົ້າແກ່ຜູ້ອະວຸໂສເດີທ່ານເຮີຍ ແລ້ວພວກທ່ານຈະກາຍເປັນຄົນດີມີສັກສີແລະຄວາມຮູ້. ພ້ອມກັນນັ້ນກໍ່ໃຫ້ພວກທ່ານຮູ້ຈັກເພື່ອນທ່ານນ້ອຍດ້ວຍກັນ ບໍ່ວ່າຈະເປັນຊາດໃດ ເຜົ່າພັນໃດແລະພາສາໃດກໍ່ເຊັ່ນກັນ ແລ້ວພວກທ່ານຈະຮູ້ສຶກໃຈວ່າ ພວກທ່ານເອກອ້າງໃນຄວາມດີ ຄວາມມີມະນຸດສະທຳແລະ ຄວາມເປັນລາວທີ່ມີຄວາມສູງສົ່ງທາງຈິດໃຈອີກ.

ຈາກລຸງ : 16/2/1995.

* * * * *

# ນິທານ ອິນເດັຍ

# ຂຸນນາງ ກັບ ພີຣີວຣິດ

ແຕ່ກີ້ແຕ່ກ່ອນ ມີແມ່ໝ້າຍກັບລູກຊາຍຜູ້ໜຶ່ງ ພ້ອມກັນດຳລົງຊີວິດຢູ່ໃນເມືອງໜຶ່ງ, ຜູ້ເປັນແມ່ເຖິງເປັນເຊື້ອເຈົ້າເຄົ້າຂຸນນາງ ກໍຕາມແຕ່ ກໍທຸກຍາກທັ້ງເປັນໝ້າຍນຳອີກ. ເຮືອນຢູ່ກໍແມ່ນຕູບນ້ອຍໆ ຍັງໄດ້ແຕ່ມີດິນໜ່ອຍໜຶ່ງທີ່ສາມາດໃຊ້ເຮັດສວນປູກຜັກໝ້ ເພື່ອກິນແລະຂາຍຫາລ້ຽງລູກ.

ຂຸນນາງໝ້າຍນັ້ນ ມີຄວາມຮັກຕໍ່ລູກຊາຍຫລາຍ ທັ້ງຄອງໃຫ້ໃຫຍ່ໄວໆ ເພື່ອຈະຫາເມຍໃຫ້ ພໍຈະໄດ້ລູກໃພ້ມາຊ່ວຍເນືອເກືອ ແຮງຂອງຕົນ. ວັນໜຶ່ງລາວໄດ້ເວົ້າກັບລູກວ່າ : ປານໃດເດ ແມ່ຈິໄດ້ເຫັນເຈົ້າແຕ່ງ ເອົາໃພ້ຂຶ້ນເຮືອນ ? ປານໃດເດຈິມີໃພ້ມາເຮັດວຽກເຮືອນການຊານຊ່ວຍແມ່ນໍ ?

ສ່ວນລູກຊາຍກໍມີຄວາມຫວັງດັ່ງດຽວກັນ ທີ່ຢາກໃຫ້ແມ່ມີຄວາມສະບາຍຫາຍຄວາມລຳບາກ ປາກກໍ່ໃຫ້ບານ ຂານກໍ່ໃຫ້ໝ້ອນ, ແຕ່ມາຄິດເຖິງໂຕເອງແລ້ວຊ້ຳພັດນ້ອຍໃຈຍ້ອນຄວາມທຸກ, ຄັນຫາກມີສາວມາມັກກໍ່ຈິເອົາຫຍັງມາແຕ່ງພໍໃຫ້ເກີດເປັນຄອງ ຄອງເປັນເມຍໄດ້ນຳເພິ່ນ ? ຜູ້ເປັນແມ່ຈົ່ມເລື່ອງຢາກໄດ້ລູກໃພ້ມາຄັ້ງໃດຊາຍນັ້ນ

ກໍຍິ່ງກັງວົນນຳຄວາມທຸກຈົນຂອງເຮືອນໂຕ. ສະນັ້ນ ລາວຈຶ່ງຄິດຫາວິທີວ່າ : ບະ ! ເຮົາເປັນຜູ້ຊາຍໃຫຍ່ເສຍດາຍຕາຍເສຍລ້າ ປັນຍາຄ້າຊິບໍ່ໄດ້ຊ່ຳເມັດງາຊິເປັນຫລີ, ຄົນຫາກເຂົ້າໄປໃນເມືອງໃຫຍ່ຕັ້ງຫາເງິນ, ຄົນໄດ້ເງິນກໍ່ຮູ້ປັ້ນພຽນປັນຈ່າຍຄັກແນ່ ມັ້ນຊິບໍ່ຮັ່ງ ບໍ່ມີຈັກເທື່ອບໍ່ ! ຄິດແນວນັ້ນ ໄປໄລ່ແນວນັ້ນມາ ເປັນແນວໃດກໍຍິ່ງຂຶ້ນໃຈນຳຄວາມຄິດໂຕ. ມາເຖິງວັນໜຶ່ງລາວຈຶ່ງເອີຍເວົ້າກັບແມ່ວ່າ:

ແມ່ເຮີຍ ! ລູກຊິໄປເມືອງໃຫຍ, ໄປຫາເງິນໄດ້ ຫລາຍ ໆ ແລ້ວຈຶ່ງຊິກັບມາຫາແມ່, ຮອດຍາມນັ້ນແມ່ຫາກຊິເຫັນການແຕ່ງດອງຄອງເອົາໃພ້ມາເຮືອນນັ້ນ, ແລ້ວແມ່ຈຶ່ງຊິສວ່າງໃຈໄດ້. ຈາກນັ້ນ ຜູ້ເປັນແມ່ພັດເວົ້າ:

ໄປເຮັດຫຍັງເດລູກເຮີຍ ! ແມ່ບໍ່ໃຫ້ເຈົ້າໄປ. ແຕ່ເຈົ້າຢູ່ ກໍຍັງທຸກປານນີ້ ຄັນເຈົ້າໄປອີກແມ່ຊິເພິ່ງໃຜ, ເຈົ້າຢູ່ກໍຍັງດີກວ່າເຈົ້າຊິພາກແມ່ຕີບ ! ບໍ່ມີເຈົ້າແລ້ວ ກໍຊ່ຳກັບບໍ່ມີແນວປະເສີດໃນ ໂລກນີ້ມາສຳຫລັບແມ່ເປັນແນວນັ້ນລູກເຮີຍ !

ອ່າວ ! ຊັ້ນແມ່ພັດວ່າ ຢາກໄດ້ລູກໃພ້ຢູ່ບໍ່ແລ້ວບໍເຈົ້າ, ຢາກໄດ້ໃພ້ຕ້ອງໄດ້ແຕ່ງເອົາ, ຢາກແຕ່ງຕ້ອງມີເງິນຫລາຍ ຢາກມີເງິນຫລາຍຕ້ອງໄປຊອກ ມັນກໍເປັນແນວນັ້ນແລ້ວ ບໍ່ໃຫ້ໄປ ມັນກໍບໍ່ ເກີດແນວເວົ້າມານີ້ !

ໃນເວລາແມ່ກັບລູກເວົ້າກັນໄປໄດ້ກັນມານັ້ນ, ຢູ່ຕົ້ນໄຮເຟືອຍຂ້າງເຮືອນລາວຫັ້ນ ໄດ້ມີຜີ ຮີງຮີດໂຕໜຶ່ງ ໄດ້ຍິນແລ້ວ ຈອບຟັງ.

ແລ້ວຜີກໍພຶມພຳຂອກຜູ້ດຽວ ! ເອີ ! ດັກບັດນີ້ ໂອກາດເງິນ ໂອກາດຄຳມາຮອດແລ້ວ, ເມື່ອໃດລູກຊາຍລາວໄປແລ້ວກູຊິວາງອຸບາຍໄປຢູ່ນຳຂຸນນາງເບິ່ງ ! ເບິ່ງແລ້ວຄືຊິສະບາຍ ຊິມີຜູ້ແຕ່ງກິນ, ມີຜູ້ລົ້ມນຳ ເຮ່ ເຮ່ ! ຄືຊິສະບາຍກວ່າຢູ່ເປັນຜີຊຸງແນວນີ້.

ຮຸ່ງເຊົ້າຂອງມື້ມາ ຊາຍນັ້ນໄດ້ອຳລາແມ່, ຝ່າຍແມ່ກໍ່ເສົ້າໃຈບໍ່ໄຫ້ນ້ຳຕາກໍ່ອອກ ແຕ່ຈະບອກແນວໃດ ລູກຊາຍກໍບໍ່ຢູ່ ນຳແລ້ວ, ໂສລະໃຫ້ໄປສາ !. ຊາຍນັ້ນເລີ່ມເດີນທາງພາກຈາກຕູບນ້ອຍ ພ້ອມດ້ວຍແມ່ແລ້ວດຸ່ງເດີນເຂົ້າສູ່ເມືອງ.

ເວົ້າເຖິງຜີ ຮິງຮີດໂຕນັ້ນ ເມື່ອເຫັນຊາຍນັ້ນໄປແລ້ວ ມັນກໍ່ລີ້ຖ້າຢູ່ຈົນເຖິງຄ່ຳແລ້ວຮອດທ່ຽງຄືນມາກໍ່ລົງຈາກກົກໄຮເຟືອຍ ເລືອມຕົວໃຫ້ຄືຊາຍນັ້ນແລ້ວກໍ່ຂຶ້ນເຮືອນ. ຜີມາຮອດກໍ່ເຄາະປະຕູ ຫລາຍບາດ ຂຸນນາງໝ້າຍໄດ້ຍິນກໍຮີບລຸກມາ ແລ້ວເອີ້ນຖາມ :

" ແມ່ນໃຜມານີ້ ! ຍາມຄ່ຳຄືນປານນີ້ມາເອີ້ນມາປຸກ ເຮັດຫຍັງ ? " ຜີກໍ່ເວົ້າ : ໄຂເອົາຂ້ອຍແດ່, ຂ້ອຍນາ ! ແມ່ ລາວໄຂປະຕູອອກກໍ່ເປັນລູກຊາຍຢືນຢູ່, ແມ່ກໍຮ້ອງ ! ໂອຍລູກເອີຍ ບຸນແມ່ນເຫລືອຫລາຍ ບຸນລູກຊາຍມີເຫລືອເກົ້າໄປຄ້ານເຊົ້າກໍ ປັ່ນຕາວຄືນແຫ່ນໍ ! ແມ່ຄິດຮອດເຈົ້າຈົນໃຈຊິຫລຸດຊິຂາດຢູ່ນີ້ ! ເປັນຫຍັງເຈົ້າຈຶ່ງກັບ ຫລືເຈົ້າເປັນເຈັບຫວະ ?

ຊາຍຜີນັ້ນຕອບ : ໂອຍແມ່ ຂ້ອຍຄິດຮອດແມ່ ບໍ່ເຄີຍຈາກຈັກເທື່ອ, ຂ້ອຍຄິດຮອດແມ່ຫລາຍ ໄປບໍ່ໄດ້ອີກແລ້ວ. ໂສກັບຄືນມາຫາ

ແມ່ອີກ ! ຂ້ອຍປ່ຽນໃຈໝົດ, ຈະກັບມາຢູ່ບ້ານ, ຢູ່ນຳແມ່.

ຝ່າຍແມ່ກໍດີໃຈຫາອັນປຽບບໍ່ໄດ້ ທີ່ເຫັນລູກຊາຍກັບມາ ຈາກນັ້ນລາວກໍແຕ່ງຄົບຄົວກິນສູ່ຊາຍນັ້ນ ທັ້ງສູມໄຟອຸ່ນໃຫ້ຝີງ ດ້ວຍຄວາມອົບອຸ່ນແລະສະບາຍໃຈ. ເວົ້າເຖິງພີຣືງຣືດ ນັ້ນກໍຢູ່ເຮືອນ ນຳຂຸນນາງໝ້າຍແລະເຮັດທຸກຢ່າງດີກັບລູກຊາຍຄິງຂອງລາວ; ໃຈກໍຄິດວ່າ : ມາຢູ່ເຮືອນແນວນີ້ດີກວ່າຢູ່ກົກໄຮເພືອຍເວີຍ ! ແລະ ຖືວ່າທຸກຢ່າງໄດ້ເກີດໄດ້ເປັນດັ່ງນັ້ນປະສົງໄວ້ຄາວກ່ອນມາ.

ປີໜຶ່ງຜ່ານໄປ ລູກຊາຍຄິງຂອງ ຂຸນນາງໝ້າຍໄດ້ ກັບຄືນບ້ານ. ມາຮອດບ້ານລາວກໍຟ້າວມຸ່ງໄປຫາຕູບຂອງຕົນດ້ວຍ ຄວາມຫວັງວ່າ : ແມ່ຄົງດີໃຈທີ່ສຸດ ຄົນຫາກເຫັນຕົນມາ ທັງມີຫລາຍຢ່າງທີ່ໄດ້ມາຕ້ອນແມ່.

ລາວໄປເຄາະປະຕູຕູບ, ເມື່ອປະຕູໄຂອອກ ລາວກໍເຫັນຊາຍຜູ້ໜຶ່ງຄືກັບຕົນເອງມາໄຂປະຕູເອົາ, ແລວຊາຍຜີກໍ້ຮ້ອງຖາມວ່າ : " ນິ້ງແມ່ໃຜ ? ມາຫາໃຜ, ຕ້ອງການຫຍັງຢູ່ເຮືອນນີ້ ? "

ຄາວໄດ້ຍິນສຽງຖາມຮ້າຍກາກໆແນວນັ້ນ ນາງໝ້າຍກໍ ປີ້ລອອກມາ. ລູກຊາຍຄິງນັ້ນບເຫັນກໍຮ້ອງ ? ອີແມ່ ! ລູກມາແລວ ໆ! ລາວທັງເວົ້າທັງໄຫ້ " ຝ່າຍແມ່ກໍວ່າ : ອ້າວ ! ເຈົ້າແມ່ນໃຜ ? ມີຫຍັງມາເປັນເລື່ອງແນວນີ້ ? ຕາຍ ! ເຈົ້າຫຍັງວ່າຂ້ອຍແມ່ນແມ່ເຈົ້າ ? ກະດຽວວ່າລູກຊາຍຂ້ອຍກໍຢູ່ນີ້ ! ຂຸນເຈົ້າແມ່ນໃຜ ? ມາແຕ່ໃສຮະ ?

ເມື່ອເປັນແນວນັ້ນ ລູກຊາຍຄິງກໍ່ເວົ້າວ່າ : ຂໍຢ່າຮ້າຍ ຢ່າດ່າ ຂ້ອຍຖ້ອນ, ຂ້ອຍແມ່ນລູກຄິງເຈົ້າແທ້ງນາ ? ຂ້ອຍໄປຫາ ເງິນໄດ້ ແລ້ວກໍ່ກັບມາຫາແມ່ ! ຊຸນແມ່ບໍ່ຈື່ຫວະ? ຜູ້ຢູ່ນໍາເຈົ້າບໍ່ແມ່ນ ລູກຊາຍຄິງເຈົ້າດອກ !... ເຖິງປານນັ້ນ ຊຸນນາງໝ້າຍຍັງວ່າຊາຍນັ້ນບໍ່ແມ່ນລູກຊາຍຄິງຂອງຕົນ. ວ່າແລ້ວຊຸນນາງໝ້າຍກັບຜີ ກໍ່ຊຸກຊາຍນັ້ນອອກນອກເຮືອນ ແລ້ວອັດປະຕູຕົນກັບບາດເລີຍ !

ຈາກນັ້ນມາ ລູກຊາຍຄິງກໍ່ໄດ້ອອກຈາກຕູບນັ້ນໄປ ດ້ວຍຄວາມຢາກຮ້າຍ, ໃນໃຈກໍ່ຄິດຫາວິທີວ່າ ຊິໄປຫາໃຜມາຊ່ວຍແກ້ ເລື່ອງນີ້ໃຫ້ຕົນໄດ້. ທ້າວຊາຍນັ້ນ ຄິດຢູ່ຫລາຍວັນ ບັດແລ້ວກໍ່ຕັດສິນໃຈໄປຂໍກາບທູນພະຣາຊາຜູ້ປົກຄອງເມືອງນັ້ນ ໃຫ້ຊາບຫັງຂໍເດຊາ ປາລາມີນໍາພະອົງໃຫ້ເມດຕາ ຫາແກ້ເລື່ອງເອົາອົງຄົງມະໂນ ນັ້ນໃຫ້ ທ່ານດ້ວຍ.

ອາມາດທີ່ຮັກສາພະອົງໄດ້ພາຊາຍຜີແລະຊາຍຄົນນັ້ນເຂົ້າເຝົ້າ ແລະໄດ້ເອົາເລື່ອງລາຍແຕ່ປາຍແຕ່ຕົ້ນມາກ່າວສູ່ລາຊາຟັງ. ຝ່າຍລາຊາກໍ່ໃຫ້ຄົນໄປຕາມເອົາລູກຊາຍທັງສອງ ທີ່ເປັນຄູ່ຄວາມກັນ ມາຊ້ອງໜ້າ, ພະອົງກໍ່ຫ້າງຄາຖາຫາຄວາມສົ້ຫລາຍເລື່ອງຈົນແຕ່ເຊົ້າເທົ້າແລ້ງລາງ ບັ້ນທ້າຍກໍຕອບວ່າ : ພະອົງນີ້ ບໍ່ຊ່າງວ່າໃຜ ແມ່ນໃຜກັນແທ້ ເບິ່ງໃຜກໍ່ຄືກັນໝົດທຸກແນວ ໃຜແມ່ນລູກຊາຍຄິງຂອງຊຸນນາງໝ້າຍ ໃຜບໍ່ແມ່ນ, ຂໍໃຫ້ພວກເຈົ້າໄປຫາຜູ້ອື່ນຕາມບ້ານເມືອງໃຜມີປັນຍາອາຄົມເອົາຫາກຈະຊ່ວຍຊີ້ຊ່ວຍບັກເອົາໄດ້. ເວົ້າ ແນວ

ນັ້ນແລ້ວພະລາຊາກໍສົ່ງຊາຍທັງສອງອອກໄປຈາກໂຮງ.

ຈາກນັ້ນມາຜູ້ລູກຊາຍແທ້ໄດ້ຫຽວໄປຫາຣາຊາ ເພື່ອຂໍຄຳ ຕັດສິນໃຫ້ອີກ. ແຕ່ປານນັ້ນເຈົ້າຣາຊາກໍ່ບໍ່ສາມາດຕັດສິນໃຫ້ໄດ້.

ຢູ່ມານໜຶ່ງພາຍຫລັງທີ່ຊາຍຄົນນັ້ນໄປຫາເຈົ້າລາຊາ, ຕາມເສັ້ນທາງກັບຫາທີ່ພັກ ລາວໄດ້ພົບຊຸມເດັກນ້ອຍທີ່ພວມຫລິ້ນຢູ່ ເດີ່ນກຽງບ່ອນໜຶ່ງ. ຊາຍນັ້ນຍ່າງຜ່ານໄປໃກ້ຝູງເດັກນ້ອຍແລ້ວ ຢືນຊຶ່ງເບິ່ງການຫລິ້ນຂອງເຂົາ, ທັນໃດກໍ່ມີເດັກຜູ້ໜຶ່ງແລ່ນມາຫາ ແລ້ວຖາມ :" ອ້າຍ ! ໆ ! ເປັນຫຍັງຂ້ອຍເບິ່ງເຈົ້າຄືນາງວົມເຫງົາແທ້ ?"

ຊາຍນັ້ນກໍເອີ່ຍອອກ : " ເຫງົາແທ້ ! ເຫງົາຍ້ອນບໍ່ ມີໃຜຊ່ວຍຂ້ອຍ !" ເຮືອນຂ້ອຍໄດ້ມີຜູ້ມາປອມເປັນລູກຊາຍແລ້ວຢູ່ ຫັ້ນ, ແລ້ວແມ່ຂ້ອຍກໍເຊື່ອວ່າລາວເປັນລູກຈິງ ເລີຍໄລ່ຂ້ອຍໜີ ! ໂອ ! ໃນບົນໜ້າໂລກນີ້ຊິບໍ່ມີໃຜທີ່ມີຄວາມຍຸດຕິທຳແດ່ບໍ ? ເດັກນ້ອຍ ກໍ່ບອກວ່າ : ຊັ້ນເຈົ້າລອງໄປຫາເຈົ້າລາຊາເບິ່ງ ເພິ່ນອາດຈະຊ່ວຍເຈົ້າໄດ້ ! ຊາຍນັ້ນຕອບ ! ຂ້ອຍກໍ່ໄປຫາລາຊາມານມາ ! ເພິ່ນຊ່ວຍຫຍັງກໍ່ບໍ່ເປັນ ! ເດັກນ້ອຍວ່າຂຶ້ນ ! ບໍ່ ! ບໍ່ແມ່ນລາຊານັ້ນ ໄປຫາລາຊາຂອງເຮົານີ້ນາ ! ຊາຍນັ້ນຕອບ : ຊຸມເຈົ້າລາຊາ ຢູ່ໃສ່ອີກ, ດຽວວ່າດິນແດນແຜ່ນນີ້ມີແຕ່ລາຊາເຈົ້າດຽວເທົ່ານັ້ນບໍ່ແມ່ນຫວະ ?

ເອົາ ! ຊັ້ນມານີ້ດູ ! ເດັກນ້ອຍບອກແລ້ວວ່າຕໍ່ : ຂ້ອຍບໍ່

ຕອບແລະບໍ່ລໍຖ້າໃຫ້ຟັງຄຳຕອບຫຍັງຍາກ, ໄປນຳຂ້ອຍນີ້ ! ວ່າ ແລ້ວເດັກຄົນນັ້ນກໍ່ຈູງແຂນຊາຍນັ້ນໄປຫາຊຸມເດັກນ້ອຍທີ່ພວມ ຫຼິ້ນມ່ວນກັນຕາມເດີມ. ໄປຮອດແລ້ວເດັກຜູ້ນັ້ນກໍ່ນັ່ງລົງເທິງໂພນນ້ອຍ. ຈາກນັ້ນລາວກໍ່ກົ້ມຫົວລົງ ສະແດງຄວາມຄຳນັບຊາຍນັ້ນ ແລ້ວກ່າວອອກວ່າ :

ປາລາມີເຈົ້າຊາຍ, ເມື່ອກີ້ນີ້ໄດ້ຊາບວ່າຊາຍມີເລື່ອງ ເຮັ່ງຮ້ອນຂ້ອນໃຈຄືໄຟລວກ, ໃຫ້ຊາຍກ່າວຄວາມເປັນມາຈາກຄວາມເຄັ່ງແຄ້ນອອກເຖີດ ! ກະລຸນາເດັກເຮົາທຸກຄົນຈົ່ງມາຟັງ ແລ້ວກຽມປັນຍາອາຄົມຊ່ວຍໃຫ້ຄວາມຍຸດຕິທຳແກ່ຊາຍນັ້ນດ້ວຍ ! ເມື່ອເດັກຜູ້ທີ່ພາຊາຍນັ້ນມາ ໄດ້ເວົ້າຄວາມນັ້ນສຸດລົງ, ຊາຍນັ້ນກໍ່ສະແດງຄວາມຂອບໃຈຕອບແລ້ວກ່າວວ່າ :

" ນີ້ບໍ່ແມ່ນເລື່ອງຕະຫຼົກ, ເລື່ອງນີ້ມັນໄດ້ເກີດກັບຊີວິດແລະເປັນເລື່ອງຮ້າຍເຖິງແກ່ຊີວິດຂອງຂ້ອຍກໍ່ເປັນໄດ້. ເດັກຜູ້ທີ່ ນັ່ງຢູ່ໂພນເວົ້າຂຶ້ນ !" ບໍ່ແມ່ນພວກຂ້ອຍຖືເປັນເລື່ອງຕະຫຼົກ, ພວກຂ້ອຍຕ້ອງການຊ່ວຍເຈົ້າອີຫຼີ ຖ້າຫາກເປັນແນວນັ້ນແທ້ !

ຊາຍນັ້ນ ໄດ້ເອີ່ຍສຽງດັງຂຶ້ນດ້ວຍວາດທີ່ຫນ້າສົງສານ, ຊຸມເດັກນ້ອຍຍິ້ມແລ້ວກໍ່ບໍ່ມີໃຜຫົວ, ມີແຕ່ຄອຍຟັງຊາຍນັ້ນທີ່ເລົ່າ ທຸກສິ່ງຢ່າງອັນໄດ້ເກີດກັບລາວເອງສູ່ຊຸມເດັກນ້ອຍຟັງ. ບັດແລ້ວໆເດັກຜູ້ຫນຶ່ງກ່າວວ່າ :

" ຂ້ອຍອາສາແກ້ບັນຫາຂອງເຈົ້າ !" ແຕ່ວ່າຍັງເງື່ອນ ໄຂ

ຫນຶ່ງທີ່ຂ້ອຍຢາກວາງອອກ ! ຊາຍນັ້ນຖາມ : ມີເງື່ອນໄຂ ອັນໃດ ເວົ້າໃຫ້ຟັງດູ ! ເດັກນັ້ນຕອບ : " ມື້ອື່ນເຊົ້າຂ້ອຍຈະໃຫ້ຄຳຕັດສິນ ເລື່ອງແກ່ເຈົ້າ ! ແຕ່ວ່າເວລາຂ້ອຍຈະຕັດສິນນັ້ນບໍ່ໃຫ້ ເຈົ້າລາຊາ ກັບເສນາ ຂ້າໃຊ້ພ້ອມໄພ່ຟ້າປະຊາຊົນ ໃຫ້ມາເຕົ້າຢູ່ທີ່ນີ້ກ່ອນ ຊາຍນັ້ນເວົ້າຂຶ້ນ ! ຊັ້ນຊິໃຫ້ຂ້ອຍເຮັດແນວໃດເພື່ອຮຽກເອົາເຈົ້າມາໄດ້ ຄັນຂ້ອຍສະເຫນີໃຫ້ເຈົ້າລາຊາມາຟັງຄວາມຕັດສິນ ເລື່ອງນີ້ນຳພວກເຈົ້າ ຢ້ານວ່າຂ້ອຍຈະຖືກຕັດຄໍຍ້ອນກໍ່ເປັນໄດ້ ! ເຖິງປານນັ້ນເດັກນ້ອຍກໍບອກໃຫ້ຊາຍນັ້ນຕ້ອງກ້າຫານ, ມີຄວາມກ້າຫານຈຶ່ງ ສາມາດແກ້ບັນຫາອັນຍາກໄດ້.

ຊາຍນັ້ນ ມີຄວາມກັງວົນຢ່າງບໍ່ເຄີຍມີມາ ແຕ່ກໍ່ຕ້ອງໂສໄດ້ໂສເສຍ ໄປຫາເຈົ້າລາຊາແລ້ວກາບທູນເຈົ້າລາຊາ ຕາມທີ່ເດັກ ທັງຫລາຍບອກກ່າວມານັ້ນ.

ເມື່ອຊາຍນັ້ນເຂົ້າສູ່ເຈົ້າລາຊາ ແລ້ວກ່າວຄຳຮ້ອງຂໍ ດັ່ງກ່າວມານັ້ນ ຝ່າຍລາຊາກໍມີຄວາມສົມພະໄທຈົນໄຂສຽງຫົວມາ ເອິອກໆ ແລ້ວກໍຮຽກເສນາປະຊາລາດ ປະກາດກັນໄປໂຮມຢູ່ເດີ່ນນ້ອຍນັ້ນໃນມື້ອື່ນເຊົ້າຢ່າງຄຶບຫນ້າ. ຊາຍນັ້ນເຫັນເຈົ້າລາຊາ ບໍຮ້າຍບໍເຂກຊ້ຳ ເຫັນວ່າພະອົງໄດ້ສິ້ນໃຈຢາກຮູ້ຢາກເຫັນການຕັດສິນຄວາມກັນໃນກໍລະນີ້ ແລ້ວຊາຍນັ້ນຈິດໃຈກໍຊື່ນ ມີນຕາກໍແຈ້ງຂຶ້ນມາ ຍາມກ່າວຈາກຄວາມໃດກໍມີແຕ່ຍິ້ມ ຍ້ອນຊິເຫັນເລື່ອງຈິງແລ້ວ ແຮ້ວຊິລົ້ມພ້ອມ.

ມື້ຕໍ່ມາເຈົ້າລາຊາທັງອາມາດ ຕະຫລອດຮອດລາດຊະດອນພາ

ກັນຕື່ນນອນແຕ່ເດິກໆ ແລ້ວພາກັນໄຫລຫລັ່ງໄປຍັງເດີ່ນແຫ່ງນັ້ນ ແຕ່ເຊົ້າໆ, ຜູ້ຫມານມົກທົ່ວຊຸມນາງໝາຍ, ລູກຊາຍຄົງຜູ້ເຈົ້າ ຂອງເລື່ອງແລະລູກຊາຍຜີ ອົງອິດມັ້ນເຂົ້າຮ່ວມນຳຢ່າງຄັບໜ້າ ໄຂ່ວຕາເພື່ອເບິ່ງການຕັດສິນຂອງເດັກຄົນທີ່ຖືວເປັນລາຊານັ້ນວ່າ ຈະສຳເລັດແທ້ຫລືຈະພາດພັ້ງໄປ. ເມື່ອເຖິງຍາມແລ້ວ ເດັກຄົນນັ້ນ ກໍກ້ມຄຳນັບເຈົ້າລາຊາ ຂາບກະລຸນາ ປະຊາກອນຢ່າງຄັບໄຂ່ວຕາແລ້ວກໍເລີ່ມນັ່ງລົງທີ່ໂພນນ້ອຍ.

ໃນບໍ່ນານ ເຈົ້າລາຊາເວົ້າຂຶ້ນວ່າ : ຂ້ອຍມາທີ່ນີ້ໃນເຊົ້ານີ້ແມ່ນມາຕາມຄຳຮຽກຮ້ອງຂອງເຈົ້າ ເພື່ອເບິ່ງການຕັດສິນ ເລື່ອງແລະເບິ່ງຄວາມປີຊາ ອາຄົມຂອງເຈົ້າ ວ່າຈິ່ງເຮັດແນວໃດກັນແທ້ ! ແຕ່ຢ່າລືມເນີ ! ຄັນເຈົ້າຫາກຕັດສິນພາດໄປ ບອກວ່າໂທດອັນໜັກໜ່ວງຈິ່ງມາພານເຈົ້າຢ່າງແນ່ນອນ ! ຈັ້ນລະເນີ ນ້ອຍເດີ ! ພະຍາເວົ້າຊ້ຳຄວາມນີ້ດ້ວຍສຽງຂຶງຂັງ.

ເດັກນັ້ນ ກໍຕອບວ່າ : ໂດຍ ! ເຈົ້າລາຊາ ຜູ້ຂ້າຈະ ເຮັດທຸກຢ່າງ !

ສ່ວນປະຊາຊົນຕ່າງກໍຢືນຈ້ອງດ້ວຍຄວາມມິດງຽບ ລໍຖ້າເບິ່ງເຫດການໃດຈະເກີດຂຶ້ນ, ສ່ວນເດັກນ້ອຍຜູ້ນັ້ນກໍຄິດຫາແຕ່ຄວາມຈະແຈກຈ່າຍປີຊາອາຄົມທີ່ຊອກຫາຄວາມຍຸດຕິທຳມາໃຫ້ຄົນຮູ້ນຳ ເຊິ່ງເວລານັ້ນຕົນພວມຢືນຢູ່ຕໍ່ໜ້າຜູ້ທີ່ມີອຳນາດວາດໃຫຍ່ໃນແດນແຄວ້ນນັ້ນ

ທຳອິດເດັກນັ້ນ ໄດ້ຖາມເອົາກ້ອງແກ້ວຄໍກ້ວອັນໜຶ່ງ ໄດ້ແລ້ວ

ກໍເອົາມາວາງໄວ້ຕໍ່ໜ້າຂອງລາວ ພ້ອມກັບເວົ້າຂຶ້ນບາດແຮງ !

ລະຫວ່າງລູກຊາຍສອງຄົນນີ້, ໃຜເປັນລູກຂອງຂຸນນາງໝ້າຍແທ້ ຈຶ່ງເອົາໄປໃນແກ້ວນີ້ ! ຄົນເອົາໄດ້ແລ້ວຕໍ່ໄປຈະໄດ້ ເປັນເຈົ້າຂອງຕູບນ້ອຍຫລັງນັ້ນພ້ອມ !

ພໍແຕ່ເດັກເວົ້າຄວາມນີ້ສຸດລົງ, ລູກຊາຍແທ້ກໍໄດ້ແຕ່ຫລຽວພຸ້ນຫລຽວພີ້ຕາກົ້ມເດ ໜ້າກໍ່ຊີດຈົນເລືອດບໍ່ມີ ຍ້ອນຈົນປັນຍາ ! ສ່ວນລູກຊາຍຜີກໍ່ປີ້ນນ້ອຍລົງ, ນ້ອຍລົງແລ້ວເລື່ອມເປັນແມງກ້າງປາ ບິນລິບເຂົ້າໃນ ກວດແກ້ວ ຢ່າງສະບາຍ.

ເມື່ອໄດ້ໂອກາດເດັກນ້ອຍຜູ້ນັ້ນກໍ່ອັດປາກແກ້ວປິບປັບ ຕໍ່ຈາກນັ້ນລາວກໍບອກໃຫ້ຜູ້ລູກຊາຍແທ້ເອົາກວດແກ້ວໃສ່ລູກຊາຍຜີນັ້ນໄປຖິ້ມລົງທະເລໃຫ້ຈົມຕາຍສາ !

ເມື່ອເຣັດແນວນັ້ນສຳເລັດຜົນໄດ້ ເດັກນ້ອຍນັ້ນເວົ້າໃຫ້ລາຊາຟັງວ່າ : ຜູ້ມາປອມເປັນລູກຊາຍແທ້ນັ້ນຊາຍທຸກຈົນຜູ້ນັ້ນແມ່ນ ຜີຮິງຣິດ ຜູ້ທີ່ເປັນລູກຊາຍແທ້ນັ້ນແມ່ນຜູ້ທີ່ບໍ່ສາມາດເລື່ອນຕົວເປັນຫຍັງໄດ້ ! ໃຫ້ຂຸນນາງໝ້າຍຮັບເອົາຊາຍນີ້ໄປຢູ່ນຳດ້ວຍເຖີດ.

ຝ່າຍເຈົ້າລາຊາໄດ້ຮູ້ແລະເຫັນແນວນັ້ນກໍ່ງຶດງົງ ຈຶ່ງຖາມວ່າ : ນ້ອຍເບື້ອງເຈົ້າເປັນເດັກນ້ອຍໆອາຍຸອ່ອນໆ ແຕ່ເປັນຫຍັງຈຶ່ງມີຄວາມສະຫລາດ, ມີປັນຍາອາຄົມປານນີ້ ? ເດັກນັ້ນຕອບວ່າ : ມື້ເທື່ອໜຶ່ງຂ້ອຍໄດ້ຈູງງົວມາລ້າມກິນຫຍ້າທີ່ນີ້ ກໍເລີຍພົບໂພນນ້ອຍນີ້, ພົບໂພນນີ້ກໍ່ລອງໄປນັ່ງເບິ່ງແລະນັດເປັນບ່ອນຫລິ້ນຂອງຂຸມເດັກນ້ອຍ ,

ພວກເຂົາພາກັນລອງນັ່ງເບິ່ງໂພນນັ້ນທັນໃດ ພະຫຍາປັນຍາ ກໍ່ຫລັ່ງໄຫລເຂົ້າມາສູ່ຕົນຕົວ. ແລ້ວກໍ່ສາມາດຕັດສິນບັນຫາຕ່າງໆໄດ້ພ້ອມ.

ວ່າແລ້ວດັ່ງນັ້ນກໍເຊີນໃຫ້ເຈົ້າລາຊາຂຶ້ນໄປນັ່ງເທິງໂພນນ້ອຍນັ້ນ ບາງທີກໍ່ອາດເປັນໄປດັ່ງຄຳວ່ານ. ສ່ວນຕົວຂ້ອຍບໍ່ມີຄວາມ ສາມາດສະຫລາດສະຫລຽວຫຍັງ, ອຳນາດທັງມວນແມ່ນຢູ່ໃນພົນ ໂພນນ້ອຍນີ້ !

ຈາກນັ້ນ ເຈົ້າລາຊາກໍ່ສັ່ງຄົນຂຸດເບິ່ງພົນຂອງໂພນດິນນັ້ນທັນທີ ເມື່ອເຂົາເຈົ້າຂຸດລົງໄປບໍ່ເທົ່າໃດກໍພໍ້ແຖນເພັດພອຍທີ່ເຫລືອມງາມ ຍິບຍັບຫນຶ່ງອັນ ພ້ອມກັບມີຮ່າງສາວງາມໆ 32 ຄົນ ຍືນເອົາມືໂຈມແຖນເພັດພອຍນັ້ນຢູ່. ເຈົ້າລາຊາເຫັນກໍຕົກສະເງີ້ດິນເຕີບ ຈາກນັ້ນລາຊາກໍ່ຄ່ອຍຍ່າງອ້ອມເບິ່ງແຖນ ກໍ່ຍ່າງເບິ່ງໄດ້ຮອບຫນຶ່ງແລ້ວ ກໍ່ຊິລອງຂຶ້ນໄປນັ່ງເທິງແຖນນັ້ນເບິ່ງ. ທັນໃດນັ້ນຜູ້ສາວຫນຶ່ງໃນສາມສິບສອງຄົນນັ້ນໄດ້ເວົ້າອອກວ່າ :" ຢຸດກ່ອນ !" ແຖນນີ້ເປັນ ແຖນພອຍປະເສີດຂອງເຈົ້າລາຊາ ວິກຣາມະ ກ່ອນເຈົ້າຈະຂຶ້ນ ນັ່ງນີ້ເຈົ້າຕ້ອງຮຽນຄວາມຮູ້ແລະມີປັນຍາອາຄົມແທ້ໆ ຈຶ່ງໃຫ້ນັ່ງໄດ້ ! ຖ້າບໍ່ທັນຮູ້ເລື່ອງເຈົ້າລາຊາ ວິກຣາມະ ເທື່ອຈົ່ງສະມະທິຕົວດີງ ແລ້ວຊິເລົ່າໃຫ້ຟັງດຽວນີ້ !

ພໍສາວນັ້ນເວົ້າສຸດຄວາມ ສາວທັງ 32 ຄົນ ກໍ່ພັດປ່ຽນ ກັນເລົ່າເລື່ອງພະເຈົ້າລາຊາ ວິກຣາມະ ຈົນໄຂ່ວຄົນ ເມື່ອເລົ່າເລື່ອງນັ້ນສຸດແລ້ວ ເຈົ້າລາຊາກໍ່ວ່າຈະຂຶ້ນໄປນັ່ງເທິງແຖນເພັດພອຍ ແຕ່

ແລ້ວແທ່ນນັ້ນກໍເລື່ອນສູງຂຶ້ນໆ ຈາກໜ້າດິນແລ້ວກໍທະຍານຂຶ້ນຫາຍວັບ ເຂົ້າສູ່ເວຫາໄປຢ່າງບໍ່ຮູ້ທິບເລີຍ.



# ນິທານ ຟີລິບປິນ

# ສາມອ້າຍນ້ອງກັບ ຄວາມຝັນ

ຕັ້ງແຕ່ນານຟ້ານານປີ ຈົນບໍ່ມີໃຜຈື່ຍາມໄດ້ ຄາວນັ້ນ ຍັງມີຜູ້ຫນຶ່ງຊື່ວ່າ : ນາງແມ່ ອານາ ພ້ອມກັບຜົວ ທີ່ເປັນຊາວນາ, ພວກເພິ່ນເກີດແລະໃຫຍ່ຢູ່ບ້ານນັ້ນດ້ວຍການທຳນາຫາເຂົ້າມາລ້ຽງຊີບ ຢູ່ມານານປີ ພວກເພິ່ນກໍ່ໄດ້ລູກເຊິ່ງເປັນຜູ້ຊາຍໝົດທັງ 3 ຄົນ, ເມື່ອໃຫຍ່ຂຶ້ນມາລູກທັງສາມກໍ່ໄດ້ເຮັດນານຳພໍ່ແມ່ໂລດ, ແຕ່ມີຄວາມແປກປະຫລາດນຳເພາະວ່າລູກຊາຍທັງສາມຂອງອານາພັດ ບໍ່ຊື່ນໃຈ ໄວ້ເບື່ອນຳການເຮັດນາ, ທັງບໍ່ມັກທີ່ຈະກາຍເປັນຊາວນານຳອີກ. ຢູ່ຕໍ່ມາພໍ່ຂອງຊາຍທັງສາມຕາຍໄປ. ແມ່ອານາກໍ່ກາຍເປັນໝ້າຍ ເວົ້າຮອດທົ່ງນາຕາກາກໍ່ເສົ້າໝອງຄອງແຫ້ງນ້ຳຫ້ຽນ, ລູກຊາຍທັງສາມກໍ່ບໍ່ເອົາຫົວຊາຕາໂຕງນຳວຽກຊຸມນັ້ນອີກ ຜູ້ເປັນແມ່ຈຶ່ງຮຽກລູກ ທັງສາມມາແລ້ວຖາມວ່າ : ລູກທັງສາມແມ່ນໃຜບໍ່ຊິສືບຕໍ່ເຮັດນາພາສາງເໝືອງຮາງກໍ່ໃຫ້ມີປູປານາເຮືອກໃຫ້ມີເຂົ້າ ດັ່ງພໍ່ເຈົ້າໄດ້ປູກ ໄດ້ກ່ຽວຜ່ານມາ ?

ເມື່ອຜູ້ເປັນແມ່ເວົ້າສຸດຄວາມຍາມໃດ ລູກຊາຍກໍ່ຕອບ ຊອງໆ ກັນຂຶ້ນ !" ບ໋ະ ! ເວົ້າເລື່ອງເຮັດນານີ້ ຄົວບໍ່ເຫັນມີໃຜ ຊິຮັ່ງມີ

ດີໄດ້, ບໍ່ໄຣ້ສິນບັດ ບໍ່ລັດເງິນຄຳເອີ້ຍ !" ລູກຜູ້ທີ່ສອງ ກໍ່ສອຍຄວາມເຫັນ : ເຮັດນາ ແມ່ນວຽກງ່າຍຫວະ ? ຂອຍວ່າເປັນ ວຽກໜັກດີ !" ຜູ້ຕໍ່ໄປພັດເວົ້າຂຶ້ນ "ຜົນໄດ້ມາມັນໜ້ອຍທີ່ສຸດ ຄັນທຽບໃສ່ເວລາທີ່ທຸ່ມເທໃສ່ກັບວຽກນ້ຳວຽກນາ !" ແລ້ວຜູ້ທີ່ໜຶ່ງ ກໍ່ສອຍໆກັນອີກ :" ເລື່ອງດິນເລື່ອງນານັ້ນເປັນວຽກຍາກບໍ່ຮູ້ແລ້ວເປັນມາ !" ແລ້ວງລູກຊາຍຫລ້າພັດເວົ້າຊ້ຳອີກ :" ຄາວໃດຟ້າແລ້ງເຂົ້າກໍ່ຕາຍ, ຄັນຝົນຫລາຍນ້ຳມາກເຂົ້າກໍ່ຕາຍດັບພັນໂລດເປັນແຕ່ແນວອັບແນວຊ້ຳ !

ລູກທັງສາມເວົ້າຫຍັງກໍ່ເວົ້າແນວດຽວກັນໝົດ, ຜູ້ເປັນແມ່ຍິນແລ້ວກໍ່ຄິດຮູ້ໂລດວ່າ ລູກທັງສາມນັ້ນບໍ່ຫ່ວງໃຍນຳການເຮັດນາ ຫາເຂົ້າ, ເວົ້າເລື່ອງນາເທື່ອໃດ ເຂົາກໍ່ເຮັດແບບເອົາຫູໄປນາເອົາຕາໄປໄຮ່, ຮູ້ວ່າເປັນແນວນັ້ນແລ້ວ ອານາກໍ່ຈຳເປັນໄດ້ ແບກຫາບການເຮັດນານັ້ນເປັນຂອງໂຕຜູ້ດຽວ.

ເວົ້າເຖິງຊາຍທັງສາມແຕ່ນັ້ນມາ ກໍ່ຫາທີ່ທ່ຽວເລາະໄປ ຈາກບ້ານນີ້ຫາບ້ານອື່ນໄປເລື່ອຍໆ, ການທ່ຽວນັ້ນແມ່ນເຂົາທ່ຽວ ສະແຫວງຫາສິ່ງໃດໜຶ່ງ ເພື່ອໄດ້ມາໃຫ້ຢ້າວເຮືອນ, ຢາກໃຫ້ແມ່ຕື່ນພົ້ນຈາກຄວາມກາກກຳທຳເຂັນດ້ວຍວຽກໄຮ່ການນາ ແລ້ວທັງແມ່ທັງອ້າຍນ້ອງໂຕໄດ້ສຸກຂຶມວັນນະ ເຂົາທັງທ່ຽວທັງຫາແນວນັ້ນໄປ ຕາມຄວາມຝັນແນວນັ້ນ.

ແລ້ວມື້ໜຶ່ງພາຍຫລັງທີ່ກິນເຂົ້າຈ້າວຫອມກັບອ່ອມປ່າ ແຊບໆ

ແລ້ວແມ່ໄດ້ເວົ້າກັບລູກທັງສາມອີກວ່າ : " ພວກລູກທັງສາມເອີຍ ! ແມ່ນເຖົ້າແກ່ແລ້ວ, ຍໍແຄ່ງບໍ່ຢາກມາຍໍຂາບໍ່ຢາກຄອງຄືເກົ່າ ຄາວຫລັງແລ້ວເນີ ! ນັບແຕ່ພວກລູກບໍ່ຢາກສືບນຳວຽກໄຮການນາ ບໍ່ຈາເຖິງຊິລ້ຽງຕົນປູກເຂົ້ານານ ແມ່ກໍ່ຈຸບຂະຫນາບ ຂາບເວນຫຍັງອີກໃສ່ພວກລູກ, ແມ່ນຊ້ຳຄິດວ່າ : " ໃຫ້ພວກລູກທ່ຽວໄປຫາ ຫລາຍບ້ານຜ່ານໄປຫລາຍເມືອງທົ່ວໂລກນສາ ! ໄປທ່ຽວຊອກແນວປະເສີດໃຫ້ບັງເກີດເປັນໂຊກຈົ່ງກັບພວກເຈົ້າ ! ມື້ຫນ້ານອອກໄປ, ໃຫ້ໄປໄດ້ 7 ປີຖວນຈົ່ງກັບມາຫາແມ່, ບໍ່ດົນນັ້ນຈິ່ງເບິ່ງວ່າ ໃຜໄດ້ ໃຜບໍ່ໄດ້ຫຍັງ ! ແມ່ຈິ່ງວ່າແນວນັ້ນເປັນຄວາມແຈ່ງຄວາມສຸດສານຳພວກລູກສາມັ້ນຈົ່ມນັ້ນໄດ້ບໍ່ເລື່ອງບໍ່ຢາກເຮັດໄຮ່ໄຖນານ ! "

ລູກທັງສາມຍິນແມ່ເວົ້າແນວນັ້ນ ຊ້ຳພັດເກີດຄວາມຄອຍໃຈນຳແມ່ ! ແຕ່ແນວໃດກໍ່ຢ່າຂອງວ່າພວກຕົນໄດ້ເວົ້າໄດ້ສູ້ສີກັບແມ່ແລ້ວກໍ່ຕ້ອງໄດ້ເດີນໄປຕາມຄວາມແມ່ບອກນັ້ນເບິ່ງ. ມຕໍ່ມາຊາຍທັງສາມກໍ່ເລີ່ມກ່າວຄຳລາຈາຄຳພາກຈາກແມ່ໄປ ແລ້ວກໍ່ເດີນໆໄປສູ່ ແຫ່ງນແຫ່ງຫນ້າຜ່ານຮ້ອຍປ່າຜ່າຮ້ອຍເມືອງໄປ.

ຊາຍທັງສາມໄປຕາມໄປກໍ່ເຖິງທາງຫລາຍແຍກບ່ອນຫນຶ່ງແລ້ວອ້າຍຜູ້ກົກໄດ້ບອກໃຫ້ທຸກຄົນຢຸດຢູ່ທີ່ນັ້ນຈັກບຶດຈັກຄາວ ຈາກນັ້ນກໍ່ກ່າວອອກວ່າ : ແຕ່ນໄປພວກເຮົາໃຫ້ແຍກກັນໄປຄົນລະທິດລະທາງຮອດປີທີ່ 7 ແລ້ວທຸກຄົນໃຫ້ມາແລະຖືເອົານີ້ເປັນຈຸດນັດພົບກັນກ່ອນທີ່ຈະຄືນເມືອພົບກັບແມ່ຂອງພວກເຮົາ " ເວົ້າແລ້ວຜູ້ເປັນອ້າຍ ກໍ່ແຍກ

ທາງເດີນຈາກ 2 ອ້າຍນ້ອງໄປ, ຢູ່ຕໍ່ມາເຖິງລະດູອົບອຸ່ນສອງອ້າຍນ້ອງນັ້ນກໍແຍກກັນໄປທາງໃຜທາງມັນອີກ.

ແຕ່ຄາວໃດໆມາຢູ່ຟີລິບປິນພຽງ 2 ລະດູ ພັດປ່ຽນກັນໃນປີ, ເຊັ່ນ : ລະດູແລ້ງ ແລະລະດູຝົນ, 2 ລະດູນີ້ໄດ້ພັດປ່ຽນກັນໄປມາຢ່າງໄວປານນໍ້າໄຫລຫາດ, ບໍ່ນານພຽງໃດຄວາມອົບອຸ່ນຂອງຕົ້ນລະດູແລ້ງປີທີ່ 7 ກໍວຽນມາ. ທັງສາມອ້າຍນ້ອງທີ່ແຈກຢາຍກັນຢູ່ຄົນລະແຫ່ງຕ່າງກໍນັບມື້ໄລວັນ ຢ້ານຕົນຊິບໍ່ທັນໄປພົບຫນ້າອ້າຍກັບນ້ອງເຖິງຍາມນັດຫມາຍມາເມື່ອໃດ 3 ອ້າຍນ້ອງກໍມາຈອບກັນທີ່ທາງ ຫລາຍແຍກແຫ່ງນັ້ນ. ພົບກັນບັ້ນນີ້ໃຜກໍໃຫຍ່ກ້າຫນ້າເຕັມ ທັງມີເລື່ອງຕ່າງກັນເວົ້າອ້າງສູ້ກັນຟັງບໍ່ເຫືອດ.

ຜູ້ອ້າຍຊື່ວ່າ ຕາຊິໂອ ໄດ້ໄປຮຽນເອົາ " ສິລະປະແຕ່ງແກ້ວສ່ອງວິເສດ " ມາຢ່າງເຕັມເຕີມຄວາມສາມາດ. ຊາຍຜູ້ທີ່ສອງຊື່ວ່າບິນໂດອີ ຮຽນໄດ້ວິຊາ " ສ້າງເຮືອງາມບໍ່ໃຊ້ຈັກແຕ່ຂີ່ກັບຖ້າພາຍ " ວິຊານີ້ແມ່ນລັກຮຽນລັກຮູ້ມາໄດ້ຄາວທີ່ໄປຫາເຮັດວຽກຢູ່ ອູ່ເຮືອແຫ່ງຫນຶ່ງອັນບ່ອນລັບລີ້ ເມື່ອອອກມາແລ້ວໂລດບໍ່ຈື່ວ່າແມ່ນຢູ່ບ່ອນໃດເລີຍ. ເວົ້າເຖິງນ້ອງຫລ້າຊື່ : ກາສາຕິ ຊໍ້າຮຽນໄດ້ວິຊາ " ລັກເອົາສິ່ງຂອງຢູ່ບ່ອນມີຝູງຄົນອ້ອມແຫນ້ນ " ວິຊານີ້ໃຊ້ໄດ້ໃນບ່ອນມີຄົນຫລາຍ, ຖ້າບໍ່ມີໃຜເຫັນແມ່ນລັກບໍ່ເປັນແຫງ.

ຊາຍທັງສາມໄດ້ເດີນຄືນບ້ານເດີມ, ເພື່ອຄືນບ້ານແລະພົບກັບແມ່ຄືນອີກ ຝ່າຍແມ່ກໍດີໃຈຈົນໄຫ້ບໍ່ດັງແຕ່ນໍ້າຕາພັງຊະຍັງ ຍ້ອນຄວາມ

ຍິນທຸກແດ່ຕົນກັນ. ຄາວນັ້ນຫນ້າຕາແມ່ກໍແຫ້ວຍານ ສຽງກ່າວຂານກໍ່ສັ່ນ ເຍືອທັງບໍ່ແຜ້ອີກແລ້ວຍ້ອນ 7 ປີຜ່ານໄປນັ້ນກໍ່ເປັນ 7 ປີທີ່ແມ່ອານາ ໄດ້ຕາກແດດຍອນຝົນ ຂຸດກິນດິນນາແຕ່ຜູ້ດຽວ, ເຫັນລູກທັງ 3 ກັບ ມາພ້ອມກັນແນວນັ້ນກໍປຽບດັ່ງບຸນມີເຫລືອຫົວ ທຸກໃນຕົວກໍ່ຫາຍ, ໃຈກໍ່ ມາຍຄວາມໂສກລົງໄດ້.

ແມ່ອານາກັບລູກຊາຍທັງສາມຢູ່ນຳກັນໄດ້ບໍ່ສາມວັນຟັງໄກ່ຂັນ ຍັງບໍ່ທັນສຸດບາດ ກໍ່ມີຄົນຫນຶ່ງມາທີ່ບ້ານແຫ່ງນັ້ນ, ຜູ້ທີ່ມາແມ່ນຄົນສົ່ງ ຂ່າວປ່າວເລື່ອງຈາກວັງເຈົ້າຊີວິດ, ເມື່ອມາຮອດບ້ານນັ້ນກໍ່ມີເລື່ອງ ສຳຄັນປະກາດອອກວ່າ : ນາງອ່ອນງາມລູກສາວເຈົ້າຊີວິດຂອງເຮົາ ຊື່ນາງ : ເປີລຕາ ແກ່ນຟ້າ ຫ່ອນສະເຫນ ໄດ້ມີຜູ້ມາລັກພາຕົວຫນີ ໄປ. ຕໍ່ມາກໍ່ຮູ້ວ່າຜູ້ລັກພາຫນີແມ່ນຜີພໍ່ມົດ, ດຽວນີ້ບໍ່ມີໃຜຮູ້ວ່າ ພໍ່ມົດ ໄດ້ພາສາວນັ້ນໄປຮອດແຫ່ງໃດ, ຈັກເປັນຈັກຕາຍແນວໃດກໍ່ບໍ່ຊາບ. ອັນເປັນເລື່ອງຫນັກຫນາຈົນຊິຫາທາງແທນກໍ່ບໍ່ໄດ້, ຄັນຊິໄຫ້ລາງກໍ່ ບໍ່ຕົນທາງ ດັ່ງນັ້ນເຈົ້າຊີວິດຈຶ່ງປະກາດເຖິງໄພ່ຟ້າ ລາດຊະດອນທົ່ວ ໄປວ່າ : ຄັນມີຜູ້ຊ່າງຊອກຊ່າງນຳເອົາລູກສາວນັ້ນຄືນມາໄດ້ ດ້ວຍ ຄວາມປອດໄພ, ທັງຫາໄດ້ໄວ້ດ້ານມັ້ນແຮງຄັກ ແລ້ວຊິມອບລູກ ສາວ ນັ້ນໃຫ້ເປັນເມຍເລີຍ ຄັນຫາກແມ່ນຜູ້ຊາຍບ່າວ ຫລືບໍ່ຊັ້ນຢາກໄດ້ອັນ ໃດກໍ່ຊິແບ່ງປັນຢ່າງທ່ຳຊອບນຳແລ ! ແລ້ວຍັງຊິຍົກຍ່ອງເປັນໄຊຊະ ນະອັນມະຫັດສະຈັນຂອງເຈົ້າມະຫາຊີວິດນຳອີກ.

ຂ່າວນີ້ໄດ້ມາຮອດ 3 ຊາຍລູກ ຂອງອານາເອົາຄິດວ່າ :

ນີ້ເປັນໂອກາດດີທີ່ເຂົາຈະໄດ້ສະແດງວິຊາທີ່ໄດ້ຮຽນມາເພື່ອ ແລກເອົາສິ່ງປະເສີດໃດໜຶ່ງອີກມາໃຫ້ແມ່ຂອງຕົນ.

ຜູ້ອ້າຍກົກຊື່ : ຕາຊິໂອ ກ່າວວ່າ : ຂ້ອຍໄດ້ເອົາແກ້ວສ່ອງວິເສດໜຶ່ງມານຳ, ຂ້ອຍໃຊ້ແກ້ວນັ້ນສ່ອງເບິ່ງແລ້ວສາມາດ ເຫັນທຸກຢ່າງທີ່ປະຈັກໃນຕາຂອງຄົນ, ເຫັນແນ່ນອນແລ້ວຂ້ອຍສາມາດ ຈະຄົ້ນຫາລູກສາວຂອງເຈົ້າຊີວິດນັ້ນພ້ອມຖືກຜີພົມດີໃດເອົາໄປຂັງໄວ້ !

ຈາກນັ້ນຊາຍຜູ້ຖ້ວນສອງກ່າວ :" ລົມເຫັນຢູ່ຟາກນ້ຳ ເບື້ອງນັ້ນພຸ້ນຊິໄກປານໃດກໍ່ຕາມ ຂ້ອຍສາມາດເຮັດເຮືອຂີ່ໄປປ່ອຍ ເອົາສາວນັ້ນມາຈາກທີ່ກັກຂັງໄດ້ !"

ນ້ອງຊາຍຫລ້າກ່າວຊ້ຳທ້າຍ :" ຂ້ອຍອາສາໄປລັກເອົາສາວນັ້ນມາໃຫ້ປອດໄພທຸກປະການ "

ໃນແຕ່ມາທັງ 3 ອ້າຍນ້ອງໄດ້ມຸ່ງໜ້າເຂົ້າສູ່ວັງເຈົ້າຊີວິດໃນເມືອງຫລວງ ແລ້ວກໍ່ຂໍນ້ອມຕົວເຂົ້າເຝົ້າເຈົ້າຊີວິດແລະຖວາຍຄາຖາອາຄົມທັງມວນນັ້ນໃຫ້ເຈົ້າຊີວິດຟັງ. ຄາວນັ້ນເຈົ້າຊີວິດຍັງມີຈິງໂສກເສົ້າເຫງົາຫງອຍ ສິບບໍ່ຈາຕາບໍ່ຊຸ່ມຈັກດີ. ຜູ້ອ້າຍກົກໄດ້ຖວາຍ ຄາຖາສູ່ເຈົ້າຊີວິດສຽງລັ່ງແລ້ວບໍ່ຈັກວ່າຄວາມຊຸ່ມແຕ່ໃສແລ່ນມາໜ້າຕາກໍ່ແຈ້ງຈັກທັນທີ. ຊາຍ ຕາຊິໂອ ໄດ້ເອົາແກ້ວສ່ອງມາແຍງ ໃນທັນໃດກໍ່ເຫັນລູກສາວເຈົ້າຊີວິດພ້ອມຖືກຂັງໄວ້ຢູ່ເກາະແຫ່ງໜຶ່ງ ທີ່ໄກໆພຸ້ນແລະມີຜີຂັບທີ່ຄອຍເຝົ້າຢູ່.

ເຈົ້າຊີວິດອຸທານວ່າ : ເອົາ ! ຂຸນເຮົາຊູຊ່ວຍຊີວິດລາວມາ

ໄດ້ແນວໃດ ?"

ຊາຍສອງຄົນກໍຕອບ :" ຈົ່ງລໍຖ້າເບິ່ງວ່າພວກເຮົາ ຈະສາມາດເຮັດໄດ້ແນວໃດ ?"

ໃນວັນນັ້ນຊາຍ ບິນໂດອິ ໄດ້ເຮັດເຮືອຂົນ, ບໍ່ພໍຄາວເຮືອນັ້ນກໍສຳເຫລັດ. ຊາຍທັງສາມກໍຂົນເຮືອນັ້ນ ແລ້ວເດີນມຸ່ງສູ່ເກາະນ້ອຍອັນໄກຝັ່ງແຫ່ງນັ້ນຢ່າງບໍ່ລໍ້ຊ້າ. ເມື່ອຊາຍທັງສາມໄປເຖິງເກາະນັ້ນທັນໃດກໍເຫັນພວກຜີມົດບໍ່ຈັກໂຕຫນ້າສັ້ນຫນ້າຍາວ ໂຕຂົນຂາວຂົນກູດ ພວມຢືນລ້ອມເຝົ້າສາວ ເປີລິຕາ ແກ່ນຝ່າຫ່ອນສະເຫນ ຢ່າງຄັບຄັ່ງອຶ່ງອໍ່ ເບິ່ງຄືກັບວ່າ ຜີພີມົດທັງຜີພາຍ ຜີຍາວາຍຍ່າວອມ ຫຍັງໆໃນເກາະດອນນັ້ນແມ່ນມາຫຍຸ້ມຢູ່ທີ່ນັ້ນຫມົດ.

ຊາຍຕາຊິໂອ ກັບ ບິນໂດອິ ມຸ່ງຫນ້າໄປຫາບ່ອນຝູງຜີຢູ່ ແລ້ວຕາຊິໂອ ເວົ້າຂຶ້ນ :" ມັນເປັນການລຳບາກຫລາຍທີ່ຈະເຂົ້າໄປໃນທ່ຳຄອຍວົງລ້ອມຈອດຂອງຊຸມຜີນັ້ນ !"

ກາດສເຕີ ເວົ້າຂຶ້ນ :" ຂ້ອຍເຮັດຫຍັງເປັນກໍຊິເຮັດເບິ່ງ " ເມື່ອກ່ອນຮຽນວິຊາຂລັກນັ້ນ ລາວກໍໄດ້ຮຽນອຸບາຍການພາງ ເຮືອນເພື່ອເຂົ້າໄປໃນເອົາຂອງ, ສະນັ້ນລາວຈຶ່ງລອດເຂົ້າໄປໃນວົງລ້ອມຂອງຊຸມຜີແລ້ວລັກພາຕົວລູກສາວເຈົ້າຊີວິດຫນີໄດ້ແລ້ວກໍພາແລ່ນ ມາຫາເຮືອໃຫຍ່ທີ່ຄອຍລໍໄວ້ແຄມຝັ່ງຢ່າງບໍ່ໃຫ້ຜີໂຕໃດຮູ້ເຫັນທັນເລີຍ.

ໃນບໍ່ນານເຮືອໃຫຍ່ກໍໄດ້ມາເຖິງຝັ່ງແລະນາງ ເປີລິຕາ ລູກສາວເຈົ້າຊີວິດກໍໄດ້ຄືນມາສູ່ວັງ, ຄາວນັ້ນທັງເຈົ້າຊີວິດ ແລະໄພ່ຟ້າ

ປະຊາກອນຢູ່ແຫ່ງໃດໆກໍ່ລື່ນເລີງ ເພີງໃຈ, ເຈົ້າຊີວິດດີໃຈ ຫລາຍ ຈຶ່ງສັ່ງໃຫ້ໄພ່ຟ້າລາດຊະດອນ ທຳການກິນລ້ຽງສະຫລອງກັນຈົນເຖິງ ເຈັດວັນຖວນ.

ເລື່ອງບໍ່ແລ້ວລົງເທົ່ານັ້ນໄດ້ເທື່ອ ບັນຫາໃໝ່ເກີດຂຶ້ນ ກໍ່ຄື : ນັບແຕ່ຊາຍທັງສາມໄດ້ພາຕົວລູກສາວເຈົ້າຊີວິດຄືນມາໄດ້ນັ້ນສົມຄວນ ຈະໃຫ້ໃຜເປັນຜູ້ໄດ້ແຕ່ງດອງກັບນາງ ?

ເຈົ້າຊີວິດຄິດງ່ຳນຳເລື່ອງນີ້ບໍ່ອອກ ຈົນເກົາຫົວຍອກໆຢູ່ ຈາກ ນັ້ນຈຶ່ງໄປເອີ້ນເອົາຮອງນາຍົກຜູ້ຫນຶ່ງມາ ເພື່ອເອົາເລື່ອງນີ້ ປຶກສາ ແລ້ວໃຫ້ຄິດຫາວິທີແກ້ຊ່ວຍກັນ. ໃນບໍ່ນານທ່ານຮອງນາຍົກກໍ່ອອກມາ ຈາກງານສະຫລອງຕ້ອນຮັບລູກສາວເຈົ້າຊີວິດ, ພໍມາຮອດເຈົ້າຊີວິດ ກໍ່ກ່າວວ່າ : ເພື່ອຕອບແທນບຸນຄຸນຂອງຊາຍທັງສາມ ທີ່ໄປນຳເອົາ ລູກສາວຂອງເຮົາມາໄດ້ນັ້ນ ທ່ານຮອງນາຍົກຄິດວ່າເຮັດແນວໃດ ຊິ ໄດ້ ?" ຂ້ອຍຄິດແບບຫນຶ່ງວ່າ : ຄັນຫາກຂອງແບ່ງສັບສິນ ສົມບັດ ໃນຣາຊາວັງນີ້ເຄິ່ງຫນຶ່ງແລ້ວ ປັນເປັນສາມສ່ວນເທົ່າກັນ ແຈກໃຫ້ ຊາຍທັງສາມນັ້ນຊິບໍ່ດີກວ່າບໍ ?

ທ່ານຮອງນາຍົກເວົ້າມາວ່າ : ແມ່ນແລ້ວພະອົງ ! ມັນແມ່ນ ຫຍັງແທ້ທີ່ຊາຍທັງສາມຕ້ອງການ ? ຫລືວ່າເຂົາເຈົ້າມີຄວາມ ຝັນ ຢ່າງຫນຶ່ງທີ່ຢາກຮັ່ງມີ, ຢາກມີແນວຊ່ວຍແມ່ຂອງເຂົາເຈົ້າໃຫ້ ພົ້ນ ຈາກຄວາມທຸກໄຮ້ເຂັນໃຈນັ້ນແດ່ບໍ ?

ໃນເມື່ອເຂົາເຈົ້າຫາໄດ້ສິ່ງປະເສີດທີ່ມີຄຸນຄ່າສູງຢ່າງໃດຫນຶ່ງ ແລ້ວ

ເຂົາອາດເອົາເນື້ອແລກຊື້ເອົາດິນ, ຊອກເອົາຫລາຍຄົນ ມາເຮັດວຽກໄຮ່ການນາໃຫ້ ເຂົາອາດຈະດີໃຈທີ່ສຸດ, ແລະແມ່ຂອງເຂົາ ກໍຈະໄດ້ພັກຜ່ອນຢ່ອນກາຍ, ລູກຊາຍທັງສາມກັບແມ່ກໍຈະໄດ້ຢູ່ນຳ ກັນຢ່າງສຸກກາຍສະບາຍເນື້ອ.

ແຕ່ສົມບັດທີ່ຊາຍທັງສາມຈະຫາມາໄດ້ນັ້ນ ແມ່ນຫຍັງທີ່ຖືວ່າ ມີຄຸນຄ່າກວ່າຢ່າງອື່ນອີກນອກຈາກແມ່ນດິນ, ເພາະດິນແມ່ນສິ່ງ ປະເສີດສຳຫລັບຄົນ, ແລະດິນໄດ້ສ້າງຄວາມອຸດົມ ສ້າງປັນຍາ ແລະສ້າງເປັນໂຮງຈັກໂຮງງານຢ່າງໃຫຍ່ໂຕໃຫ້ແກ່ຄົນນີ້ !





# ນິທານ ປາກິສຖານ

## ເຈົ້າຊີວິດກັບ ໄກ່ຜູ້ໂອກ

ວັນໜຶ່ງໃນເບື້ອງເກົ່າຄາວຫລັງ ຕອນດອກສະເໝັ່ງ ບ້ານ ມີສີ່ໝາກປີ້ບ້ານເມືອງຊຸມພູນ ຢູ່ເມືອງໜຶ່ງທີ່ໃຫຍ່ກວ້າງ ໄດ້ມີເຈົ້າຊີວິດ ປົກຄອງມານານປີ, ເຈົ້າຊີວິດອົງນັ້ນໄດ້ປົກຄອງໄພ່ຟ້າປະຊາຫລວງທົ່ວແຄວນແດນໄພສານ ບໍ່ແລ້ວຍັງຈັບຈອງດິນດອນອື່ນກວ້າງໃຫຍ່ ໄວ້ແລະໃຊ້ດິນນັ້ນ ເພື່ອສ້າງຄວາມມັ່ງມີແກ່ຕົວເອງ. ເຊິ່ງທຸກໆປີລາວໄດ້ຮັບກຳໄລນຳຢ່າງມາກມາຍ.

ເຈົ້າຊີວິດນັ້ນ ມີຄວາມພູມໃຈທີ່ສຸດອັນໜຶ່ງແມ່ນ ມີໄກ່ຜູ້ໜຸ່ມໂຕໜຶ່ງໄດ້ເປັນຜູ້ຂະຫຍັນໃນການຮັບໃຊ້ວຽກການງານທັງວັນແລະຄືນໃຫ້ລາວໃນທຸກຍາມ, ໄກ່ຜູ້ໂຕນັ້ນໄດ້ໄຖນາ, ປູກເຂົ້າ, ເກັບກູ້ພືດພັນແລະຟາດເຂົ້ານາໃນທຸກໆປີ.

ໃນປີໜຶ່ງ ເຊິ່ງເປັນປີທີ່ເກັບກ່ຽວເຂົ້າໄດ້ຫລາຍກວ່າໝູ່ ໃນຜ່ານໆມາ. ເຈົ້າຊີວິດໄດ້ເລາະລຽບໄປເບິ່ງທົ່ງນາຂອງຕົນລາວພູມໃຈຫລາຍທີ່ເຫັນເຂົ້າຖືກກ່ຽວແລະມາກອງໄວ້ລຽນກັນເປັນແຖວໆ.

ໄກ່ຜູ້ໂອກກໍ່ໄດ້ຍ່າງໄປເບື້ອງໜ້າຂອງເຈົ້າຊີວິດ ແລ້ວເວົ້າອອກດ້ວຍວາດຍິ້ມແຍ້ມວ່າ : " ດຽວນີ້ຂ້າງປັ້ນຜູ້ດີປັ້ນສ່ວນເຂົ້າຊຸມນ

ໃຫ້ເປັນຄ່າຕອບແທນແກ່ເຫື່ອແຮງທີ່ຂ້ອຍໄດ້ຮັດໄດ້ປູກ ຢ່າງໜັກໜ່ວງມານັ້ນແດ່ "

ເຈົ້າຊີວິດໄດ້ຍິນກໍ່ຫົວ ແບບຄົວສົ້ນເຂົາ, ແລ້ວເວົ້າວ່າ ເຈົ້າຊິເອົາກໍ່ເອົາ, ໃຫ້ເຈົ້າເອົາເຂົ້າຍັດໃສ່ເຕັມຫູສອງເບື້ອງເຈົ້າ ຈົນເຕັມ ຫາກໃສ່ໄດ້ຫລາຍຊ້ຳໃດກໍ່ໃຫ້ເອົາໃສ່ໂລດ ! ສ່ວນທີ່ ເຈົ້າເອົາໃສ່ຫູໄດ້ນັ້ນ ໃຫ້ຖືເປັນຂອງທົດແທນທານສິນ ແລະເປັນຜົດທີ່ຂ້ອຍປັນໃຫ້ເຈົ້າ !

ໄກຜູ້ໂອກ ເລີ່ມເອົາເຂົ້າຍັດໃສ່ຫູສອງເບື້ອງ, ບໍ່ພໍຄາວເຂົາທີ່ກອງຢູ່ກຽງຈ້ອຍ, ເຈົ້າຊີວິດເກີດຕົກຕະຫລຶງທັງຢາກຮ້າຍຂຶ້ນກັບບາດ ທີ່ເຫັນໄກໂອກເຮັດແນວນັ້ນ, ແລ້ວເຈົ້າຊີວິດກໍ່ປັນຖາມ ໄກໂອກຄືນວ່າ :" ອາວ ! ຄັນເຈົ້າເອົາໝົດແລ້ວພູດເຂົ້າຂອງຂ້ອຍເດໍກຍັງມີຫວະ ?

ໄກໂອກຊ້ຳຕອບວ່າ : ນ້ອມແດ່ພະອົງ ! ກົມພະອົງເອງໄດ້ສັ່ງຜູ້ຂ້າວ່າ : ຄັນເອົາໃສ່ຫູສອງເບື້ອງໄດ້ຊ້ຳໃດແມ່ນໃຫ້ເອົາໂລດຜູ້ຂ້າເຮັດຕາມຄວາມບອກຂອງພະອົງ, ເຮັດມາຕາມເຮັດມາ ເຂົ້າທຸກກອງກໍມາຍັດໃສ່ຫູນີ້ ປານນັ້ນຍັງບໍ່ເຕັມເທື່ອ ພະອົງເຮີຍ !"

ເຈົ້າຊີວິດບໍ່ຊ້າງຊໍຕອບແນວໃດກໍ່ເລີຍກົ້ມໜ້າລົງ ທັນໃດໄກໂອກກໍ່ເວົ້າຂຶ້ນ " ຂອບໃຈນຳເຈົ້າຊີວິດຫລາຍ ! ດຽວນີ້ຂ້ອຍ ຈະໄປທີ່ໄກໆ, ໃຫ້ພໍ່ແລະຮ້ອງຂໍແຕ່ງດອງກັບລູກສາວເຈົ້າຊີວິດໃຫ້ໄດ້.

ເມື່ອເຖິງມື້ໃໝ່ ໄກໂອກກໍ່ເລີ່ມເດີນທາງໄປສູ່ແດນໄກ, ໃນ

ເວລາທີ່ພວມຍ່າງໄປໄກ່ໂອກໄດ້ຍິນສຽງເອີ້ນຂອງໝາປ່າວ່າ: ໄກ່ໂອກເຮີຍ ! ແມ່ນເຈົ້າຊິໄປໃສເດໜັ້ນນ໊າ ?" ໄກ່ໂອກກໍ່ຕອບ :" ຂ້ອຍຊິໄປເຂດຖິ່ນດິນໄກບໍ່ມີທີບັພຸມ ເພື່ອຊິໄປຫາແຕ່ງດອງ ກັບລູກສາວຄີງຂອງເຈົ້າຊີອົດ " ຍິນແນວນັ້ນໝາປ່າກໍ່ເວົ້າວ່າ :"ໄປໃສ ຂ້ອຍກໍ່ຂໍໄປນຳແດ່ຖອນ !"

" ເສັ້ນທາງທີ່ຂ້ອຍຈະໄປນັ້ນມັນໄກຫລາຍ, ເຈົ້າອາດຈະຫິວ ຫລືບໍ່ມີເຂົ້ານ້ຳຫຍັງກິນກໍ່ເປັນໄດ້ເນີ !" ແຕ່ຢ່າງໃດໝາປ່າກໍ່ຂານອາສາວ່າ ຈະໄປນຳຈົນໄດ້. ເຂົາເລີ່ມເດີນທາງໄປບໍ່ເຖິງ ພໍງາຍ ໝາປ່າກໍ່ຈົ່ມຂຶ້ນ : ໂອຍ ! ຂ້ອຍເມື່ອຍແລ້ວ, ຍ່າງຕໍ່ໄປຊິບໍ່ໄຫວອີກ ແຕ່ໃນພື້ດຍັງຢາກໄປນຳເຈົ້າຈົນສຸດຂັ້ນສຸດຂີດ !"

ຈາກນັ້ນໄກ່ໂອກກໍ່ບອກໃຫ້ໝາປ່າເອົາເຂົ້າໜ້ອຍໜຶ່ງຢູ່ຫູມັ້ນ ອອກ, ໝາປ່າກໍ່ໄດ້ເຮັດຕາມ ແລ້ວໃຫ້ໝາປ່າເຂົ້າໄປຢູ່ ໃນຫູ, ເຂົາທັງສອງພາກັນເດີນໄປຕໍ່ :

ໃນຂະນະທີ່ເຂົາທັງສອງທັງຍ່າງທັງລົມກັນໄປທັນໃດ ໝາໄນພັດຮ້ອງມາຖາມວ່າ :" ອ້າຍໄກ່ໂອກ ! ແມ່ນຊິພາກັນໄປໃສເດ?

" ຂ້ອຍຊິໄປເຖິງເຂດຖິ່ນດິນໄກ, ຊິໄປຫາຂໍລູກສາວຄີງເຈົ້າຊີອົດມາແຕ່ງເປັນເມຍ ນໍ໊າ !" ໄກ່ໂອກຕອບ ແລ້ວໝາໄນກໍ່ເວົ້າຕໍ່ :" ອ໊າວ ຄັນຊັ້ນໃຫ້ຂ້ອຍຂໍໄປນຳແດ່ ! ພໍ່ຊິໄດ້ບໍ່ ? " ເສັ້ນທາງໄປມັນໄກມັນຍາກ ຄວາມລຳບາກບໍ່ຊ່າງຊິຈ໊າໄດ້ເນີ ! ຄັນບໍ່ຢ້ານອິດຢ້ານຫີວຊິໄປນຳກໍ່ໄປ " ໄກ່ຕອບແນວນັ້ນ. ໝາໄນກໍ່ ອາ

ສາວວ່າ :" ຄົນໃຫ້ໄປນຳຍາກກໍຈືອິດໄປມາ ! ແລວເຂົາ ທັງສາມ ກໍເລີມຮູ້ກັນແລະພາກັນເດີນໄປ. ພໍໄປໄດ້ຈັກບຶດ ໝາໄນກໍຈົ່ມອອກ ປາກ : ໂອຍ ! ຕາຍຊາດແມ່ນເມື່ອຍ, ຂອຍຊິຍ່າງໄປຕໍ່ ບໍໄຫວ ແລ້ວ ! ແຕ່ໃຈນຶກຢາກໄປນຳເຈົ້າ ຈົນສຸດເຂດຮອດປະເທດແດນ ເຈົ້າຈິວດພຸ້ນແລ້ວ !" ຍິນແນວນັ້ນໄກ່ໂອກ ກໍບອກໃຫ້ໝາໄນເອົາ ເຂົາເມັດໝົ້ນງອອກຈາກຫູແລ້ວໃຫ້ຂັບເມືອຢູ່ໃນຫູຂອງຕົນ, ເຂົາທັງ ສາມພ້ອມກັນໄປຍ່າງມ່ວນຊື່ນ.

ເຂົາພວມໄປຕາມໄປກໍມີໝາຈອກ ໂປໂລ ທີ່ວອອກຈາກໂກນ ຮ້ອງມາຖາມວ່າ :" ແມ່ນຊິພາກັນໄປທາງໃດເດ່ " ໄກ່ໂອກກໍ ຕອບ : ຈິພາກັນໄປເຂດຖິ່ນດິນໄກ, ໄປຫາແຕ່ງດອງກັບ ລູກສາວ ເຈົ້າຈິວດມາ !" ໂອຍ ! ຄັນຊັ້ນກໍຂໍໄປນຳແດ່ດູ ຊິພໍໄດ້ຕີ ? " ໝາຈອກຖາມແນວນັ້ນ. ໄກ່ໂອກກໍຂານ :" ເສັ້ນທາງເດີນພັ້ນໄກ ບໍ່ຈັກຊິພໍ້ອນໃດຕ້ອນກວ່າ, ບາງທີອາດທີ່ວນ້ຳໝລທີ່ວຮອດເຂົາພຸ້ນອີກ ເຈົ້າຊິໄປໄຫວບໍ່ ?"

ປານນັ້ນໝາຈອກກໍອາສາໄປນຳ ໂດຍບໍ່ຢ້ານ ຄວາມຍາກ ຂວາງໜ້ານັ້ນເລີຍ !

ພໍເຂົາໄປໄດ້ເລັດນ້ອຍບໍ່ໝົດແລງ ໝາຈອກກໍຈົ່ມອອກ ໂອຍ ເມື່ອຍ ! ອ້າຍໄກ່ເຮີຍ ! ຂ້ອຍສຸດທີ່ຢາກໄປຕໍ່ ແຕ່ເຮັດແນວໃດຊິ ໄປໄດ້ ມັນໂລດບໍ່ມີແຮງພໍຍົກຂາອ້າແຄ່ງແລ້ວເດ່ !" ໄກ່ໂອກໄດ້ ຍິນແລ້ວກໍບອກໃຫ້ໝາຈອກຂົ້ນໄປເອົາເມັດເຂົາເມັດໝົ້ນງອອກຈາກ

ຫູແລ້ວໃຫ້ເຂົາໄປຢູ່ແທນບ່ອນນັ້ນ. ຈາກນັ້ນເຂົາທັງ 4 ພາກັນເດີນທາງຕໍ່ໄປ.

ເມື່ອເຂົາເຈົ້າພາກັນໄປຕາມໄປ ກໍ່ມີສິງໂຕອອກມາຫາ ແລ້ວຖາມ :" ຊິພາກັນໄປໃສນໍ ? ຂໍໄປນຳເປັນໝູ່ເປັນຄູ່ຊິພໍໄດ້ບໍ່ ?" ແລ້ວໄກ່ໂອກກໍ່ຕອບ : ຄັນເຈົ້າອາສາຊິເປັນໝູ່ກັນແທ້ຊິໄປນຳກໍ່ໄປ ແຕ່ທຸກຍາກແນວໃດກໍ່ພ້ອມກັນສູ້ຊົນທົນຜ່ານໄດ້ເນີ ! ສິງຕອບ ຮັບປາກແລ້ວກໍ່ພາກັນໄປ. ເມື່ອໄປບໍ່ນານພຽງໃດສິງໂຕກໍ່ເມື່ອຍເກືອບຊິໄປບໍ່ໄດ້ພໍ່ບາດ, ໄກ່ໂອກບອກໃຫ້ຂຶ້ນໄປຫູເກັບເມັດເຂົາອອກເມັດໜຶ່ງແລ້ວເຂົາໄປຢູ່ແທນບ່ອນ. ພໍເຮັດແລ້ວ ເຂົາກໍ່ພາກັນ ໄປໜ້າຢ່າງບໍ່ພັກບໍ່ເຊົາ.

ໃນບັ້ນທ້າຍໄກ່ໂອກແລະເພື່ອນຝູງໄດ້ໄປເຖິງເມືອງໜຶ່ງອັນມີເຈົ້າຊີວິດປົກຄອງຢູ່. ໄກ່ໂອກພ້ອມເພື່ອນໄດ້ເຂົາຫາວັງເຈົ້າຊີວິດ, ຜູ້ຮັກສາວັງໄດ້ນຳຕົວໄກ່ໂອກແລະໝູ່ຝູງເຂົ້າກອງຄະດີ ແລ້ວກໍ່ເອົາເລື່ອງນີ້ໄປລາຍງານໃຫ້ເຈົ້າຊີວິດຮູ້, ຈາກນັ້ນເຈົ້າຊີວິດກໍ່ເຂົ້າມາສູ່ສານເພື່ອຟັງຄະດີ : ເຈົ້າຊີວິດຖາມໄກ່ໂອກວ່າ :" ເປັນຫຍັງ ? ເຈົ້າຈຶ່ງເຂົ້າມາໃນລາຊາສຳນັກນີ້ ?" ໄກ່ໂອກກໍ່ຕອບ :" ຂ້ອຍຕ້ອງມາ ! ຂ້ອຍມານີ້ເພື່ອຊິຟ້ອງຄວາມຕໍ່ເຈົ້າຊີວິດແລ້ວຊິແຕ່ງດອງກັບລູກສາວຄົນຂອງພະອົງ " ພໍໄດ້ຍິນຄຳເວົ້າແບບແຂງໆ ຢ່າງນີ້ເຈົ້າຊີວິດຖືເປັນຄຳດູໝິ່ນຈຶ່ງສັ່ງໃຫ້ເສນາອາມາດວ່າ : ຈົ່ງເອົາໄກ່ໂອກໂຕນີ້ໄປຂັງດີໆ, ໄປຂັງໃສ່ຄອກໄກ່ພຸ້ນ !"

ຈາກນັ້ນໄກ່ໂອກກໍ່ຖືກນຳຕົນໄປສູ່ລົກຂັງ, ທີ່ນັ້ນລາວໄດ້ ພໍ້ໄກ່ຫລາຍໆໂຕ ກໍ່ພອມຖືກຂັງຢູ່, ໃນບໍ່ຊ້າອ້າຍໄກ່ໂອກກໍ່ຮຽກ ເອົາອ້າຍໝາປ່າອອກຈາກຫູ, ອ້າຍໝາປ່າທີ່ຫິວໂຫຍມາຫລາຍວັນແລ້ວເມື່ອຖືກບອກໃຫ້ອອກມາກັດ ເບິ່ງຈຶ່ງແມ່ນໝັນຮັດຕາມໃຈກັດໄກ່ໃນລົກນັ້ນຈົນຕາຍດັບຕາຍວາຍ ແລ້ວກໍ່ນັ່ງກິນໄກ່ນັ້ນບໍ່ເຫລືອພໍໂຕເລີຍ.

ເມື່ອເຫັນແນວນັ້ນເຈົ້າຊີວິດເກີດຢາກຮ້າຍ, ຈຶ່ງສັ່ງການ ໃຫ້ອາມາດທັງຫລາຍວ່າ :" ຈຶ່ງຈັບເອົາໄກ່ໂອກເວນໂຕນັ້ນໄປຂັງໃສ່ຄອກແກະຂອງກູພຸ້ນໄວ້ !"

ພໍໄປຮອດທັນໃດໄກ່ໂອກກໍ່ເອີ້ນໃຫ້ໝາໄນອອກມາ ຈາກຫູ, ໝາໄນຫິວໂຕນັ້ນອອກມາບໍ່ລໍຊ້າກໍ່ໂດດກັດຄໍແກະຈົນວອດວາຍ ຕາຍກ້ຽງແລ້ວກໍ່ກິນເອົາໆ ! ຈົນບໍ່ເຫລືອບໍ່ຫລໍຈັກໂຕຊ້ຳ.

ເຫັນເປັນເລື່ອງເປັນລາຍແນວດັບວາຍຊັ້ນເກີດຂື້ນອີກຮູບໃໝ່ເຈົ້າຊີວິດແຮງເກີດໂມໂຫໂທໂສ ວ່າແລ້ວກໍ່ຮຽກອາມາດຂອງ ເພີ່ນມາພ້ອມກໍ່ສັ່ງເປັນເດັດຂາດວ່າ :" ຈັບບັກໄກ່ໂອກນັ້ນໄປຂັງຍັດໃສ່ຄອກລວາຂອງກູພຸ້ນເບິ່ງ, ປ່ອຍໃຫ້ໂຕລວາ ຢຽບມັນຈົນປີ້ນແປ້ ໄປພຸ້ນເບິ່ງ !"

ເມື່ອຖືກຂັງໃສ່ຄອກລວາ ເທື່ອນອ້າຍໄກ່ໂອກກໍ່ຮຽກໝາຈອກອອກມາຈາກຫູ, ອອກມາແລ້ວບໍ່ພໍຄາວພໍຍາມໝາຈອກກໍ່ກັດໂຕລວາເຈັບໄປຢ່າງຫລາຍຕາຍໄປຢ່າງມາກ, ບາງໂຕຈິກແຕ່ປາກ ແຫລ່ງຮອດຄາງກະໄຕ, ບາງໂຕເກີດເລືອດໄຫລຍ້ອຍລົງຫາງກົ້ນສັບປະປີ

ເຈົ້າຊີວິດເຫັນແນວນັ້ນ ກໍເກີດຄວາມໂມໂຫໃຈໂກພໍຢາກຫຍ້ຳ ທາງດິບໃຫ້ໄກ່ໂອກນັ້ນ, ແລ້ວກໍ່ສັ່ງການວ່າ :" ໄປເອົາ ບັກໄກ່ ໂອກມາໃຫ້ກູດຽວນີ້ ! ກູຊິລອງທຳໂທດແບບໂຫດໆເຫລືອເນືອງຄືນ ລອງເບິ່ງ ! ໄປເອົາມາໃຫ້ດຽວນີ້ !"

ໃນບໍ່ນານອ້າຍໄກ່ໂອກກໍຖືກນຳຕົວມາເຖິງຕໍ່ໜ້າ ເຈົ້າຊີວິດ.

ໃນຂະນະດຽວກັນນັ້ນ ອ້າຍໄກ່ໂອກກໍ່ສັ່ງໃຫ້ສິງໂຕ ທີ່ພວມຫິວ ໂຫຍຢູ່ໃນຫູອອກມາ, ສິງໂຕໂດດຢຽດອອກມາຈາກຫູພ້ອມກັບ ຮ້ອງ ຄູກ ! ຄູກ ! ຍິ່ງແຂ້ວແຫລມຄົມເປັນເຊືອກເຮືອກຢູ່ຢ່າງເປັນໜ້າ ສະທ້ານ, ພໍແຕ່ສິງພະຫລາດອອກມາດັ່ງວ່ານັ້ນ ເບິ່ງເຈົ້າຊີວິດ ກັບ ພວກເສນາອາມາດ, ເພັດສະຄາດ, ຈ່າສານ ທັງທະຫານ ມີດາບ ຕ່າງກໍຂາບຈຳດິນ ຕົວແຫດຕີນມືບງອບໆ ຂໍຜ່ອນໂທດ ໂຜດຊີວິດ, ຢ່າເອົາຜິດເອົາແມ່ນນຳຖອນ !" ບໍ່ຈັກໃຜຕໍ່ໃຜທັງເຈົ້າຊີວິດແລະຜູ້ ທີ່ມາລຽນລ້ອມຕ່າງກໍ່ອ້ອນວອນນຳອ້າຍໄກ່ໂອກດ້ວຍສຽງ ສັ່ນເຊັນ ໜ້າບໍ່ເຫັນມີເລືອດພໍຢາດ.

ພໍຫາໂອກາດໄດ້ມາ ເຈົ້າຊີວິດກໍກົ້ມຂາບໄກ່ໂອກພ້ອມກັບວ່າ: " ໂອຍ ! ທ່ານໄກ່ໂອກ ທ່ານເກັ່ງກ້າອາຄົມດີແທ້ !ທ່ານໄກ່ໂອກ ເຮີຍ ! ຂໍນຳຖອນ, ຄັນວ່າເຈົ້າຫາກຢາກແຕ່ງດອງຄອງເປັນເມຍ ກັບລູກສາວຂ້ອຍແທ້ກແຕ່ງເອົາສາ, ຂ້ອຍຊິຍົກລູກສາວໃຫ້ເຈົ້າຢ່າງ ທຳຊອບ, ຂໍຢ່າໃຫ້ໂທດໂກດເປັນໂພຍຕໍ່ຂ້ອຍກັບໄພ່ຟ້າລາດຊະດອນ ຂອງຂ້ອຍກໍ່ແລ້ວ !"

ພໍເມື່ອຕົກລົງປົງຄວາມກັນໄດ້ຢ່າງຖືກຕ້ອງຄ່ອງໃຈກັນກັບເຈົ້າຊີວິດແລ້ວອ້າຍໄກ່ໂອກກໍ້ຫາງຫາພາບາສີ ທຳງານສິລິມຸງຄຸນກັບເຈົ້າສາວແຖ່ນແກ້ວແນວໜໍ່ນາມກະສັດ, ຈາກນັ້ນພິທີດອງລະຫວ່າງເຈົ້າຊາຍໄກ່ໂອກກັບລູກສາວເຈົ້າຊີວິດກໍຖືກຈັດຂຶ້ນຢ່າງຄຶກຄື້ນ ເຂົາເຈົ້າພາກັນກິນ, ຟ້ອນລຳມ່ວນຊື່ນທັງວັນທັງຄືນຢ່າງເຕັມມັກ, ໃນນີ້ອາຍສິງໂຕທັງໝາໄນ, ໝາປ່າ, ໝາຈອກ ທັງມວນກໍໄດ້ ຮ່ວມກັນມ່ວນຊື່ນລື່ນເລີງຢ່າງມີຄວາມສຸກ.

19/7/94.



# ນິທານ ຍີ່ປຸ່ນ

## ຄາຖາສາມອັນ

ແຕ່ກ່ອນກີ້ ຄາວໝາກໝີ້ຫາກໍ່ເປນຫນາມ ໝາກຂາມຫາກໍ່ມີແກ່ນ ນົກອ້ຽງນົກແອ່ນຫາກໍ່ຮຽນບິນຝຸ້ນ ຢູ່ເຂດພູຜາປ່າດົງໜຶ່ງເພິ່ນໄດ້ສ້າງວັດໄວ້, ຢູ່ວັດນັ້ນມີຄູບາພຽງອົງດຽວກັບຈົວນ້ອຍພ້ອມກັນຢູ່. ຄູບານັ້ນນັບວັນກໍເຖົ້າແກ່ເຂົ້າ ແຕ່ຈົວຊ້ຳພັດນັບມື້ນັບໃຫຍ່ຂຶ້ນນຳທຸກມື້

ຢູ່ປ່າໃກ້ໆກັບວັດນັ້ນມີຕົ້ນໝາກກາ ຕົ້ນກໍຫລາຍ, ເຖິງຍາມແລ້ວມາຮອດປີໃດໝາກໄມ້ກໍ່ປົ່ງຈຳຈິ່ມກັນຈົນງ່າກ່ອງ, ພ້ອມນັ້ນເຂດປ່າກໍ່ປ່າກ່າແຖວນັ້ນກໍຊວນໃຫ້ເປັນບ່ອນທ່ຽວເບີຍອາລົມຊົມແມກ ໄມ້ອໍຫລໍ, ເມື່ອເຖິງໄມ້ຊຸມມີໝາກມາກໍ່ຍິ່ງເປັນຕາທ່ຽວກັບ, ເຖິງຍາມລົມພັດມາເທື່ອໃດ ໝາກຂອງມັນກໍ່ຫລົ່ນລົງ ຍຸ່ທາງເກັບຍຸ່ທາງກິນຈົນເຕັມມັກ.

ຢູ່ມາເຖິງວັນໜຶ່ງ ຈົວນ້ອຍໄດ້ເວົ້າກັບຄູບາວ່າ : ຍາຄູເຮີຍ ຂ້ານ້ອຍຢາກໄປໂລະປ່າຫາເກັບໝາກໄມ້ ກະລຸນາໃຫ້ໄປແດຖອນ. ແຕ່ຍາຄູກໍ່ລູບຫົວຈົວນ້ອຍແລ້ວເວົ້າວ່າ : " ບໍ່ ! ບໍ່ ! ຂ້ອຍບໍ່ສາມາດປ່ອຍໃຫ້ເຈົ້າຜູ້ດຽວໄປໂລະປ່າຜ່າດົງຢູ່ໃນປ່າດົງວົງກົດ ມັນມີແນວໜ້າຢ້ານຫລາຍອັນ, ບາງໝົ່ນກໍມີຮອດຜີຍາກ່າບ່ຍາຮ້າງ ລົ້ຊ່ອນ

ປ່ອນໂຕຢູ່ " ແລ້ວຈົວນ້ອຍກໍຮ້ອງຂໍອີກວ່າ : ຂ້ານ້ອຍບໍ່ໄປໂລະ ພູໜ່ວຍອື່ນມາ ! ພີ່ຢ່າກາບ ຢ່າຮ້າງມັນໝັ້ນຢູ່ປ່າບ່ອນອື່ນພຸ່ມ ເຂດນີ້ບໍ່ມີດອກ ! ຢ່າຄູ່ປ່ອຍໃຫ້ຂ້ານ້ອຍໄປສາ !" ຢາຄູ່ກັບ ຈົວນ້ອຍຕ່າງກໍຮ້ອງຂໍ ຕ່າງກໍປະຕິເສດຢູ່ຈົນໃຜກໍເມື່ອຍ, ໃນທີ່ສຸດຄູ່ບາກໍໃຈຮ້າຍແດ່ທັງລຳຄານນຳດັກນ້ອຍ ຄັນໄດ້ຂໍຫຍັງກໍຊູຊີ ຮີມະທັງກະຈົ້ນກະຈ້ຫລາຍ ເພີ່ນກໍປ່ອຍຄວາມວ່າ : ເອີ ! ຄັນຢາກໄປໂລະແຫ້ງກໍໄປສາ. ລອງເບິ່ງດີ ! ດີແທ້ໃຫ້ເຈົ້າມີຄວາມລະວັງຕົວດີໆ ວ່າແລ້ວກໍຍ່າງໄປເອົາຂອງດີມາຢື່ນໃຫ້ຈົວແລ້ວເວົ້າວ່າ : ນີ້ແມ່ນ ຄາຖາສາມອັນ, ເຈົ້າຖືອັນນີ້ໄປແຮຕົນແຮຕົວ, ຄັນມີແນວລົບກວນ ໃຫ້ໃຊ້ຄາຖານີ້ເນີ !"

ຈາກນັ້ນ ຈົວນ້ອຍກໍໂຊກດີທີ່ໄດ້ຮັບອະນຸຍາດໃຫ້ໂລະປ່າ ແລະໄດ້ຄາຖາດີໄປພ້ອມ, ຈົວນ້ອຍເຂົ້າປ່າຫາເກັບໝາກໄມ້ຈາກ ຕົ້ນນີ້ແລ້ວເກັບຕົ້ນນັ້ນໄປ ເບິ່ງບ່ອນໃດກໍເຕັມແຕ່ໝາກໄມ້, ເມື່ອລົມພັດມາຄັ້ງໃດໝາກໄມ້ຫລົ່ນລົງເກັບເອົາຈົນບໍ່ຫລອນ, ຈົວນ້ອຍ ເກີດຄວາມລື້ມເລີງຈົນບໍ່ຢາກຮອດເຂົ້າ, ຈົນບໍ່ເວົ້າຮອດຊູຫລົງທາງ ຈົວນ້ອຍໄດ້ແຕ່ເກັບໝາກໄມ້ໄປໜ້າເລື້ອຍໆ ແລ້ວກໍຕົກໃສ່ດົງໃຫຍ່ ທີ່ລາວບໍ່ເຄີຍມາຮອດຈັກເທື່ອ.

ໃນທັນໃດນັ້ນກໍມີສຽງຢາເຖົ້າໜຶ່ງ ເອີ້ນຖາມຈາກຟາກຕົ້ນໄມ້ໃຫຍ່ເບື້ອງນັ້ນວ່າ : ຈົວນ້ອຍ ! ເຮີຍ ! ເຈົ້າຫຍັງຄືມາໝາຮັກແທ້ ! ມັນທັງເວົ້າທັງມີນຕາເຕັມວົງ, ຈົວນ້ອຍຫລຽວເບິ່ງ ເຫັນ

ເປັນຍິງເຖົ້າ ນຸ່ງເຄື່ອງງາມໆແລ້ວຍ່າງມາຢືນຢູ່ຕໍ່ໜ້າຂອງຈົ້ວນ້ອຍ ແລ້ວມັນຖາມວ່າ :" ເຈົ້າມາຈາກວັດພູໃກ້ປ່າພຸ້ນແມ່ນບໍ່ ?" ຈົ້ວນ້ອຍກໍຕອບ : ແມ່ນແລ້ວ," ຂ້ອຍມານເພື່ອເກັບໝາກໄມ້ນຳ !" ຜີຍ່າເຖົ້າຍັງຫົວຍິ້ມແລ້ວເວົ້າອອກ :" ເອີ ! ຂ້ອຍເຫັນເຈົ້າແລ້ວວ່າເຈົ້າເຮັດຫຍັງ !" ດຽວນີ້ເຈົ້າຈົ່ງເມືອນຳຂ້ອຍ ! ເມືອຫາເຮືອນຂ້ອຍພຸ້ນເນາະຈົ້ວນ້ອຍ ! ຢູ່ພຸ້ນມີໝາກໄມ້ຫວານຢ່າງຫລວງຫລາຍ, ໝາກແກ່ແລ້ວເຈົ້າຊິຈີ່ຫລືຂົ້ວກິນກໍໄດ້, ໝ່ວຍອ່ອນໝັ້ນຈະຕົ້ມກິນກໍຊ່າງແຕ່ເຈົ້າມັກ "

ຄຳເວົ້າຂອງຜີຍ່າເຖົ້າຄຳໃດກໍເປັນການຊັກຊວນຈົ້ວນ້ອຍດ້ວຍຄວາມອ່ອນຫວານ, ຂໍໃຫ້ຈົ້ວນ້ອຍໄປເກັບໝາກໄມ້ຢູ່ເຂດ ເຮືອນຂອງມັນພຸ້ນ, ພ້ອມນັ້ນກໍເວົ້າຕື່ມວ່າ : ຄັນຊັ້ນຂ້ອຍຊິຂົ້ວ, ຊິຕົ້ມໝາກໄມ້ຊຸມນັ້ນໃຫ້ເຈົ້າກິນຈົນອີ່ມ, ຂ້ອຍບໍ່ໃຫ້ເຈົ້າຢາກນຳ ເລື່ອງນັ້ນດອກ ໝາກໄມ້ນັ້ນມີຫລາຍທັງແຊບອີກ ຜີຍ່າເຖົ້າ ເວົ້າແຕ່ຄວາມນັ້ນຢູ່.

ເມື່ອພາຈົ້ວນ້ອຍເມືອຮອດເຮືອນແລ້ວຍ່າເຖົ້າກໍທັງຕົ້ມ ທັງຂົ້ວໝາກໄມ້ໃຫ້ຈົ້ວນ້ອຍກິນຕາມໃຈມັກ, ບໍ່ນານລາວກິນຕາມກິນກໍເຕັມທ້ອງແລ້ວກໍເລີ່ມເຫງົານອນ, ຍ່າເຖົ້າເຫັນແນວນັ້ນກໍໄປເອົາຜ້າຫົ່ມຂຶນມາຫົ່ມໃຫ້ ທັງເວົ້າວ່າ :" ນອນສານ້ອຍເຮີຍ ! ນອນ ແຈບໆຈົ່ມໆສາ !" ບໍ່ນານຈົ້ວນ້ອຍກໍນອນຫລັບແຈບຢ່າງບໍ່ຮູ້ຕົວຮູ້ ທາງຫຍັງແລະບໍ່ຮູ້ວ່າຕົນນອນດົນປານໃດ ຍ່າເຖົ້ານັ້ນຈຶ່ງປຸກໃຫ້ຕື່ນ ເມື່ອ

ເຖິງເດິກທ່ຽງຄືນ ຟ້າກໍ່ຝົນລົງຢ່າງແຮງ, ນ້ຳຝົນທີ່ໄຫລລົງມາ ນັ້ນ ໄດ້ມີສຽງດັງ, ຈົວນ້ອຍຟັງຄັກໆປະກົດໄດ້ຍິນນ້ຳຝົນເວົ້າວ່າ : ປົກ ປົກ ! ປົກ ! ປົກ ! ຈົວນ້ອຍຕື່ນນອນຫລັບ ໃຫ້ເຈົ້າຮູ້ເມື່ອສາ ມຶນ ຫຼຶມນຕາ ຕື່ນມາເບິ່ງຫນ້າຍ່າເຖົ້າຜີປ່າ ຊິເອົາເຈົ້າກິນ !

ໄດ້ຍິນແນວນັ້ນ ຈົວນ້ອຍຂຽວພະຫລາດຕື່ນ, ລາວຮື້ຜາ ໜີ ອອກແລ້ວລຸກໄປຊອກເບິ່ງວ່າແມ່ນບ່ອນໃດທີ່ຍ່າເຖົ້າຢູ່. ພໍແຕ່ລຸກໄປ ເບິ່ງກໍ່ເຫັນວ່າ : ແມ່ເຖົ້ານັ້ນແມ່ນຜີປ່າຜີພູແທ້, ເຫັນມີເຂົາ ສອງ ອັນຢູ່ຫົວຂອງມັນ, ປາກຂອງມັນທັງໃຫຍ່ທັງກວ້າງແຕ່ຫູເບື້ອງນີ້ຈຳ ຫູເບື້ອງນັ້ນ, ລີ້ນຂອງມັນກໍ່ໃຫຍ່ຍາວ, ຈົນແຢ່ອອກຄາດລາດມານອກ ກາຍກາບຄາງ.

ຈົວນ້ອຍເຫັນແນວນັ້ນແລ້ວ ຂົນຄິງກໍ່ລຸກຂຶ້ນທັງຕົກໃຈ ສັ່ນເຊັນ ຕີນມືເປັນຫນ້າມ້ານເຂົ້າລາວຕັ້ງສະຕິຄືນໄດ້ກໍ່ຫາວິທີເພື່ອປົບຫນີຈາກ ທີ່ນັ້ນ. ທັນໃດຜີຍ່າເຖົ້າກໍ່ລຸກພູດພາດຂຶ້ນ ຈົວນ້ອຍກໍ່ຮ້ອງອອກ ດ້ວຍ ສຽງໃຫລ່ວ່າ :" ຍ່າເຖົ້າເອີຍ ! ຂໍນຳຖອນ, ໃຫ້ຂ້ອຍໄປ ຫ້ອງ ຖ່າຍແດ່ !" " ບໍ່ !" ກູບໍ່ໃຫ້ມຶງໄປ ! ຄັນມຶງຈະໄປມຶງຕ້ອງ ໃຫ້ ຄວາມວ່າ : ຕ້ອງຄືນມານໄວໆ ! ຜີຍ່າເຖົ້າເວົ້າແນວນັ້ນ ແລ້ວໆ ຈົວນ້ອຍກໍ່ຕອບ :" ໂອຍ ! ບໍ່ໄດ້, ບໍ່ໄດ້ ! ຂ້ອຍຕ້ອງໄປ, ກະ ລຸນາໃຫ້ໄປຫ້ອງຖ່າຍດຽວນີ້ຖອນ !"

ຜີຍ່າເຖົ້າແຜດສຽງໃສ່ວ່າ :" ຈັ່ງແມ່ນມຶງມາລົບກວນ ອົນ ວາຍເນາະ ! ເອົ້າ ! ຊັ້ນກໍ່ໄດ້, ຄັນຊິໄປກໍ່ໄປ, ແຕ່ຫ້ອງຖ່າຍຢູ່

ນອກເຮືອນ, ຄັນເມິງໄປແລ້ວ ຢ້ານແລ່ນຫນີເລີຍ ກູຊິເອົາ ເຊືອກຍາວໆມາມັດແອວມຶງໄວ້ ! ເຫັນດີບໍ່ ? ວ່າແລ້ວຍາຜີເຖົ້າ ກໍໄປເອົາສາຍເຊືອກຍາວໆມາມັດອ້ອມແອວຂອງຈົ້ວນ້ອຍຄືກັນ, ສົ້ນຫນຶ່ງນັ້ນຜີ່ຍາເຖົ້າກໍ່ຈັບໄວ້, ໃນ້ຈັກບິດຈັກຄາວໃດລາວກໍ່ດຶງ ຊັກເຊືອກແລ້ວຮ້ອງຖາມວ່າ :" ເຈົ້າຍັງຢູ່ຫັນບໍ່ຈົ້ວນ້ອຍ ?" ເອີ ! ຂ້ອຍຍັງຢູ່ນີ້, ຖ້າຈັກຫນ້ອຍເດີ້ຂ້ອຍຊິກັບເຂົ້າໄປໃນເຮືອນເຈົ້າ" ຈົ້ວຕອບແນວນັ້ນ, ເມື່ອຍ່າເຖົ້າຖາມເທື່ອໃດ ຈົ້ວນ້ອຍກໍ່ເວົ້າ ຄວາມເກົ່າ. ເວລານີ້ລາວຈຶ່ງຄິດພໍ້ວ່າ ກ່ອນຈະອອກຫຽວປ່າຊູ່ບາເຖົ້າໄດ້ເອົາຄາຖາສາມອັນໃຫ້, ເມື່ອຄິດພໍ້ແລ້ວຈົ້ວນ້ອຍກໍ່ຄ່ອຍແກ້ສົ້ນເຊືອກທີ່ມັດແອວຢູ່ນັ້ນອອກແລ້ວເອົາຄາຖາອັນຫນຶ່ງມາມັດແທນ ພ້ອມກັບຈົ່ມຄວາມເປົ່າໃສ່ຄາຖາວ່າ :" ກະລຸນາຕອບຄວາມໃຫ້ຜີ່ຍາເຖົ້າ ດັ່ງຄວາມຂ້ອຍໄດ້ເວົ້ານັ້ນ " ເມື່ອເຮັດແນວນັ້ນໄດ້ຮຽບຮ້ອຍແລ້ວ ຈົ້ວນ້ອຍກໍ່ຄ່ອຍປ່ອງໆອອກທາງຖ່າຍຍ່າງບ່ຽນຕົວໃຫ້ບັງຕາຂອງຜີ ຍ່າເຖົ້າ, ພົ້ນຈາກຫັ້ນແລ້ວລາວກໍ່ທັງແລ່ນທັງຫອບຢ່າງຫນ້າຕື່ນຕາລານຢ່າງບໍ່ຫລຽວຫລັງ ເພື່ອໃຫ້ພົ້ນມົ້ມຈາກຄວາມວາຍວອດ.

ຜີຍ່າເຖົ້າຈັບເຊືອກດຶງທີກໃຫ້ເລື່ອງຢູ່ບໍ່ເຊົາຈັກບິດກໍ່ ຮ້ອງຖາມວ່າ :" ເຈົ້າຍັງຢູ່ຫັນບໍ່ຈົ້ວນ້ອຍ !" ຖາມແຕ່ລະເທື່ອສຽງ ຍິ່ງດັງຍິ່ງຮ້າຍຂົ້ນຊັກໃຈ, ແຕ່ຄາຖານັ້ນກໍ່ຕອບໃຫ້ທຸກເທື່ອວ່າ :" ເອີ ! ຂ້ອຍຍັງຢູ່ນີ້ຖ້າຈັກຫນ້ອຍຂ້ອຍຈະກັບໄປເຂົ້າເຮືອນ "

ຜີຍ່າເຖົ້ານັ່ງຈັບເຊືອກທັງຖາມຢູ່ແນວນັ້ນຕົ້ນຕາມດົ້ນຈົນເມື່ອຍ

ມັນອຶດບໍ່ໄດ້ກໍ່ຕັ້ງໃຈແລ່ນໄປຫາທ່ອງຖ່າຍທັນໃດ ກໍ່ເຫັນແຕ່ທ້ອງເປົ່າ ຜີເຖົ້າກໍ່ເວົ້າອອກ : ອ້າວ ບໍ່ແມ່ນມັນລັກຫນີແລ້ວຫວະ ຫລືມັນຢູ່ໃສ ຈົວນ້ອຍ ? ພໍເວົ້າສຸດຄວາມ ຄາຖາກໍ່ຕອບ : ເອີ້ຂ້ອຍຍັງຢູ່ນີ້ ຈັກ ຫນ້ອຍຂ້ອຍຈະກັບເຂົ້າເຮືອນ ! ຜີຍາເຖົ້າຫລຽວເບິ່ງຈຶ່ງເຫັນ ວ່າ ແມ່ນຄາຖາທີ່ຊ່າງປາກ. ໂອຍ ! ຈັ່ງແມ່ນເວນເນາະຈົວນ້ອຍເອີຍ ໂລດມາຕົວະມາຕົ້ມກັນເຖິງປານນີ້, ກູໂລດເຊື່ອວ່າມຶງຍັງຢູ່ນີ້ ເບິ່ງ ດູ່ມຶງຊິຕົວະເກັ່ງປານໃດ ກູຊິໄລ່ນຳເບິ່ງຄັນຈັບໄດ້ນບອກວ່າ..ຣ!" ຜີຍາເຖົ້າທັງຮ້າຍທັງໂກດແນວນັ້ນແລ້ວກໍ່ເລີ່ມແລ່ນນຳຮອຍ ຂອງຈົວ ນ້ອຍໄປ. ມັນໄລ່ໄປໄລ່ໄປ ບໍ່ນານພຽງໃດກໍ່ຊິທັນຈົວນ້ອຍ ຍັບໆ ! ທັນໃດນັ້ນຜີຍາເຖົ້າກໍ່ຍຶດແຂນຂອງມັນອອກໃຫ້ບາກຍາວໆ ແລ້ວຢ່ອງ ໄປວ່າຈະກຳຄໍຂອງຈົວນ້ອຍແລ້ວບີບເອົາ. ຈົວນ້ອຍແລ່ນໄປຕໍ່ບໍ່ໄຫວ ອີກຈຶ່ງໂສເອົາຄາຖາອັນທີ່ສອງແກວ່ງໄປໃສ່ຜີຍາເຖົ້າ, ແລ້ວກໍ່ເວົ້າ ວ່າ :" ຂໍໃຫ້ຄາຖາຈົ່ງເກີດເປັນພູຫີນຂີ້ຊາຍເກີດຂຶ້ນຕັນຫນ້າຂອງຜີ ຍາເຖົ້າ " ທັນໃດນັ້ນຄາຖາກໍ່ເກີດເປັນພູສູງແລະຂີ້ຊາຍ ຕັດຂວາງ ລະຫວ່າງຜີກັບຈົວນ້ອຍນັ້ນໄວ້. ຜີນັ້ນກໍ່ພະຍາຍາມບີນໄລ່ຈົວນ້ອຍນັ້ນ ຕໍ່ໄປອີກ ແຕ່ມັນກໍ່ຍາກທີ່ສຸດ ເມື່ອຜີຍ່າງເທິງດິນຊາຍ ມັນກໍ່ເມື່ອຍ, ຢີນບາດໃດດິນຊາຍກໍ່ເຈື່ອນກັບທຸກບາດຕີນ, ເມື່ອຮອດບ່ອນ ເປັນພູ ແລ້ວຂີ້ຊາຍຍິ່ງເຈື່ອນຫລາຍກວ່າບ່ອນເປີນ ເຮັດໃຫ້ຜີຂຶ້ນໄປແລ້ວ ກໍ່ ກິ້ງລົງມາຕີນພູພ, ຈາກນັ້ນມັນກໍ່ເບື່ອນຂຶ້ນອີກເທື່ອແລ້ວເທື່ອເຫລົ່າ. ເວົ້າເຖິງຈົວນ້ອຍກໍ່ມີແຕ່ແລ່ນກັບແລ່ນຈົນຫົວຟັດຫົວຄອນ ແຄ່ງກໍ່ອ່ອນ

ມາຂາກໍ່ອ່ອນເຂົ້ານຳເລື້ອຍໆ.

ໃນທ້າຍສຸດຜືນນົກຂຶ້ນພົ້ນພູມນໄດ້ແລ້ວມັນກໍ່ຕະລູດລົງພູຢ່າງໄວ ບາງບ່ອນກໍ່ກິ້ງລົງ ເພື່ອໃຫ້ທັນຈົວນ້ອຍ ວ່າແໝ່ມັນກໍ່ໄລ່ມາ ໄລ່ມາ ຢ່າງໄວກວ່າເກົ່າຈົນຊິທັນອີຫລີ ຍັງໜ້ອຍດຽວຊິທັນຄີບເອົາຂາຂອງລາວ. ຈົວນ້ອຍເຫັນວ່າຕົນຊິຕົກອັນຕະລາຍແທ້ໆແລ້ວກໍ່ຂຽວຈົກເອົາຄາຖາໂຕທີ່ສາມແລ້ວບອກວ່າ :" ໃຫ້ເຈົ້າຈົ່ງກາຍເປັນແມ່ນ້ຳໃຫຍ່ໄພສານເຖີ້ນ !" ພໍແຕ່ຖົ້ມໄປບໍ່ນານຄາຖາກໍ່ເກີດເປັນແມ່ນ້ຳໃຫຍ່, ມີນ້ຳນອງໄຫລຫລັ່ງຄັບຝັ່ງຄັບເຝືອຍຂວາງຕັນໜ້າຂອງຜີມົດ. ແຕ່ປານນັ້ນຜີກໍ່ດີ້ນຣົນຊຸນສູ່ບໍ່ຈັກລອຍຈັກຢັ່ງຂ້າມແມ່ນ້ຳນັ້ນໃຫ້ພົ້ນແລ້ວ ກໍ່ໄລ່ຈັບຈົວນ້ອຍອີກຈົນຈຳວັດພູໃກ້ປ່າພຸ້ມ. ຈົວນ້ອຍຈົນຕາແຈກໍ່ຕີປະຕູວັດທັງຮ້ອງຂຶ້ນ : ຍາຄູເຮີຍ ! ຍາຄູ, ຊ່ອຍແດ່ !ໆ! ຜີໄລ່ຂ້ອຍມາຕາມຫລັງມາ ຊ່ອຍແດ່ !" ທັນໃດນັ້ນກໍ່ມີສຽງຂານ ມາຈາກທາງໃນປະຕູວັດວ່າ :" ເນ ! ເຫັນບໍ່ຂ້ອຍວ່າແລ້ວນາ ວ່າຢ່າໄປ ວ່າຢ່າໄປ !" ປານນັ້ນຍັງດັງຂຶ້ນການວ່າໂຕເກົ່າ ! ຮູ້ຈັກແລ້ວຕໍ່ບໍ່ດົນຄົນລວງຄວາມຜູ້ໃຫຍ່ບອກ, ມັນເປັນແນວນັ້ນແລ້ວ. ມາ ເຂົ້າມາພົໄວໆສ່າ ວ່າແລ້ວຍາຄູກໍ່ໄຂປະຕູໃຫ້ຈົວນ້ອຍເຂົ້າມາ. ແລ້ວກໍ່ເວົ້າຕໍ່ວ່າ :" ເຂົ້າມາໄວ ! ຂ້ອຍຈື່ປົນກົນຜີໂຕນັ້ນຄືນ ໃຫ້ເຈົ້າເບິ່ງເນີ !" ຈົວນ້ອຍເຖົງມາຈາກຜີເວັນເຂັ້ນຍາກປານນັ້ນມາຮອດວັດຄືນແຕ່ລາວກໍ່ຮ້ອງໄຫ້ຢ່າງຂວັນຄອນ, ຄູບາກໍ່ເວົ້າຕໍ່ :" ກໍ່ຫາກດີຄືກັນ, ໃຫ້ເຈົ້າຮູ້ແລ້ວຈື່ເປັນບົດຮຽນໄວ້ " ພໍວ່າແລ້ວກໍ່ຂຽວ ໄຂ

ປະຕູເຮືອນພາຈົວນ້ອຍເຂົ້າໃນແລ້ວໄປໄຂຝາຂຸມໃຕ້ດິນ ທີ່ເປັນບ່ອນ ສຳຫລັບມ້ຽນຜັກຢູ່ຫ້ອງຄົວກິນຄູບາບອກຈົວນ້ອຍລົງໄປລີ້ໃນຫັ້ນ ໃຫ້ ແຈບໆ.

ໃນເມື່ອຈົວນ້ອຍລົງໄປລີ້ໃນຂຸມພຽງບຶດດຽວພີ່ຍາເຖົ້າກໍນຳມາ ຮອດຫັ້ນແທນທີ່ເປັນມັນເຂົ້າມາຮອດເຮືອນຄົວແລ້ວກໍເປີດໄປ ທຸກບ່ອນ ທັງຊ່ອງຢ້ຽມຊອກຕາມຂອກຕາມແຄມເຮືອນນັ້ນ ຈົນບໍ່ເຫລືອບ່ອນໃດ ແລ້ວມັນກໍເວົ້າຢ່າງຮ້າຍວ່າ :" ຄູບາເຮີຍ ! ເດັກນ້ອຍຂອງເຈົ້າ ຢູ່ໃສ ?, ລາວໄປຫາ:ຫລອກລວງຂ້ອຍແລ້ວກໍແລ່ນປົບມາ ຄືຊິມາລີ້ຢູ່ ບ່ອນນີ້ມາ ! "

ຍາຄູ ບໍ່ທັນປາກທັນເວົ້າຫຍັງ ມີແຕ່ຍ່າງໄປຊອກ ເອົາເຂົ້າ ຝ້າງມາລ້າງເພື່ອມາ ແລ້ວຈະດຸຮັ້ດເຂົ້າໜົມປີ່ງອອນກິນ. ແລ້ວ ລາວຈິ່ງເວົ້າອອກຄວາມໜຶ່ງ :" ບໍ່ຮູ້ນຳໄດ໋ ! ເດັກນ້ອຍນັ້ນບໍ່ຢູ່ນີ້ ນ໋າ " ລາວຄອບຂ້ອຍແຕ່ວ່ານັ້ນພູນວ່າຈະເຂົ້າປ່າຫາເລາະ ເກັບ ໝາກໄມ້ໝາກຕອກໄປ, ແຕ່ປານນີ້ຍັງບໍ່ເຫັນລາວກັບມາເທື່ອ. ຄູ ບາຕອບແນວນັ້ນ.

" ຢ່າຕົວະຂ້ອຍໄດ໋ ! ລາວໄດ້ໄປຫລົບງານຫາຕົວະ ທາເຕັ້ນ ຂ້ອຍ, ແລ້ວລາວກໍກິນໝາກໄມ້ທີ່ຂ້ອຍຂົ້ວແດ່, ຕົ້ມແດ່ ນັ້ນຈົນໝົດ ກ້ຽງ ບັດແລ້ວກໍແລ່ນໜີມາຈອຍ ! ຂ້ອຍຮູ້ນ໋າ ວ່າລາວແລ່ນມາລີ້ຢູ່ ນີ້ !" ຍາຄູກໍຕອບວ່າ : ເອີ ! ຄົນເຈົ້າຫາກບໍ່ເຊື່ອຂ້ອຍ ກໍຊອກ ລອງເບິ່ງ, ຄັນຊອກເຫັນຈິ່ງວ່າລີ້ຢູ່ນີ້ ຄັນບໍ່ເຫັນແລ້ວກໍແລ້ວ, ເອົາ

ປາກຊອກກໍ່ຊອກໂລດດີ ! ຍາຄູທັງແຕ່ງເຂົ້າຟ່າງເຮັດເຂົ້າໜົມ, ປາກກໍ່ເວົ້າແບບເສີຍໆແນວນັ້ນຄືວ່າບໍ່ຮູ້ເລື່ອງ ທັງບໍ່ຢ້ານກົວຜີ ຍ່າເຖົ້າຈັກເມັດ, ຄັນລາວເຮັດແປ້ງແຕ່ງເຂົ້າໜົມໄດ້ແລ້ວກໍ່ເລີ່ມເອົາມາອົບແດ່ຈີ່ນແດ່ ຈົນເຮັດໃຫ້ຫ້ອງຄົວກິ່ນຫອມກຸ້ມກົ້ວດ້ວຍກິ່ນ ເຂົ້າໜົມ. ທັນໃດຜີຍ່າເຖົ້າກໍ່ຫູຕັ້ງດັງຕື່ນແລ້ວເວົ້າວ່າ : ຊາດ ແມ່ນຂ້ອຍໂຊກດີໄດ້ມາພໍ້ຍາມເຈົ້າເຮັດເຂົ້າໜົມແນວນີ້ ຂ້ອຍກໍ່ຢາກກິນລອງເບິ່ງວ່າມັນຊິແຊບຊ່ຳໃດ. ເບິ່ງແຕ່ໄດ້ຕອງກິ່ນຂອງມັນ ກໍ່ຊົງໜ້າແຊບໜ້ານົວພິລຶກ ! ຍາຄູຕອບວ່າ :

" ຂ້ອຍກໍດີໃຈຄືກັນ " ແຕ່ຂ້ອຍກໍ່ສົນໃຈແນວໜຶ່ງ ຢາກຖາມເຈົ້າລືມຄືຊິໄດ້ຕີ :" ຂ້ອຍໄດ້ຍິນວ່າເຈົ້າມີຄວາມສາມາດເລືອມຕົວເປັນແນວໃດກໍ່ໄດ້, ຢາກເຮັດໂຕໃຫຍ່ຂຶ້ນຫລືນ້ອຍລົງ, ເຮັດຂາອົງຂາດຽວ, ເຮັດໜ້າກ້ຽງໜ້າຈູມ ເອົາແຕ່ຄິດຢາກເຮັດ ແມ່ນເຮັດໄດ້ໝົດວ່າຊັ້ນ, ຄັນເຮັດເປັນແທ້ລອງເຮັດໃຫ້ຂ້ອຍເບິ່ງ ນຳແດ່, ບັດນີ້ແລ້ວຂ້ອຍຊິປັ້ນເຂົ້າໜົມປັ້ງຫອມນີ້ໃຫ້ເຈົ້າກິນນຳ " ໂອ ! ຊັ້ນກໍດີລະບໍ ! ຊັ້ນຍາຄູຊ່າງຮູ້ມາແຕ່ໃສ, ຂ້ອຍສາມາດເຮັດໄດ້ ທຸກຢ່າງຕາມເຈົ້າຢາກເຫັນ ແມ່ນແຕ່ປ່ຽນໂຕໃຫ້ປ່ອມລີຫອຍນ້ອຍຄືແກ່ນຜັກກາດແລ້ວພູດຜາດຂຶ້ນຊ້ຳຊາງຊ້ຳສູງກໍ່ໄດ້, ຜີຍ່າເຖົ້າເວົ້າ ອາງແນວນັ້ນ, ຈາກນັ້ນຍາຄູກໍ່ເວົ້າວ່າ :" ເອົາ ຂໍໃຫ້ເຈົ້າລອງ ເຮັດໃຫຍ່ຂຶ້ນ ! ໃຫ້ຂ້ອຍເບິ່ງ " ພໍວ່າແລ້ວກໍ່ເລີ່ມໃຫ້ຜີສະແດງ ໃຫ້ເບິ່ງ ທຳອິດຍາຄູເວົ້າຄ່ອຍໆອອກວ່າ :" ເລັດ ເຫັດ ເຫັດ !

ໃຫ້ເຈົ້າສູງຂຶ້ນ ໆ !

ສູງຂຶ້ນຈັກໄຊດີ !"

ພໍເວົ້າແລ້ວໂຕຂອງມັນກໍ່ໃຫຍ່ສູງຂຶ້ນໆຈົນຈຳເພດານ ແລ້ວກໍ່ຄົດໂຄ້ງເຂົ້າໆຈົນເຕັມຫອງນັ້ນ.

ຍາຄູເຫັນແລ້ວກໍ່ຢ້ານກົວທີ່ສຸດ ແຕ່ປານນັ້ນລາວກໍ່ເຮັດວາດຊົງແບບເສີຍໆຄືບໍ່ມີຫຍັງຢ້ານຫຍັງເປັນ ແລະບໍ່ແປກປະຫລາດຫຍັງຈາກນັ້ນລາວກໍ່ຄ່ອຍໆເວົ້າ : " ເລັດ ເຫັດ ເຫັດ !

ຈົ່ງໃຫ້ເຈົ້ານ້ອຍລົງ ໆ !

ແລ້ວນ້ອຍລົງຈັກໄຊ !"

ເວົ້າແນວນັ້ນແລ້ວ ຜີກໍ່ຫົດເຂົ້າໆ, ໃນທີ່ສຸດຕົວຂອງມັນກໍ່ນ້ອຍເຂົ້າໆຊ່ຳກັບຄູຄືນນ້ອຍໆ, ເຫັນແນວນັ້ນຍາຄູກໍ່ເວົ້າຄວາມເກົ່າບໍ່ເຊົາໂດຍບອກໃຫ້ຜີ :

" ເລັດ ເຫັດ ເຫັດ !

ໃຫ້ເຈົ້ານ້ອຍເຂົ້າ ໆ !

ແລ້ວນ້ອຍເຂົ້າຈັກໄຊ ໆ !

ຄັນຮອງແຕ່ຄວາມເກົ່າໃຫ້ນ້ອຍລົງໆແນວນັ້ນ ໂຕຜີກໍ່ນ້ອຍລົງໆຈັກໄຊຈົນໂຕມັນນ້ອຍລົງຊ່ຳເມັດໝາກຖົ່ວ, ແລ້ວໆຍາຄູກໍ່ເອົາບ່ວງມົດຄົດຈົນໂຕຜີນັ້ນຟ້ງຕຳພຸ້ນຕຳພີ້ຕາມຫອງ, ເຫັນວ່າມັນບໍ່ປ່ຽນໂຕໃຫຍ່ຄືນມາໄດ້ແນວນັ້ນຍາຄູກໍ່ດີໃຈຈົນຕົບມືພັບຜາ ຫົນາຈົນຕາເຈືອ, ບັດແລ້ວລາວກໍ່ຍ່າງໄປເອົາປ່ຽງເຂົ້າໜົມປ້ວນມາປາດແລ່ງໂພ່ງ, ບໍ່ສອງ ບໍ່

ສາມກໍຈັບເອົາໂຕຜີຊ່ຳແກ່ນໝາກຖົ່ວນັ້ນ ຍັດໃສ່ໃນປ່ຽງ ເຂົ້າຫນົມປັງ, ເຮັດຄັກໆແລ້ວເນາະກໍໂມ່ນເຂົ້າປາກຫຍ້ຳກິນຈວາບໆເຫັນວ່າແຫລກດີແລ້ວນ່ກໍໄປເອົານ້ຳຊາຮ້ອນມາຫຼູບໃສ່ແລ້ວກິນລົງທ້ອງ ໄປຈ້ອຍ. ຕັ້ງແຕ່ນັ້ນມາ ວັດພູໃກ້ປ່າບໍ່ເຫັນມີຜີ ເຫລືອແຕ່ສັດດີໆ ກັບແມວພັນໄມ້, ທັງບໍ່ອິດບໍ່ໄຮ້ໝາກໄມ້ຕາມດົງທັງພະທັງສົງກໍ່ ຢູ່ສະບາຍຫາຍຮ້ອນ.

22/7/94.





# ນິທານ ມາເລເຊັຍ

## ເຈົ້າຊີວິດ ກັບ ສາມອ້າຍອີ້ລັກ

ແຕ່ກ່ອນໆພຸ້ນ ຍັງມີລາຊາອານາຈັກໜຶ່ງຊື່ວ່າ ບາວາ ອັງກິນ ມີເຈົ້າຊີວິດອົງໜຶ່ງປົກຄອງມາຢ່າງນານປີ, ເມື່ອເຖົ້າແກ່ ເຖິງສະຫວັນນະຄົດລົງແລ້ວ ອົງລາຊາກຸມມານ ໄດ້ຂຶ້ນສະເຫວີຍບັນລັງແທນລາຊາບິດາ.

ເມື່ອລາຊາບິດາສ້ຽງພະຊົນແລ້ວນັ້ນ ເຈົ້າຊາຍກໍມີຄວາມເສົ້າໂສກສະຫລົດໃຈ ບໍ່ຢາກໄປເລາະໄປທ່ຽວແຫ່ງໃດ, ເກີດເປັນມື້ແຕ່ໄວ້ທຸກໄວ້ໂສກ ແລ້ວເລາະໄປມາພຽງຂອບເຂດ ໃນເຮືອນ ຫລືນອນຂຶດຢູ່ໃນຫ້ອງ, ພວກເສນາຂາຫລວງ ໄພ່ຟ້າລາດຊະດອນຢາກຟັງການໂອວາດຂອງເຈົ້າຊີວິດຄົນໃໝ່ ລາດຊະດອນກໍພາກັນ ໄປເຕົ້າຢູ່ໂຮງຊຸມນຸມຂາງວັງຫລວງທີ່ພະອົງທົງສະຖິດຢູ່ ແຕ່ໄປເທື່ອໃດກໍໄດ້ຖ້າຈົນເມື່ອຍກໍບໍ່ເຫັນສະເດັດອອກມາເລີຍ ແລະກ່າວຈາປາໄສຫຍັງ ທຸກໆມື້ເມື່ອຖ້າເມື່ອຍເຂົ້າຈາກເລີກລາເມືອບ້ານໃຜມັນ. ບໍ່ສະເພາະເທົ່ານັ້ນຕະຫລອດເຖິງ ນາຍົກ ທັງລັດຖະບານ ທະຫານຕຳຫລວດ ຕ່າງກໍຄອງຄອຍຢາກເຫັນສະເດັດອົງໃໝ່ ຈະມີ ດຳລັດຢ່າງໃດໜຶ່ງອອກມາ, ໃຜໆກໍຕ້ອງການຢາກຮູ້ຢາກເຫັນ ແຕ່ແລ້ວ

ເຈົ້າຊີວິດອົງໃໝ່ນັ້ນກໍຍອມອອກຈາກເຮືອນແລະບໍ່ສົນນຳ ວຽກບ້ານການເມືອງຫຍັງເລີຍ.

ຢູ່ມາວັນໜຶ່ງນາຍົກລັດຖະມົນຕີໄດ້ຮຽກບັນດາລັດຖະມົນຕີພ້ອມກັບນາຍພົນຜູ້ທີ່ສຳຄັນທຸກທ່ານມາປະຊຸມກັນທີ່ຫໍປະຊຸມຫລວງຂອງ ສຳນັກງານນາຍົກເອງ.

ເມື່ອເຫັນທຸກທ່ານມາຮອມກັນຕາມການນັດໝາຍ ປະຊຸມແລ້ວນາຍົກໄດ້ກ່າວວ່າ :" ບັນດາທ່ານທີ່ມີກຽດມາຮ່ວມການປະຊຸມທີ່ຈັດຂຶ້ນມານີ້ໄດ້ມີຈຸດປະສົງອັນດຽວ, ຈຸດປະສົງນັ້ນຄື : ພວກເຮົາໄດ້ມີຄວາມແປກໃຈຫລາຍຕໍ່ເຈົ້າຊີວິດອົງໃໝ່, ພວກເຮົາບໍ່ເຄີຍເຫັນພະອົງມາປະກົດຕົວໃນລາຊາສຳນັກ ຫລືມາພົບປະກັບນາຍົກແລະບັນດາລັດຖະມົນຕີຈັກເທື່ອ. ໃນກອງປະຊຸມນີ້ ພວກເຮົາຈຶ່ງພ້ອມກັນ ຫາລືເບິ່ງວ່າ, ຄວນເຮັດແນວໃດຈຶ່ງຈະດີ ທ່ານລັດຖະມົນຕີຍັງກ່າວຕໍ່ : ພະອົງບໍ່ໄດ້ປະຕິບັດໜ້າທີ່ປົກຄອງໄພ່ຟ້າລາຊະດອນຂອງພະອົງໄດ້" ຈາກນັ້ນລັດຖະມົນຕີຫລາຍໆທ່ານກໍຫາລືກັນກ່ຽວກັບເລື່ອງນີ້. ນາຍທະຫານຜູ້ໜຶ່ງກ່າວອອກ :" ບາງທີອາດເປັນຍ້ອນພະບິດາ ຂອງເຈົ້າຊີວິດໃໝ່ຂອງພວກເຮົາສິ້ນພະຊົນແລ້ວເກີດມີຄວາມອຸກອັ່ງຄັ່ງແຄ້ນຍັງບໍ່ເລີກບໍ່ແລ້ວເທື່ອກໍເປັນໄດ້ " ທ່ານນາຍົກກໍຕອບວ່າ :" ເລື່ອງເຈັບເລື່ອງຕາຍນັ້ນມັນຜ່ານໄປແລ້ວຕັ້ງສອງເດືອນກວ່າແລ້ວ ພະອົງຄືນບໍ່ສາມາດລົດລະປະຖິ້ມຄວາມເສົ້າໂສກໂສການັ້ນໄດ້ບໍ່ຫື! "ທ່ານທັງຕອບທັງຖາມໄປແລ້ວເວົ້າຕໍ່ ຄົນບໍ່ລົດລະຄວາມເສົ້າ ໂສກ

ໄດ້ຕົວພະອົງກໍຊ້ຳບໍ່ສະແຫວງຫາວິທີຜ່ອນກາຍຄາຍອາລົມຫຍັງ ຍາມໃດກໍ່ມັກໝົ່ນຢູ່ແຕ່ເຮືອນ, ເຮັດແນວນັ້ນແຮງເພີ່ມແຕ່ຄວາມອຸກອັ່ງ ນອນບໍ່ເປັນຫລັບຂັບບໍ່ເປັນມ່ວນລະບໍ. ບັດແລ້ວກໍ່ມີຜູ້ຫນຶ່ງຖາມ :" ຂຸນພວກເຮົາຈະພາກັນເຮັດແນວໃດ ?" ຢູ່ມາຈັກໜ່ອຍລັດຖະມົນຕີຜູ້ອື່ນກໍເອີ່ຍຄຳສະເຫນີອື່ນ " ຂຸນແກ້ແບບນີ້ຊຸບດີກວ່າຫວະ ! ເຮົາພ້ອມກັນຍົກທ່ານນາຍົກລັດຖະມົນຕີ ຂຶ້ນເປັນເຈົ້າຊີວິດເລີຍແລະເປັນປະມຸກລັດພ້ອມນັ້ນກໍ່ໄດ້ຕໍ່" ແລ້ວຜູ້ຫນຶ່ງກໍເວົ້າອອກ :" ເອົາ ! ຂຸນເຈົ້າຊີວິດຜູ້ໃຫມ່ນັ້ນເດຈະເຮັດແນວໃດ ?" ນາຍທະຫານຜູ້ຫນຶ່ງກໍ່ຕອບ :" ໂອຍ ! ເຮົາຮັບປະກັນໃຫ້ໂລດນໍ່າ !" ເຈົ້າຊີວິດໃຫມ່ບໍ່ອອກບ້ານອອກເຮືອນແນ່ນອນຈົກເຮົາປົດເຮົາຈົ່ງລາວກໍ່ຈະໄປຮູ້ເລື່ອງຫຍັງນໍ່າ, ເຮົາແຕ່ງເອົາຜູ້ໃຫມ່ຂຶ້ນແທນແລ້ວ ເຈົ້າຊີວິດໃຫມ່ນັ້ນກໍ່ປະລາວໄວ້ຫນ້າລ້າງນັ້ນໃຫ້ສືບໃຫ້ຊານຳແລ້ວກໍແລ້ວລະບໍ !" ແລ້ວທ່ານນາຍົກກໍເວົ້າວ່າ :" ເລື່ອງນີ້ໃຫ້ພວກທ່ານພິຈາລະນາ ລຶກ ໆ ເບິ່ງຕື່ມກ່ອນ ຂ້ອຍບໍ່ສາມາດປະຕິເສດຄຳເຫັນຂອງໃຜ, ທຸກຄົນລ້ວນແຕ່ມີຄວາມຄິດດີໆ ຍອມວ່າທຸກຄຳເຫັນລ້ວນແຕ່ສະແດງ ເຖິງຄວາມຫ່ວງໃຍຕໍ່ສາຕາກຳຂອງບ້ານເມືອງຢາກໄດ້ຜູ້ນຳທີ່ເຮັດແທ້ທຳຈິງທັງຫາວຕັ້ນຂຶ້ນນຳພາ, ບໍ່ຢາກໄດ້ຜູ້ຢູ່ຊື່ໆມາປົກຄອງແຕ່ຢ່າງໃດກໍ່ໃຫ້ພິຈາລະນາລະອຽດຖີ່ຖ້ວນກ່ອນ, ຍັງຫລາຍທ່ານບໍ່ທັນອອກຄຳຄິດເຫັນຫຍັງເທື່ອ, ກອງປະຊຸມນີ້ໂຈະໄວ້ຊໍ້ານແລ້ວຮອດວັນ ທຳອິດຂອງຕົ້ນອາທິດຫນ້າສະເຫນີໃຫ້ທຸກທ່ານມາປະຊຸມກັນໃຫມ່ອີກ..."

ເມື່ອທ່ານນາຍົກກ່າວແນວນັ້ນແລ້ວກອງປະຊຸມກໍເລີກລາໄປ.

ມາເວົ້າເຖິງເຈົ້າຊີວິດໃໝ່ນັ້ນ ພະອົງກໍຍັງຊອນຕົວຢູ່ ຫ້ອງເຮືອນຂອງພະອົງຢ່າງເສີຍເມີຍ ແລະບໍ່ມີໃຜຈິ່ງນຳເອົາຂ່າວ ຄາວບ້ານເມືອງ, ເລື່ອງເດືອດແຄ້ນແຫວນເສຍຫຍັງມາເລົ່າສູ່ຟັງ, ກະທັ້ງຮອດແຜນການທີ່ກອງປະຊຸມຄະນະລັດຖະບານທີ່ຜ່ານໄປນັ້ນພະອົງກໍບໍ່ຮູ້ບໍ່ເຫັນຕ້ອງຫຍັງ ທັງບໍ່ຮູ້ວ່າເຂົາຈັດການປະຊຸມຈ້ຳ.

ຢູ່ມາວັນໜຶ່ງ ມີຜູ້ໜຶ່ງກາຍມາຂ້າງພະລາຊາວັງຫລວງ ຂອງພະອົງ, ຜູ້ກາຍມາໄດ້ຮ້ອງຈ່າວສົ່ງໃດສົ່ງໜຶ່ງ, ເມື່ອຟັງຄັກໆ ກໍເປັນສຽງຍິງເຖົ້າ, ແຕ່ພະອົງບໍ່ທັນຟັງເຂົ້າໃຈວ່າ : ຍິງເຖົ້າ ນັ້ນຈ່າວເລື່ອງຫຍັງ, ພະອົງພຽງແຕ່ຄຶດວ່າ : ຄົງບໍ່ເປັນເລື່ອງ ຮ້າຍອ້າຍໂຈນຫຍັງ ຍ້ອນວ່າຜູ້ຍິງບໍ່ເຄີຍເປັນໂຈນ, ບໍ່ເຄີຍເປັນເຜັດຊະຄາດ. ຄົນຢ່າງເຖົ້າແກ່ຊິແມ່ນເລື່ອງຂາຍຮາກຫ້ວານການປ້າລະຕິບໍ ? ພະອົງຄິດແນວນັ້ນແລ້ວກໍອອກໄປຊ່ອງປ່ອງຢ້ຽມເບິ່ງ. ພໍດີພະອົງປໍ່ລົດໜ້າທີ່ປ່ອງຢ້ຽມ ຍິງເຖົ້ານັ້ນກໍຮ້ອງອີກ : " ເດີ ! ເດີ ! ພະຫຍາເດີ ! ໃຜປາກຮູ້ປາກຫລັກໃຫ້ມາຊູ້ພະຫຍານໄປໃສ່ ຕົ້ນໂຕເດີ ! "

ພະອົງຕັ້ງແຕ່ປະສູດມາກໍຫາເຫັນເທື່ອດຽວນີ້ຄົນການທ້ານຜູ້ ມາຫາຈ່າວຂາຍພະຫຍາ ປັ້ນຍາ. ເຊິ່ງບໍ່ຮູ້ວ່າພະຫຍາອັນໃດແທ້ ແຕ່ຄົນແມ່ນພະຫຍາປັ້ນຍາແລ້ວ ມັນຕ້ອງແມ່ນແນວດີ, ຄືບໍ່ເຫັນມີ ພະຫຍາໂງ່ຈັກເທື່ອບາ ! ພະອົງທັງຄິດໄປຄິດກັບຢູ່ຜູ້ດຽວ. ທັນໃດນັ້ນ

ຄວາມເສົ້າໂສກເອົ້າອັ້ງໃນໃຈພະອົງກໍ່ເຫີຍຫາຍໄປທັນທີ. ພະອົງຕຶກລົງປົງໃຈຈະຊື້ພະຫຍາປັນຍານັ້ນມາໃສ່ຕົນໂຕ. ວ່າແລ້ວກໍ ພາຜູ້ໃກ້ສິດພະອົງໄປຊື້ພະຫຍານັ້ນນຳຍິງເຖົ້າ. ຜູ້ໃກ້ສິດກັບພະອົງ ໄປຮອດກໍ່ເຫັນຍິງນັ້ນບໍ່ທັນເຖົ້າປານໃດ, ຜົມຂອງເພິ່ນເປັນສີເຫລືອມສີໄຄຂຽວ ແລະມີໄມ້ຄອນເທົ້າອັນໜຶ່ງ. ເຈົ້າຊີວິດຍິ້ມຈັກໜ້ອຍແລ້ວຖາມ :" ຍານາງເອີຍ ! ແມ່ນເອົາຫຍັງເດີມາຂາຍ ?" ຍິງເຖົ້າຕອບ :" ກໍ່ມີແຕ່ພະຫຍາປັນຍານັ້ນແລ້ວ ! ອັນອື່ນກໍ່ບໍ່ໄດ້ ເອົາຫຍັງມາຂາຍ !" ຊື້ພະຫຍານັ້ນແມ່ນ ພະຫຍາອັນໃດກັນ ? ເຈົ້າຊີວິດຖາມອີກ. ຍິງເຖົ້ານັ້ນ : ກະນີ້ເດ :" ຕື່ນຂື້ນ ດີກວ່າ ນອນຢູ່ !

ນັ່ງດີກວ່າ ຕື່ນຂື້ນ !

ຢືນດີກວ່າ ນັ່ງຢູ່ !

ຍ່າງໄປດີກວ່າ ຢືນຢູ່ລ້າ"

ກໍ່ມີແນ່ນອນແລ້ວພະອົງເອີຍ ! ຍິນແລ້ວພະອົງກໍແປກໃຈ. ບໍ່ ມັນແມ່ນພະຫຍາແທ້ໄດ້ນໍ ! ຊື້ລາຄາເດີຂາຍຊຳໃດ ? ເຈົ້າຊີວິດຖາມ. ແມ່ເຖົ້າຕອບ : ລາຄາພຽງ 1 ກໍປີ. ຈາກນັ້ນພະອົງ ກໍເອົາເງິນມາຈ່າຍໃຫ້ຍິງເຖົ້າ ແລ້ວກໍຮັບເອົາພະຫຍານັ້ນ, ສ່ວນຍິງເຖົ້າໄດ້ຂາຍແລ້ວກໍຍ່າງຈາກໄປລາງຊາວັງ ດຸ່ງເດີນໄປໜ້າຕໍ່.

ພະອົງຊື້ພະຫຍາມາໄດ້ແລ້ວກໍກັບຄືນເຂົ້າໃນຫ້ອງນອນ. ທ້າວວ່າຈະນອນລົງກໍ່ສະເດືອກຕົວຂື້ນ ເມື່ອຄິດເຖິງພະຫຍານັ້ນ. ພະອົງເອົາມາທ່ອງໃສ່ຕົວໃຫ້ຈື່ :" ຕື່ນຂື້ນ ດີກວ່ານອນຢູ່ !

ນັ່ງດີກ່ວາ ຕື່ນຂົ້ນ !

ຢືນ ດີກ່ວາ ນັ່ງຢູ່ !

ຍ່າງໄປດີກ່ວາ ຢືນລ້າໆ "

ທ່ອງໄປທ່ອງມາຈົນຈື່ແລ້ວມາຄິດ : ບໍ່ ! ຄືວ່າມາຖືກ ຕົນເອງແທ້ ! ຊັ້ນເຮົາຊິນອນເຮັດຫຍັງ. ລອງລຸກຂຶ້ນເບິ່ງນໍາ, ວ່າແລ້ວພະອົງກໍລຸກຂຶ້ນ, ລຸກແລ້ວໄປເອົາເຄື່ອງເກົ່າໆຊຸດໜຶ່ງມານຸ່ງ, ເມື່ອນຸ່ງແລ້ວກໍຍ່າງໄປ, ພະອົງໄດ້ລອງຍ່າງອອກນອກລາຊາວັງໃນຍາມກາງຄືນນັ້ນເບິ່ງ. ພະອົງຍ່າງຊ່ຳໆໄປຕາມຮ່ອມມືດໄປຕາມໄປປະກົດໄດ້ຍິນສຽງ, ເມື່ອຍິນສຽງພະອົງກໍຮູ້ວ່າຕົນໄປພໍ້ກັບເຈົ້າຂອງສຽງໂພດແລ້ວຈົນເກືອບຕຳເອົາເຂົາຍ້ອນມັນມືດ, ພະອົງຢຸດ ແລ້ວຈອບເບິ່ງຈິ່ງເຫັນວ່າມີ 3 ຄົນ, ແລະຜູ້ໃດກໍໃສ່ຊຸດສີດຳ ໝົດໂຕ. ພະອົງລໍຟັງສຽງລົມກັນຂອງສາມຄົນນັ້ນວ່າເຂົາເຈົ້າ ເຮັດຫຍັງກັນ, ເມື່ອຟັງຄັກໆກໍຮູ້ວ່າ : ສາມຄົນນັ້ນແມ່ນໂຈນ. ປານນັ້ນລາວກໍ ຍັງສືບຕໍ່ລໍຟັງຢູ່ອີກ, ທັນໃດລາວກໍສູດມົນອອກຄ່ອຍໆ :

ສອງຫົວຄິດ ຍັງດີກ່ວາຫົວດຽວ !

ສາມຫົວຄິດ ຍັງດີກ່ວາ ສອງຫົວ !

ສີ່ຫົວຄິດ ຍັງດີກ່ວາ ສາມຫົວ "

ມີຜູ້ໜຶ່ງໃນໂຈນສາມຄົນນັ້ນເວົ້າ : " ດີແລ້ວ ! ພວກເຮົາມີ ສາມຫົວຄິດແລ້ວແຕ່ຍັງບໍ່ດີຊ້ຳກັບມີສີ່ຫົວຄິດ, ຊັ້ນແມ່ນໃຜນໍາຊິມາເປັນຫົວຄິດທີສີ່ !" ເມື່ອຜູ້ນັ້ນເວົ້າສຸດ, ເຈົ້າຊີວິດກໍຄ່ອຍຊັບໆເຂົ້າໄປ ໃກ້

ເຂົາແລ້ວເວົ້າຂຶ້ນ :" ຂ້ອຍເປັນຜູ້ທີ່ສີ່ ກະລຸນາໃຫ້ຂ້ອຍເຂົ້າ ນຳພວກເຈົ້າ ! ຂ້ອຍຈະເຮັດທຸກອັນທຸກແນວໃຫ້ດີ " ພວກເຂົາ ກໍກ່າວຕອບ :" ໄດ້ ! ດີຫລາຍ " ເຈົ້າໃຫ້ເປັນຜູ້ຫນຶ່ງໃນໝູ່ຂອງພວກເຮົານີ້ " ແລ້ວເຈົ້າຊີວິດກໍຖາມຂຶ້ນ :" ຊັ້ນພວກເຈົ້າ ເຮັດວຽກຫຍັງກັນແທ້ ? " ພວກຂ້ອຍແມ່ນໂຈນ " ຫນຶ່ງໃນພວກ ໂຈນຕອບຂຶ້ນ, ພວກຂ້ອຍເປັນໂຈນຫາລັກນ້ອຍລັກໃຫຍ່ ບໍ່ຈັກໄກ່ ຈັກກາລັກຮອດໝາຮອດແໝ ມາໄດ້ຫລາຍປີແລ້ວ, ແຕ່ກໍບໍ່ຮັ່ງບໍ່ມີຫຍັງ.

ເມື່ອຜູ້ຫນຶ່ງເວົ້າແນວນັ້ນອອກ ຜູ້ຕໍ່ໄປກໍສອຍຂຶ້ນ, ລາວຫລຽວໄປຫາເຈົ້າຊີວິດແລ້ວເວົ້າ :" ຊັ້ນໃຫ້ເຈົ້າຄິດຫານຳເບິ່ງ ຊິເຮັດຫຍັງ ລັກຫຍັງໄດ້ຈັ່ງຊິຮັ່ງມີໄວໆໄດ້ ?" ດີຫລາຍ ! ເຈົ້າຊີວິດຕອບ. ຕາມຂ້ອຍຄິດເບິ່ງນີ້ ຄັນຢາກຮັ່ງມີໄວໆກໍຕ້ອງໄປຫາລັກຂອງຫີນຄ່າລາຄາຫລາຍ, ຂອງຫີນຄ່າລາຄາແພງໆນັ້ນແມ່ນຢູ່ ຕຶກຫ້ອງການນາຍົກລັດຖະມົນຕີພຸ້ນ " ເຈົ້າຊີວິດເວົ້າຮອດນີ້ພວກໂຈນກໍເວົ້າດີແທ້ ! ເອົາຊັ້ນພາກັນໄປທີ່ຫັ້ນເທາະ !" ເຈົ້າຊີວິດພັດອ້າງວ່າກ່ອນທີ່ພວກເຮົາຈະໄປລົງມືເຊັ່ນນັ້ນ. ເຮົາຄິດແນວນີ້ ບາງທີຄວາມຄິດເຮົານີ້ອາດດີຫລາຍ, ທຳອິດຄວນເບິ່ງວ່າພວກເຮົານີ້ ແຕ່ລະຄົນມີຜູ້ຊຳນານຫຍັງແດ່, ຮູ້ຄວາມຊຳນານຂອງກັນແລະກັນດີແລ້ວ ຈຶ່ງວາງແຜນການໃຫ້ດີກ່ອນການຈະລົງມືເຮັດສິ່ງໃດຫນຶ່ງ " ຜູ້ຫນຶ່ງກໍສະເຫນີຕົວວ່າ :" ຂ້ອຍຊຳນານທີ່ເຮັດໃຫ້ຄົນນອນແຈບ" ຜູ້ທີ່ສອງເຮົາສາມາດໄຂກະແຈທຸກແນວໄດ້ " ຜູ້ທີ່ສາມ :" ເຮົາ ສາມາດ

ຢຸດສຽງໝາເຫົ່າໄດ້ " ແລ້ວຫົວໜ້າໂຈນຖາມເຈົ້າຊີວິດວ່າ : " ຊຸມເຈົ້າໄດ້ຊຳນານຫຍັງ ?" ຂ້ອຍສາມາດເຮັດໃຫ້ຜູ້ຕາຍແລ້ວ ຄືນມາໄດ້ " ເຈົ້າຊີວິດສະເໜີຕົນແນວນັ້ນ, ດີຫລາຍ !ໆ! ພວກໂຈນທັງສາມທັງເວົ້າຍ້ອງທັງຫົວຊຶ່ມ.

ເມື່ອໂຈນທັງສີ່ໄດ້ໄປເຖິງຫ້ອງການນາຍົກລັດຖະມົນຕີ. ຄາວນັ້ນທ່ານນາຍົກແລະບັນດາລັດຖະມົນຕີແລະນາຍທະຫານຊັ້ນສູງຫລາຍທ່ານຍັງຈັດການປະຊຸມກັນຢູ່, ການປະຊຸມຄັ້ງນີ້ ຈຸດປະສົງຕົ້ນຕໍແມ່ນສືບຕໍ່ພິຈາລະນາບັນຫາຂອງເຈົ້າຊີວິດອົງໃໝ່ ເຊິ່ງການປະຊຸມ ຄັ້ງກ່ອນນີ້ຍັງບໍ່ສາມາດລົງຄຳເຫັນອັນເດັດຂາດຫຍັງໄດ້. ເທື່ອນີ້ບ່ວາ ດຸເດືອດຫລາຍ. ຜູ້ເຂົ້າຮ່ວມປະຊຸມຕ່າງກໍມີຄຳເຫັນຈົນລົບໄຂ່ວ ໃນທີ່ສຸດທ່ານນາຍົກໄດ້ສະຫລຸບຄວາມເຫັນທັງມວນນັ້ນແລະບັນທຶກຄຳຕົກລົງອັນເດັດຂາດໃສ່ເຈ້ຍໃບໜຶ່ງວ່າ :" ເຈົ້າຊີວິດຄົນໃໝ່ຕ້ອງລາຈາກບັນລັງຢ່າງເດັດຂາດ !"

ຢູ່ດ້ານນອກຂອງຕຶກສຳນັກງານຂອງນາຍົກ ເຈົ້າຊີວິດພວມຈັດການຈະຂະໂມຍຢູ່ຢ່າງຄຶກຄັກ, ທຳອິດໄດ້ສັ່ງໃຫ້ຫົວໜ້າໂຈນວ່າ : ເຮັດໃຫ້ເຂົາທຸກຄົນນອນຫລັບສາ !" ວ່າແລ້ວຫົວໜ້າໂຈນກໍຈົ່ມມົນຄາຖາແລ້ວເປົ່າຮາໄປໃສ່ຕຶກສຳນັກງານນັ້ນ, ລາວເປົ່າພູ່ໃສ່ ຕຶກເຈັດບາດ ບໍ່ພໍຄາວ ທ່ານນາຍົກແລະທຸກຄົນທີ່ມາຮ່ວມປະຊຸມກໍ ຫາວແລ້ວກໍຫລັບນອນໂກນຂອດໆໝົດ, ເມື່ອເຫັນວ່າເຂົານອນ ແຈບຈົມແລ້ວນໍ ອ້າຍໂຈນຜູ້ທີ່ສອງກໍຈົ່ມມົນຄາຖາພູ່ຮາໃສ່ກະແຈ ປະຕູໃຫຍ່,

ໂຈນຜູ້ທີ່ສາມກໍ່ຈົ່ມມົນຄາຖາເປົ່າພູ່ໃສ່ໝາເຝົ້າຍາມຂອງທ່ານນາຍົກ ບໍ່ນານສຽງເຫົ່າຂອງໝາກໍ່ມິດງຽບ, ປະຕູໃຫຍ່ຖືກໄຂອອກ ຈ່າງ ປ່າງ, ຫົວໜ້າໂຈນເວົ້າ : ທຸກຢ່າງຮຽບຮ້ອຍແລະກຽມຕົວ ເຂົ້າ ໄປໄດ້ !

ໂຈນທັງ 4 ເຊີນເຈົ້າຊີວິດຮ່ວມຢູ່ນຳ ກໍ່ພາກັນລູ່ ເຂົ້າໄປ ໃນຫ້ອງປະຊຸມແລະຫ້ອງການທຸກຫ້ອງ, ເຂົ້າໄດ້ພົບຫລາຍແນວ ທີ່ ເປັນຂອງມີຄ່າ, ຄົນເຫັນແນວມີຄ່າອັນໃດ ເຂົ້າກໍ່ໄປເກັບເອົາ ມາ ຮວມກັນຈົນເປັນກອງບັກໃຫຍ່.

ກ່າວເຖິງເຈົ້າຊີວິດຮ່ວມເປັນໂຈນດ້ວຍ ກໍ່ເຂົ້າໄປໃນທີ່ປະຊຸມ ມຸ່ງໜ້າໄປຫາໂຕະທີ່ນາຍົກນັ່ງຫ້ວງນອນຫລັບຢູ່. ໃນທັນໃດນັ້ນ ລາວ ໄດ້ເຫັນເຈ້ຍແຜ່ນໜຶ່ງທີ່ຂຽນວ່າ :" ເຈົ້າຊີວິດຄົນໃໝ່ຕ້ອງ ລາ ຈາກບັນລັງຢ່າງເດັດຂາດ !" ລາວຂຽວຈັບເອົາເຈ້ຍແຜ່ນທີ່ ຂຽນ ຄຳສັ່ງນັ້ນມາແລ້ວຫ້ວງຂັນ :" ໂຫ ! ຜູ້ເປັນທີ່ປຶກສາໜ້າເຊື່ອຖື ແລະໄວ້ໃຈຂອງຂ້ອຍພວມວາງແຜນການຈະໂຄ່ນລົ້ມຂ້ອຍຕ່ວານີ້ !"

ຈາກນັ້ນໄປ ເຈົ້າຊີວິດໄດ້ຮຽກໂຈນທັງສາມມາໂຮມກັນ ແລ້ວ ໄຈ້ເບິ່ງເຄື່ອງທີ່ເຂົ້າເຈົ້າລັກມາໄດ້ວ່າມີຫຍັງແດ່, ເຈົ້າຊີວິດເອົາ ເຄື່ອງນັ້ນມາປັນເປັນສາມພູດໃຫ້ເທົ່າກັນ ແລ້ວເອົາໃຫ້ໂຈນທຸກຄົນ. ບັດຕໍ່ໄປເຈົ້າຊີວິດກໍ່ຈັບເອົາຂົນນົກມາປັກໃສ່ໃນຜ້າພັນຫົວຂອງແຕ່ລະ ຄົນຈົນໄຂ່ວແລະເພິ່ນເອງກໍ່ເກັບເອົາອັນໜຶ່ງມາມ້ຽນ ໄວ້ຢ່າງດີ, ເມື່ອປັນເຄື່ອງຮຽບຮ້ອຍແລ້ວ ໂຈນທັງສີ່ກໍ່ອອກຈາກທີ່ປະຊຸມ ນັ້ນໜີ

ໄປ.

ໃນເຊົ້າຂອງມື້ຕໍ່ມາ ເຈົ້າຊີວິດໄດ້ແຕ່ງຕົວໃນສຸດ ກຽດຕິສັກ ພະມະຫາກະສັດ ເມື່ອກຽມຄົບແລ້ວກໍ່ສະເດັດຕົວເຖິງຫ້ອງ ປະຊຸມຫລວງຕຶກລັດຖະສະພາ. ການປະກົດຕົວຂອງເຈົ້າມະຫາຊີວິດ ໃນແຖ່ນຄຳຂອງທີ່ປະຊຸມຫລວງຄັ້ງນີ້ ເຮັດໃຫ້ນາຍົກແລະບັນດາ ລັດຖະມົນຕີເກີດຄວາມຕົກຕະລຶງ, ຫລາຍຄົນກໍ່ມີການວາດກົວ ວ່າມີເລື່ອງຫຍັງ.

ເຈົ້າຊີວິດໄດ້ຮຽກເຖິງຊື່ຂອງນາຍົກແລ້ວຖາມວ່າ :" ນາຍົກ ດຽວນີ້ສະພາບການບ້ານເມືອງຂອງພວກເຮົາມັນເປັນແນວໃດ ? "

ທ່ານນາຍົກກໍ່ຕອບ :" ໂດຍ ! ພະອົງມະຫາຊີວິດ, ສະພາບການບ້ານເມືອງເຮົາມີຄວາມສະຫງົບທຸກຢ່າງ ປະຊາຊົນມີຄວາມ ຢູ່ເຢັນເປັນສຸກ, ບັນລັງຂອງພະອົງກໍ່ມີຄວາມສັນຕິສຸກ ບໍ່ມີຄວາມເຄັ່ງແຄ້ນແໜ້ນໃຈຫຍັງພະອົງ !"

ເຈົ້າຊີວິດ ຍິ້ມຫົວຈັກໜ້ອຍແລ້ວເວົ້າ :" ແມ່ນອີຫລີບໍ່ ..! ຂ້ອຍພັດຮູ້ວ່າບ້ານເມືອງເຮົາຍັງມີໂຈນ, ໂຈນໃຫຍ່ແທ້ມີ 3 ຄົນ, ດຽວນີ້ໃຫ້ນາຍົກຮຽກປະຊາຊົນທັງໝົດມາໂຮມທີ່ນີ້ເບິ່ງ !"

ທ່ານນາຍົກມີຄວາມຢ້ານກົວຈົນຂົນຫົວພອງ ທີ່ໄດ້ຍິນເຈົ້າຊີວິດວ່າແນວນັ້ນ. ໃນທັນໃດກໍ່ສັ່ງໃຫ້ຄະນະບໍລິຫານງານທຸກທ່ານຮຽກໃຫ້ປະຊາຊົນພົນລະເມືອງມາເຕົ້າໂຮມໃນສຳນັກງານ ຂອງນາຍົກນັ້ນຕາມຄຳສັ່ງການຂອງເຈົ້າຊີວິດ.

ເມື່ອປະຊາຊົນມາໂຮມກັນຢ່າງຄົບຫນ້າໄຂ່ວຕາກັນແລ້ວ ເຈົ້າຊີວິດກໍ່ຢ່າງລົງໄປແລ້ວຊີ້ຕົວໂຈນໃຫຍ່ທັງສາມວ່າ :" ເນ ! ຜູ້ນີ້, ຜູ້ນັ້ນ, ກັບຫມໍ້ພຸ້ນ ! ແມ່ນໂຈນໃຫຍ່ !" ໃຫ້ນາຍົກສັ່ງການ ເອົາໂຈນໃຫຍ່ທັງສາມນັ້ນໄປຂັງຄຸກແລະປະໄວ້ຈົນໃຫ້ຕາຍຄາຄຸກ ເດີ !

ຫົວຫນ້າໂຈນກໍເວົ້າກາກ່ອນ :" ຂ໋າວ ກະດຽວວ່າພວກໂຈນເຮົາມີສີ່ຄົນນຳກັນ, ມັນບໍ່ແມ່ນແຕ່ສາມຄົນນີ້, ຍັງບໍ່ນັບຜູ້ທີສີ່ ນັ້ນເຫືອ, ເຮັດແນວນັ້ນ ມັນຂາດຄວາມຍຸດຕິທຳ, ຄັນຊິຈັບກຸມຄຸມ ຂັງ, ຖືກໂທດຖືກໄພ ກໍຄວນຖືກສີ່ຄົນທີ່ກະທຳຜິດນຳກັນຈຶ່ງແມ່ນຕ໋ວາ ! "

ເຈົ້າຊີວິດຍິ້ມຫົວຢູ່ຈັກບຶດແລ້ວເວົ້າວ່າ :" ແມ່ນ, ຂ້ອຍສະເຫັນເຈົ້າກ່ອນ " ຈັກບຶດເຈົ້າຊີວິດກໍດຶງຂົນນົກອອກມາແລ້ວເອົາມາປັກໃສ່ຜ້າພັນຫົວຂອງລາວ, ຂົນນົກອັນນັ້ນ ມັນກໍຄືອັນດຽວກັນກັບ ກັບຂົນນົກທີ່ປັກຢູ່ຜ້າພັນຫົວຂອງໂຈນທັງສາມ.

ເມື່ອອ້າຍໂຈນຫົວຫນ້າຟັງເວົ້າແລະເຈົ້າຊີວິດເຮັດແນວນັ້ນໃຜໃຜກໍ່ຕື່ນຕົກໃຈ ທ່ານນາຍົກເອງກໍ່ສຳນຶກວ່າ : ບ໊າ ! ໂຈນຜູ້ທີສີ່ນັ້ນຕ້ອງແມ່ນຕົວຂອງເຈົ້າຊີວິດເອງ, ແລະພວກໂຈນສາມຄົນນັ້ນໃຜໃຜກໍຄິດວ່າ : ຜູ້ທີສີ່ທີ່ໄປນຳກັນ ລັກນຳກັນ, ໃນມື້ນັ້ນຄົງແມ່ນ ກະໂຕເຈົ້າຊີວິດເອງ. ບໍ່ມີໃຜດອກຊິລື່ນເກີນເພິ່ນໄປໄດ້.

ເຈົ້າຊີວິດເວົ້າຕື່ມວ່າ :" ດີຫລາຍ, ເພື່ອນທຸກຄົນດີຫລາຍ" ດຽວນີ້ຕ້ອງຄວນຈັບທ່ານນາຍົກເອງ, ເພາະນາຍົກເປັນຜູ້ນຳ ຄວນນຳພາປະຊາຊົນພົນລະເມືອງໃຫ້ດີ ແຕ່ນາຍົກພັດວາງແຜນ ຈະໂຄ່ນ

ລົ້ມຂ້ອຍລົງຈາກບັນລັງ, ຍັງບໍ່ແລ້ວເທົ່ານັ້ນ ມັກນຖາມເຖິງສະພາບ
ການບ້ານເມືອງ ນາຍົກເອງຕອບວ່າ : ທຸກສິ່ງຢ່າງສະຫງົບດີ, ບໍ່
ມີມານຮ້າຍອ້າຍຂະໂມຍ, ປະຊາຊົນຢູ່ເຢັນເປັນສຸກ. ແຕ່ທ່ານ ນາ
ຍົກຮູ້ເລື່ອງຈິງແລ້ວຕົບຄົນ. ມີຄົນໜຶ່ງເອງ ຕົກຫ້ອງການຂອງນາຍົກ
ກໍຖືກເພັງ ຍ້ອນໂຈນຂະໂມຍມາປຸ້ນ !" ໄດ້ຍິນຄວາມຂອງ ເຈົ້າ
ຊີວິດເວົ້າບໍ່ຈິງບໍ່ປ່ອມແນ່ນອນນັ້ນ ແຂກຄົນທີ່ມາຮ່ວມ ໃຜກໍ່ສັ່ນເຊັນເອັນ
ປັ້ນ ອາກສັ່ນປ້ອກໆ. ຍັງເຫລືອແຕ່ທ່ານນາຍົກຜູ້ດຽວທີ່ນັ່ງຢ່າງງຽບ
ສະຫງົບ, ລາວໄດ້ຮ້ອງຂໍອະໄພໂຮຄວາມເປັນໂທດນຳເຈົ້າຊີວິດວ່າ
" ພະອົງ ! ພະມະຫາຊີວິດ ທີ່ສູງສົ່ງເຮີຍ ! ຖ້າຂ້ອຍເຮັດໄປນັ້ນ
ຫາກເປັນຄວາມຜິດຂ້ອຍຂໍຍອມຕາຍສາ !" ເຈົ້າຊີວິດກໍວ່າກຶຂື້ນ"
ຊັ້ນເບາະ ! ນີ້ມາ ຫລັກຖານເພື່ອພິສູດຄວາມຈິງນີ້ເດ !" ວ່າແລ້ວ
ກໍດຶງເອົາເຈ້ຍໃບໜຶ່ງທີ່ແມ່ນໜັງສືຂຽນຄຳຕົກລົງໂຄ່ນລົ້ມເຈົ້າຊີວິດ
ລົງຈາກບັນລັງອອກມາໃຫ້ເບິ່ງທັງເວົ້າວ່າ : " ໜັງສືນີ້ຂ້ອຍໄດ້ມາ
ຈາກຫ້ອງການຂອງນາຍົກເອງ !" ທ່ານນາຍົກກໍຕອບຄວາມ : "
ແຕ່ວ່າຂ້ອຍມີເຫດຜົນສຳຫລັບເລື່ອງນີ້ " ເຈົ້າຊີວິດຕັດຄວາມ : "
ເຫດຜົນຫວະ ? ເຫດຜົນຫຍັງ ? "

ເອີ ! ເຫດຜົນແນ່ນອນ ! ທ່ານສຳນຶກຕົວເບິ່ງດູວ່າ : ທ່ານ
ຄືຄວາມເມີນເສີຍຕໍ່ໜ້າທີ່ຂອງຕົນ, ບໍ່ມີຄວາມຫ່ວງໃຍນຳ ວຽກ
ງານໃນໜ້າທີ່ເຂົ້າຮັບບັນລັງຂອງພະອົງ, ພະອົງບໍ່ໄດ້ພົບປະຕາ ລິ
ກັບຄະນະລັດຖະບານ, ບໍ່ປາໄສຄວາມເວົ້າຫຍັງແຕ່ໄພ່ພົນເຕັມດ້າວ

ຍາມໃດກໍ່ມືດຢູ່ແຕ່ໃນຫ້ອງ, ໃນວັງຂອງພະອົງ ! ເປັນຫຍັງ ຂ້ອຍຈຶ່ງຕັດສິນໃຈລົງໄປຢ່າງນັ້ນກໍເພື່ອກຳຈັດເລື່ອງດັ່ງທີ່ກ່າວມານັ້ນ ໃຫ້ໝົດໄປ !"

ທ່ານນາຍົກເວົ້າອອກດ້ວຍນ້ຳສຽງອັນໃສແຈ້ງ ແລະ ທ່ຽງຕົງແນວນັ້ນ ເຈົ້າຊີວິດກໍ່ຮູ້ສຶກວ່າສຽງກໍ່ງຽບລົງຫລາຍເຕີບ. ພະອົງໄດ້ລາເລີກຈາກທີ່ປະຊຸມຫລວງແລ້ວ ສະເດັດຕົວເດີນສູ່ປ່າງຫ້ອງ. ນັບແຕ່ຍ່າງອອກຈາກທີ່ປະຊຸມຫລວງເຈົ້າຊີວິດກໍ່ເກັບເອົາຄຳເວົ້າຂອງທ່ານນາຍົກມາຣິນຕ້ອງໄປກັບໆຫລາຍບັ້ນ, ຄິດເບິ່ງແລ້ວກໍ່ຫາກ ແມ່ນຄວາມຂອງທ່ານນາຍົກຫລາຍອັນຈົນເກືອບໝົດ, ຕອນທ້າຍກໍ່ສຳນຶກອອກວ່າ : ຕົນເອງຕ້ອງໄປອະໄພໂທດ ໂຜດໄພແກ່ທ່ານນາຍົກ.

ໃນເມື່ອເຈົ້າຊີວິດໄດ້ປະກົດຕົວອີກໃນທີ່ປະຊຸມຫລວງ, ຄົນໃຜກໍ່ຕົກໃຈກວ່າຄັ້ງກ່ອນຄິດວ່າຈະມີເຫດຮ້າຍມາພານ ມານມາຂຶ້ນອີກແລ້ວ, ເຈົ້າຊີວິດນັດທ່ານລັດຖະມົນຕີ, ແລະຄະນະລັດຖະບານ ທັງໝົດມາ ເຫັນວ່າຄົບໜ້າໄຂ່ວຕາກັນແລ້ວ ພະອົງກໍ່ອຸທານຂຶ້ນ ! " ທ່ານນາຍົກແລະຄະນະລັດຖະບານທຸກທ່ານ ! ມື້ນີ້ພວກເຮົາ ປະຊຸມກັນອີກ, ການປະຊຸມນີ້ກໍເພື່ອລຸລ້ວງເລື່ອງລາວທີ່ຮ້າວເຮື້ອງ ຂອງວັນຜ່ານມາ, ເພື່ອໃຫ້ທຸກຄົນຫາຍກັງວົນ ບໍ່ຈົນຄວາມຄິດ ພະອົງຈະໃຫ້ຄວາມໝັ້ນສັນຍາກັບບັນດາທ່ານວ່າ : ແຕ່ນີ້ໄປຈະຢູ່ຄອງບັນລັງທັງນຳພາປະຊາຊົນ, ພະອົງມີຄວາມປະສົງໃຫ້ຄວາມຊ່ວຍເຫລືອ ເພື່ອແຜ່ທຸກຄົນ, ຊ່ວຍວຽກງານຂອງນາຍົກແລະລັດຖະບານທຸກທ່ານແລ້ວ

ພວກເຂົາພ້ອມກັນນຳພາບ້ານເມືອງໃຫ້ຈະເລີນເພີນສຸກ ສະນຸກ ສະຫນານຂຶ້ນຢ່າງບໍ່ຢຸດຢັ້ງ, ແລະອັນຫນຶ່ງອີກ, ເລື່ອງຂອງໂຈນ ສາມອ້າຍນັ້ນ ພະອົງຈະນຳເອົາມາເປັນຜູ້ໃກ້ສິດຮັກສາຕົວແລະ ປ້ອງກັນລາຊາວັງຂອງພະອົງ..."

ເມື່ອເຈົ້າຊີວິດກ່າວສຸດລົງເມື່ອໃດ ຜູ້ຂີ້ຢ້ານກໍຕື່ນມາ, ນາຍົກກໍມືນຕາແຈ້ງຂຶ້ນ, ແຕ່ນັ້ນມາໃຜກໍລື່ນເລີງສຳລານ, ທົ່ວອານາຈັກບາວາ ອັງກິນ ກໍນັບມື້ຮຸ່ງເຮືອງເຫລືອງເຫລືອມຂຶ້ນ ແລະມີຄວາມຢູ່ເຢັນເປັນສຸກດ້ວຍປາລະມີຂອງພະເຈົ້າມະຫາຊີວິດອົງນັ້ນ.

23/7/94.

# ນິທານ ພະມ້າ

# ເຈົ້າຊາຍມິນ ນັກຍິງທະນູ

ແຕ່ກີ້ແຕ່ກ່ອນ ຍັງມີເຈົ້າຊີວິດອົງໜຶ່ງຄອງບັນລັງແລະປົກຄອງໄພ່ຟ້າລາດຊະດອນແຫ່ງນະຄອນ ບູນຕິຟູນ ແລະພິສຟູນ ມາໄດ້ນານປີ. ເຈົ້າຊີວິດອົງນີ້ມີລາຊະກຸມມານຢູ່ 2 ອົງ, ຜູ້ອ້າຍຊື່ວ່າ : ມິນຊິສີ, ຜູ້ນ້ອງຊື່ ມິນຊິນ. ສອງອ້າຍນ້ອງນີ້ ເມື່ອໃຫຍ່ຂຶ້ນມາຊ້ຳກາຍເປັນນັກຍິງທະນູທີ່ແມ່ນຢຳ.

ມື້ໜຶ່ງສອງອ້າຍນ້ອງພາກັນໄປທ່ຽວປ່າ ລ່າສວນຂອງພະລາຊິນີ ພໍເຂົ້າໄປໃນສວນກໍ່ເຫັນນົກຍາງຄູ່ໜຶ່ງບິນຜ່ານຟ້າ ມາເຊືງຫົວຂອງເຂົາ. ເຈົ້າຊາຍ ມິນຊິນ ກໍ່ຍົກທະນູຂຶ້ນລອງເບິ່ງ ວ່າຝີມື ຈະແມ່ນຊ່ຳໃດ ວ່າແລ້ວກໍ່ຍິງຂຶ້ນໄປ. ລູກທະນູຂອງລາວໄດ້ຂຶ້ນໄປຖືກນົກຍາງໂຕຜູ້ແລ້ວຕົກລົງມາຕາຍກັບບ່ອນ.

ກ່າວເຖິງນົກຍາງແມ່ທີ່ຍັງເຫລືອ ເມື່ອໂຕເປັນຜົວຕາຍປະມັນກໍ່ກາຍເປັນນົກແມ່ໝ້າຍ ແລ້ວກໍ່ເກີດເສົ້າໂສກເສຍໃຈ ນ້ຳຕາໄຫລອາບແກ້ມລົ້ນຍ້ອຍຢູ່ບໍ່ເຊົາ. ຈາກນັ້ນ ນົກຍາງແມ່ໄດ້ມຸ່ງໄປຫາເຂດລາຊາວັງ, ໄປຮອດກໍ່ຂຶ້ນໄປຫາສຳນັກສານ, ໃຊ້ປີກຂອງລາວ ຕີກອງຫລວງທີ່ແຂວນໄວ້ ຕີຮຽກປ່າວໂຮມ. ເຊິ່ງກອງນີ້ ຮຽກວ່າ :

" ກອງສານຍຸດຕິທຳ, ຖ້າໃຜຫາກຮ້ອງທຸກສິ່ງໃດຕໍ່ສານກໍ່ຂໍເມາ ຕີກອງນີ້." ນາງນິກຍາງໝາຍໄດ້ຕີນຳໆກອງຫລວງໃຫ້ດັງໄປທົ່ວ ທຸກບ່ອນ ເພື່ອນຟ້ອງຮ້ອງເລື່ອງທີ່ຜົວຂອງຕົນຖືກຍິງຕາຍນັ້ນໃຫ້ສານ ຮູ້ນຳ.

ເມື່ອຍິນສຽງກອງຫລວງດັງຂຶ້ນ, ບັນດາລັດຖະມົນຕີ, ນາຍສານແລະຜູ້ພິພາກສາຂອງສານໄດ້ພາກັນໄປເຕົ້າໂຮມແລະໄດ້ຮັບຟັງການຮ້ອງທຸກຂອງນາງນິກຍາງໝາຍ, ຈາກນັ້ນເຂົ້າກໍ່ໄດ້ຮຽກເຈົ້າຊາຍທັງສອງມາຟັງ ເປັນຜູ້ຕາງໜ້າຂອງເຈົ້າຊີວິດ.

ກ່າວເຖິງເຈົ້າຊີວິດອົງນີ້ ຕົວພະອົງກໍຖືກຍົກຍ້ອງວ່າເປັນເຈົ້າຊີວິດທີ່ມີຄວາມຊື່ສັດສົນທຳ, ເພິ່ນປົກຄອງໄພ່ຟ້າປະຊາຫລວງ ດ້ວຍຄວາມໃກ້ສິດແລະຮັກທຸກຄົນຄືດັ່ງລູກຂອງຕົນ. ເມື່ອມີເລື່ອງ ດັ່ງນິກຍາງໝາຍຟ້ອງຮ້ອງຂຶ້ນມາຈົນຮອດພະອົງນັ້ນ, ພະອົງກໍຮຽກ ເຈົ້າຊາຍມິນຊິນມາແລ້ວ ຖາມວ່າ :" ມັນແມ່ນອີຫລີບທີ່ເຂົ້າກ່າວ ວ່າເຈົ້າໄດ້ຍິງນິກຍາງຜູ້ຕາຍ ?" ແມ່ນແລ້ວ ! ເຈົ້າຊາຍມິນຕອບ.

ເຈົ້າຊີວິດກ່າວ :" ເຈົ້າໄດ້ກະທຳສິ່ງທີ່ຜິດທີ່ສຸດໄປແລ້ວ ລູກຊາຍພໍ່ !" ຈາກນັ້ນພະອົງໄດ້ອອກຈາກສຳນັກສານຍຸດຕິທຳໄປຢ່າງງຽບໆ, ດ້ວຍການປະຊຸມນີ້ ເຮັດໃຫ້ທຸກຄົນທີ່ມາຮວມໄດ້ຮູ້ ເລື່ອງແລະການກະທຳຂອງເຈົ້າຊາຍມິນແຫງທີ່ໄດ້ຂ້ານິກຍາງຜູ້. ແລະສານໄດ້ຕັດສິນປະຫານຊີວິດຂອງເຈົ້າຊາຍມິນ.

ແຕ່ມາກ່າວເຖິງພະລາຊິນີ ຂອງເຈົ້າຊາຍທັງສອງ. ເມື່ອຮູ້

ວ່າເຈົ້າຊາຍນີ້ຖືກຟ້ອງຮ້ອງຄະດີຕໍ່ສານແນວນັ້ນ ລາວກໍປື້ງປົ່ງ ເຂົ້າມາຫາຝູງເພັດຊະຄາດ ທີ່ພວມນຳຕົວເຈົ້າຊາຍນີ້ ຊິເອົາໄປຂ້າເມື່ອມາເຖິງທີ່ປະຫານຊີວິດ ພະລາຊີນອຸທອນວ່າ : " ກະລຸນາຟັງ ຄຳເຫັນຂອງເຮົາເຖີດ ! ບັນດາເພັດຊະຄາດທຸກຄົນ. ນົກຍາງ ທີ່ຖືກຍິງນັ້ນເປັນພຽງສັດຕົວດຽວ, ແຕ່ລູກຊາຍຂອງເຮົາເພັດເປັນ ມະນຸດທັງຕົວ ມັນຈະສົມເຫດສົມຜົນກັນໄດ້ແນວໃດ, ກະລຸນາ ຜ່ອນໂທດໂຜດຊີວິດນຳຊິພໍໄດ້ບໍ່ ?

ກ່ອນຊິທຳປ່າງນລົງໄປ ຂໍໃຫ້ພວກທ່ານເອົາດາບຂອງຕົນແລ້ວຊອກເອົາເລືອດງົວຫລືປາມາທາໃສ່ໃຫ້ແດງໆ ຈາກນັ້ນກໍນຳດາບນັ້ນໄປໃຫ້ນາງນົກຍາງໝ້າຍເບິ່ງ ບາງທີລາວອາດພໍໃຈແລະເຊື່ອ ໃນຄຳຕັດສິນລົງໂທດນັ້ນໄດ້ ຈາກນັ້ນຂ້ອຍຈະສົ່ງລູກຊາຍຂອງຂ້ອຍ ໜີໄປໄກໆຈາກເມືອງນີ້ໂດຍດ່ວນ "

ພວກເພັດຊະຄາດໄດ້ປະຕິບັດຕາມຄຳສະເຫນີຂອງ ພະລາຊີນີ ເມື່ອເຮັດສຳເລັດຜົນໄດ້ແລ້ວ ພະລາຊີນີ ກໍ່ຫ້າງເອົາເພັດ ສັກສິດເຈັດເມັດມອບໃຫ້ລູກຊາຍ ພ້ອມກັບອາຫານການກິນເຄື່ອງຂອງອີກ. ຈາກນັ້ນກໍ່ສົ່ງລາວໜີໄປໃຫ້ໄກໆຈາກເມືອງນັ້ນ ເມື່ອເຫັນນ້ອງຊາຍນິຈະຖືກຈາກໄປຜູ້ເປັນອ້າຍຊື່ ມິນຊີສີ ກໍ່ຂໍນຳແມ່ ເພື່ອໄປນຳນ້ອງ, ຜູ້ເປັນແມ່ບໍ່ຢາກໃຫ້ຜູ້ອ້າຍໄປນຳ ຍອມບໍ່ມີລູກຈັກຄົນເຫລືອຢູ່ນຳພໍ່ແມ່ ແຕ່ເຖິງປານນັ້ນຜູ້ເປັນອ້າຍກໍ່ຊູຊີໄປນຳນ້ອງຈົນໄດ້, ເຂົາທັງ ສອງພາກັນເອົາເຄື່ອງຂອງແລະທະນູຄົບຊຸດ ແລ້ວອອກເດີນທາງໄປ.

ເຈົ້າຊາຍທັງສອງໄດ້ພະເນຈອນຜ່ານຫລາຍປ່າຜ່າຫລາຍພູໄປຢ່າງບໍ່ທັນຮູ້ຈັກທິບ, ເມື່ອຢ່າງຮອດບ່ອນໃດຫາກເມື່ອຍຫລາຍ ກໍພາກັນພັກ. ເຂົາພາກັນໄປແນວນັ້ນຕັ້ງຫລາຍວັນຕໍ່ມາກໍໄປ ຕົກໃສ່ເມືອງຫນຶ່ງຊື່ວ່າ : ນະຄອນຫລວງ ບັນເນີ, ກ່ອນຈະເຂົ້າສູ່ເມືອງນັ້ນຜູ້ເປັນອ້າຍໄດ້ຊວນນ້ອງພັກຈັກຫນ້ອຍຢູ່ກ້ອງຮົ່ມໂພໃຫຍ່ ທີ່ມີຮົ່ມເຢັນສະບາຍ. ຕົ້ນໂພນັ້ນຕັ້ງຢູ່ດ້ານຫນ້າຂອງປະຕູເມືອງຫລວງ ເຈົ້າຊາຍມິນຊຸສີ ກໍເລີຍນອນຫລັບຢ່າງບໍ່ຮູ້ສຶກ, ແຕ່ເຈົ້າຊາຍມິນຊຸສີ ພັດຕັ້ງສະຕິເຝົ້າຍາມ, ມືຫນຶ່ງຈັບທະນູແລະລູກ ກຽມທ່າໄວ້ສະເໝີ.

ຢູ່ມາຈັກບຶດ ເຈົ້າຊາຍມິນ ກໍໝາບເຫັນຝູງນົກຍູງຄຳ ຝູງຫນຶ່ງບິນຈາກຟາກຕາເວັນອອກພຸ້ງ ມຸ່ງຫນ້າມາທາງເບື້ອງຕົນຢູ່ແລະມັນຕ້ອງບິນຜ່ານເທິງຕົ້ນໂພນັ້ນ, ນົກຍູງທຸກໂຕໄດ້ມີຕາສີຄຳ ແລະມີຄຳໂອບຢູ່ປາຍປີກ, ປາຍຫາງຂອງພວກມັນ ຈົນເຫລືອງງາມ ອ່າມຕ່າມ.

ເຫັນແນວແປກໆຢ່າງນີ້ ເຈົ້າຊາຍມິນ ໂລດລັມມາອີກ ແລ້ວ, ລາວບໍ່ຊ່າງຊົດໄດ້ ເມື່ອໃນມືຂອງຕົນມີທະນູຄົບຊຸດຢູ່, ບໍ່ລໍຊ້າເຈົ້າຊາຍມິນກໍຍົກທະນູຂຶ້ນຍິງບາດຫນຶ່ງໃສ່ນົກຝູງນັ້ນ, ບໍ່ພໍຄາວນົກຍູງ ຄຳໂຕຫນຶ່ງກໍຕົກຈາກເວຫາລົງມາທັນທີ. ເຈົ້າຊາຍມິນຂຽວແລ່ນ ໄປຈັບເອົານົກໂຕນັ້ນມາແລ້ວພິເບິ່ງຫນເບິ່ງນ ຊອກຫາບ່ອນລູກທະນູ ຖືກ, ຈາກນັ້ນກໍເອົານົກໂຕນັ້ນໄປຍັດໃສ່ໂກນກົກໂພ ແລ້ວກໍມິດເສີຍຢູ່ຄືບໍ່ຮູ້ເລື່ອງຫຍັງ.

ໃນທັນໃດ ກໍ່ມີຝູງຄົນ ບໍ່ຮູ້ວ່າມີຈັກຄົນກໍ່ພາກັນລັ່ງອອກຈາກປະຕູຫລວງໃຜກໍ່ຖືຫນ້າທະນູແລະອາວຸດຄົບມື, ທາງເບື້ອງຫົວແຖວຂອງຝູງຊົນຫລື່ງລົ້ນກັນອອກມາລູດໆ ນັ້ນກໍ່ແມ່ນເຈົ້າຊີວິດ, ຕໍ່ຫັນໄປ ກໍ່ແມ່ນຂຸນທ້າວ ຂຸນນາງ, ລັດຖະມົນຕີຕ່າງໆ ຈົນຮອດຕຳຫລວດ ທະຫານແລ້ວຈຶ່ງແມ່ນໄພ່ຟ້າລາດຊະດອນ, ເຈົ້າຊາຍນິ ຜູ້ທ່ຽງມີກຽງຄຳນັ້ນເກີດຢ້ານຂົນ ຍ້ອນວ່າຂະບວນຄົນນັ້ນພັດແລ່ນມຸ່ງຫນ້າມາຫາ ກົກໂພບ່ອນລາວຢູ່, ເບິງໃຜກໍ່ຈັບທັງອາວຸດທັງດາບແກ່ວງວິດວັດໆມາຫາ. ເມື່ອຝູງຄົນນັ້ນແລ່ນມາຮອດຕົ້ນໂພໃຫຍ່ ເຂົາກໍ່ພາກັນກາຍໄປເສີຍໆໂດຍບໍ່ມີໃຜຊິຫົວຊາຕາໂຕ່ງນຳສອງອ້າຍນ້ອງ, ບັດນັ້ນເຈົ້າຊາຍ ນິຈຶ່ງຫັນໃຈວ່າຍມາ ຫູຕາກໍ່ຊຶ່ມຂຶ້ນແດ.

ເຈົ້າຊາຍນິ ສະແດງຄວາມສະບາຍໃຈອອກແລະ ຫລິງເບິ່ງຕາມຫລັງຂອງຂະບວນຝູງຄົນຕໍ່ໄປວ່າເຂົາພາກັນແລ່ນໄລ່ຫຍັງ. ຢູ່ຕໍ່ມາມີຜູ້ເຖົ້າຜູ້ຫນຶ່ງຖືໄມ້ຄອນເທົ່າຫນັກອົ່ນຫນຶ່ງຄ່ອຍໆຍ່າງ ຊິຊຸດຊິຊາມາຕາມທາງນ້ອຍຫນຶ່ງ ທີ່ຢູ່ແປະດ້ານຂ້າງກັບທາງແຖວຂອງ ຝູງຄົນພ່ວມແລ່ນໄປນັ້ນ.

ເຈົ້າຊາຍນິຖາມວ່າ :" ພໍ່ຕູ້ເອີຍ ! ຕູ້ຮູ້ບໍ່ວ່າຝູງຄົນນັ້ນເຂົາຈິພາກັນໄປໃສ ເຂົາພາກັນໄປຊອກຫຍັງ ? " ແລ້ວພໍ່ຕູ້ນັ້ນກໍ່ຕອບ:
" ຂຸນເຈົ້າບໍ່ເຫັນບໍ່ກໍ່ກັນມີກຽງຄຳໂຕບັກໃຫຍ່ໆ ມີຂົນເປັນຄຳ ບິນຜ່ານມ້ານຟ້າແຖວນີ້ ! ຝູງຄົນກັນແມ່ນເຂົາພາກັນໄລ່ນົກຍູງຄຳ ອັນນັ້ນແຫລະ !"

" ຊັ້ນເຂົາເຈົ້າໄລ່ເອົານົກນັ້ນໄດ້ຊິໄດ້ຫຍັງຍ້ອນ ? " ເຈົ້າຊາຍນິຖາມຂຶ້ນ. ຕູ້ມຄ່ອຍຕອບວ່າ : " ດີແລ້ວເຈົ້າຖາມແນວນັ້ນ, ຕູ້ຊິບອກໃຫ້ເຈົ້າດີ ! ຄັນໄດ້ນົກຍູງຄຳໂຕນັ້ນມາ ໃຜຫາກໄດ້ກິນຫົວມັນ ບໍ່ນານກໍ່ຊິໄດ້ເປັນເຈົ້າຊີວິດ ແລະໃຜຫາກໄດ້ກິນຫົວໃຈມັນເວລາໄຫ້ນ້ຳຕາທີ່ໄຫລອອກມາກໍ່ກາຍເປັນໄຂ່ມຸກໝົດ, ຍາມຫົວກໍ່ເກີດເປັນໄຂ່ມຸກທັບທິມອອກມາ " ເມື່ອພໍ່ຕູ້ມເວົ້າສຸດຄວາມແລະຮູ້ເລື່ອງແນວນັ້ນແລ້ວ ເຈົ້າຊາຍນິກໍ່ຫົວຂຶ້ນ :" ໄວໆພໍ່ຕູ້ ! ນົກໂຕນັ້ນມັນບິນໄປທາງຕາເວັນອອກພຸ້ນແລ້ວ !"

ເມື່ອພໍ່ຕູ້ມແລ່ນໄລ່ນົກຍູງໂຕນັ້ນໄປໄກໆຕາມເວົ້າແລ້ວ ເຈົ້າຊາຍນິ ກໍ່ໄປດຶງເອົານົກຍູງຄຳຢູ່ໂກນກົກໂພອອກມາແລ້ວປຸກໃຫ້ອ້າຍຕື່ນນອນ. ເຂົາທັງສອງພາກັນຄົວນົກຍູງໂຕນັ້ນໃຫ້ສຸກແລ້ວເຈົ້າຊາຍນິເອົາຫົວຂອງມັນໃຫ້ຜູ້ອ້າຍກິນ, ສ່ວນລາວເອງກິນຫົວໃຈຂອງມັນ.

ເມື່ອກິນຢ່າງຮຽບຮ້ອຍແລ້ວນໍ ສອງອ້າຍນ້ອງກໍ່ອອກເດີນທາງຕໍ່ໄປຫລາຍວັນຜ່ານພົ້ນໄປທີ່ສອງອ້າຍນ້ອງພາກັນເດີນໄປໜ້າເລື້ອຍເລື້ອຍ, ແລ້ວເຂົາທັງສອງກໍ່ໄປເຖິງສວນຂອງຂຸນນາງແຫ່ງໜຶ່ງທີ່ຢູ່ເມືອງນັ້ນ. ເຈົ້າຊາຍນິ ໄດ້ອອກໄປຊອກຫານ້ຳດື່ມໃຫ້ອ້າຍ, ສ່ວນຜູ້ອ້າຍນັ່ງຖ້າຢູ່ຈັກໜ້ອຍກໍ່ນອນຢຽດລົງພັກຜ່ອນ, ບໍ່ພໍຄາວ ລາວກໍ່ນອນຫລັບຄາທີ່ນັ້ນ.

ມາເວົ້າເຖິງເມືອງໃຫຍ່ທີ່ສອງອ້າຍນ້ອງມາເຖິງນີ້ ກໍ່ພໍດີເປັນໄລຍະທີ່ບໍ່ມີເຈົ້າຊີວິດເປັນເຈົ້າປົກຄອງ. ດ້ວຍເຫດທ່ານນາຍົກລັດ

ຖະມົນຕີຈຶ່ງໄດ້ແຕ່ງຄົນພ້ອມກັບເອົາລໍ້ວິເສດໂຕຫນຶ່ງລາກລໍ້ເລາະໄປ ເພື່ອຊອກຫາຄົນເອົາມາເປັນເຈົ້າຊີວິດອົງໃຫມ່ ລໍ່ມ້າວິເສດໂຕນັ້ນກໍ ລາກແກ້ລົດທົມແຖມແຂບເງິນແຂບຄຳແລ່ນກຸ່ມມຸ່ງຫນ້າມາຫາ ເຈົ້າ ຊາຍສີ່ຜູ້ເປັນອ້າຍທີ່ພວມນອນໂກນຊອດງຢູ່ນັ້ນ. ທັນໃດມ້າວິເສດມາ ຮອດຫັນກໍຢຸດຈິກຢູ່ຕໍ່ຫນ້າຂອງລາວ ແລ້ວບອກໃຫ້ເຈົ້າຊາຍສີ ຂຶ້ນນັ່ງ ແທ່ນເທິງລົ້ນມາ ຈາກນັ້ນເຂົາກໍນຳເອົາລາວເຂົ້າສູ່ລາຊະວັງແລ້ວ ກໍ ຂຶ້ນຮັບບັນລັງເປັນເຈົ້າຊີວິດປົກຄອງບ້ານເມືອງນັ້ນຕໍ່ໄປ.

ຜູ້ເປັນນ້ອງກັບມາບໍ່ເຫັນອ້າຍ ລາວກໍສືບຕໍ່ເດີນໄປ ແບບປ່ຽວ ພອຍລາວເດີນໆເຖິງເຈັດວັນຖ້ອນກໍໄປຕົກໃສ່ເມືອງຫນຶ່ງ ຊື່ວ່າ :" ເມືອງຫລວງຄຳ ແຫ່ງໄຊຊະນະ " ໄປຮອດທີ່ນັ້ນກໍເຖິງຄາຍ ຄ່ຳ ຍາມແລງພໍດີ. ເຈົ້າຊາຍນີ້ ກໍຢຸດພັກເອົາແຮງເລັກນ້ອຍແລ້ວກໍ ຍ່າງ ໄປຫາເຮືອນຫລັງຫນຶ່ງ ຊຶ່ງເປັນເຮືອນຮຽມ ເພື່ອຂໍເຂົ້າກິນ ເຫັນຊື່ ເຮືອນນີ້ວ່າ : ທິລບາກາ. ສາວໃຊ້ຂອງເຮືອນຮຽມນັ້ນເກັບເອົາອາ ຫານເສດໄດ້ເລັກນ້ອຍແລ້ວກໍຍື່ນໃຫ້ ທັງບອກໃຫ້ເຈົ້າຊາຍນີ້ອອກໄປ ຫາແຄມສວນ ບ່ອນມີສາງນ້ຳພຸ້ນ.

ເຈົ້າຊາຍນີ້ ໄປຮອດສາງນ້ຳແລ້ວກໍນັ່ງລົງ, ລາວຄິດ ຫລາຍ ສິ່ງຢ່າງ ຄິດໄປຄິດມາກໍພໍເລື່ອງແກ້ວວິເສດເຈັດເມັດທີ່ແມ່ຂອງລາວ ເອົາໃຫ້ເມື່ອກ່ອນ, ຄິດພໍແລ້ວກໍຈົກອອກມານັບເບິ່ງວ່າ ຍັງຄົບຢູ່ບໍ, ນັບແລ້ວກໍເລີ່ມກິນຂອງກິນທີ່ຫາມາໄດ້. ແຕ່ເວລາລາວພວມນັບແກ້ວ ວິເສດຂອງລາວນັ້ນ ທັນໃດສາວໃຊ້ຂອງເຮືອນຄົນຮັ່ງກໍລັກ ອອກມາ

ສ່ອງ, ສາວນັ້ນໄດ້ເຫັນແສງເຫລື້ອມຍິບຍັບຂອງແກ້ວ ແພ່ກະຈາຍ ຈົນເຣືອເຣືອງ ພໍເຫັນແລ້ວ ບໍ່ຫນ້າບໍ່ຫລັງສາວນັ້ນກໍແລ່ນໄປ ບອກ ມາຍຂອງຕົນໂລດ.

ເວົ້າເຖິງເຈົ້າຂອງເຮືອນຮົງ ຫລືບາກາ ນັ້ນ, ພໍໄດ້ຍິນຂ່າວ ແນວນັ້ນເຂົ້າຫູກໍບໍ່ລໍ້ຊາຄືກັນ, ມັນຂ້ຽວໄປຫາເຈົ້າຊາຍນິ ພໍໄປຮອດ ກໍເອົາເຊືອກມັດພ້ອມບາດ, ຍັງບໍ່ແລ້ວເທົ່ານັ້ນ ອ້າຍຂີ້ໂກງຄົນນີ້ ກໍ ປັ້ນເອົາແກ້ວວິເສດທັງເຈັດເມັດນັ້ນໄປພ້ອມ. ເມື່ອຖືກເປັນແນວນັ້ນ ເຈົ້າຊາຍນິ ກໍໄຫ້ຂຶ້ນ, ເມື່ອໄຫ້ນ້ຳຕາທີ່ໄຫລອອກກໍເປັນໄຂ່ມຸກ ທັງ ມວນ. ເຫັນແນວນັ້ນ ອ້າຍໂລບມາກກໍແຮງໄດ້ໃຈ, ລາວຈັບ ເອົາ ເຈົ້າຊາຍນິ ຍັດລົງຂຸມແລ້ວເອົາເຊືອກມັດຕິດກັບເສົາຄັກໆ ຈາກນັ້ນ ກໍເອົາໄມ້ແສ້ຂ້ຽນຢ່າງຫາລຸນ ເພື່ອໃຫ້ນ້ຳຕາເຈົ້າຊາຍໄຫລອອກ . ເມື່ອເຫັນນ້ຳຕາເກີດເປັນໄຂ່ມຸກ ເກີດຂຶ້ນປັບລາວກໍຂ້ຽວຄວ້າ ເອົາ ໃສ່ຖົງປັບ, ໄດ້ແລ້ວກໍເອົາແສ້ຟາດເຈົ້າຊາຍອີກຢ່າງບໍ່ຮູ້ແລ້ວຮູ້ທີ່ວ.

ເຈົ້າຊາຍຖືກຂ້ຽນຈົນຫາຍໃຈຊິບມາ ມືນຕາບໍ່ໄດ້. ເມື່ອຄືງ ຖືກຊ້ຳກ່ຳດຳດ້ວຍຮອຍແສ້. ປູ່ຕຸມາຜູ້ເປັນນ້ອງຂອງອ້າຍໂລບ ມາກ ຄົນນັ້ນ ຊື່ວ່າ : ລາທິກພັນ ພັດເກີດຄວາມອິຕົນຫັງຢ້ານ ຊາຍນ້ອຍ ນັ້ນຊິຕາຍລາງ ບັດຕໍ່ໄປຊິບໍ່ໄດ້ຫຍັງຈາກລາວອີກ, ຄິດແນວນັ້ນ ກໍ ເອົາຂອງໜາກຂອງກິນນ້ຳດື່ມໄປໃຫ້ແລະຕິດຕາມຊາຍນ້ອຍຄົນນັ້ນ. ດ້ວຍຄວາມເຫັນໃຈແນວນັ້ນ ເຈົ້າຊາຍກໍມີຄວາມພູມໃຈຢ່າງລົ້ນເຫຼືອ ຕໍ່ສາວ ລາທິກພັນ ແລະປູ່ຕຸມາບໍ່ນານລາວກໍເກີດຄວາມຮັກຕໍ່ນາງຄົນ

ນັ້ນຊ້ຳ.

ປູ່ຕາມາ ຊ້ຳມີເລື່ອງມານພານຮ້າຍໜຶ່ງເກີດຂຶ້ນ. ເລື່ອງ ນີ້ແມ່ນມີຍັກຮ້າຍໂຕໜຶ່ງໄດ້ມາອາໄສທີ່ບໍ່ນ້ຳແຫ່ງໜຶ່ງ ໃນເມືອງນັ້ນ. ມັນມາຢູ່ໜັ້ນແລ້ວກໍ່ສ້າງຄວາມເດືອດຮ້ອນໃຫ້ແກ່ຊາວເມືອງ ເຊິ່ງແຕ່ລະວັນ ຍັກໄດ້ຮ້ອງຂໍເອົາຄົນຜູ້ໜຶ່ງໃນເມືອງນັ້ນໄປກິນ ແລະຈະກິນໄປໆຈົນໝົດ ເຮັດໃຫ້ບ້ານເມືອງກໍ່ແປນເປົ່າເສົ້າໝອງລົງ ປະຊາຊົນໃນເມືອງນັ້ນບໍ່ມີວິທີໃດຈະສູ້ມັນໄດ້ມີແຕ່ປະຕິບັດຕາມອຳນາດຂອງຍັກ, ແຕ່ລະຄອບຄົວໄດ້ຕົກຜຽນກັນ ເອົາຄົນໄປໃຫ້ຍັກໂຕນັ້ນ ຜຽນປ່ຽນກັນໃຫ້ໄຂ່ວທຸກເຮືອນ ນັບແຕ່ປະຊາຊົນຈົນເຖິງເຈົ້າຊີວິດເອົາເຮັດແນວນັ້ນໄປຕາມໄປກໍ່ເຖິງຜຽນຂອງເຮືອນຜູ້ຮັ່ງ ທີລບາກາ. ພໍຜຽນຕົກມາເຖິງ, ລາວກໍ່ຈັດສົ່ງເຈົ້າຊາຍນິ ໄປຕາງຕົນໂລດ.

ຜູ້ທີ່ຕົກຜຽນຖືກໄປເປັນເຫຍື່ອຂອງຍັກນັ້ນ ທຳອິດຕ້ອງເອົາໄປໄວ້ທີ່ລາຊະວັງ, ຈາກນັ້ນ ເພິ່ນຈຶ່ງສົ່ງຈາກລາຊະວັງ ໄປເຖິງນ້ຳບໍ່ບ່ອນຍັກໃຫຍ່ລຢູ່. ເຈົ້າຊາຍນິກໍ່ຖືກຈັດສົ່ງໄປຕາມແບບນັ້ນ ພໍໄປເຖິງລາຊະວັງ, ຊາຍນິກໍ່ຍ່າງຢ່າງຈິກຈັກໄປເຂົ້າໜ້າປະຕູ ແລ້ວກໍ່ເອົາໃບພູ້ມາຄ້ຽວເສີຍໆ. ເຈົ້າຊີວິດ ເຫັນທ່າທີກ້າຫານຂອງເຈົ້າຊາຍນິເປັນແນວນັ້ນ ກໍ່ເກີດຄວາມສົງສານທັງໜ້າແພງເອົາໄວ້ ລາວກໍ່ວັກມືເອີ້ນຊາຍນິມາແລ້ວຖາມ :" ເຈົ້າແມ່ນໃຜ ?" ຊາຍນັ້ນ ກໍ່ຕອບທັນທີ : ກະລຸນາທ່ານ ! ຂ້ານ້ອຍແມ່ນຄົນຜູ້ທີ່ຖືກຜຽນ ເພິ່ນຈັດໃຫ້ເປັນອາຫານຂອງຍັກຮ້າຍໃນເມື່ນ !" ແຕ່ສ່າ ! ພະອົງເຮີຍ ! ຖ້າ

ພະອົງຫາກຮັບປາກຮັບຂານກັບຄຳຮ້ອງຂໍຂອງຂ້ານ້ອຍໄດ້, ຂ້ານ້ອຍຈະຊ່ວຍປົກປ້ອງຊາວເມືອງຈົນເຖິງຕົວຂອງພະອົງໃຫ້ພົ້ນຈາກ ຍັກຮ້າຍໂຕນັ້ນໄດ້ !" ມັນແມ່ນເລື່ອງຫຍັງນໍຊາຍ ! ຂ້ອຍດີໃຈຫລາຍໄດ້ຍິນຄຳເວົ້າຂອງເຈົ້າແບບນັ້ນ ແລະຂ້ອຍຈະອະນຸຍາດທຸກຢ່າງ ໃຫ້ເຈົ້າຕາມທີ່ຕ້ອງການແລະຕາມທີ່ຂ້ອຍສາມາດເຮັດ, ບໍ່ພຽງເທົ່ານັ້ນຄົນເຈົ້າເຮັດໄດ້ດີຫລີ, ສາມາດຂ້າຍັກຮ້າຍນັ້ນລົງໄດ້ຄາວໃດ ຂ້ອຍຈະຍົກເຈົ້າຂຶ້ນເປັນເຈົ້າຊີວິດແທນບັນລັງຂອງຂ້ອຍໂລດ, ດຽວນີ້ໃຫ້ເຈົ້າເວົ້າມາ ແມ່ນຫຍັງທີ່ເຈົ້າຢາກຮ້ອງຂໍ ?"

"ພະອົງທີ່ສູງສົ່ງ ! ຫວ່າງກ່ອນ ເຈົ້າຂອງເຮືອນຮັງ ທີລບາກາ ໄດ້ລັກເອົາແກ້ວວິເສດຈັດເມັດຂອງຂ້ານ້ອຍໄປ ຈົນໝົດພ້ອມນັ້ນກໍປຸ້ນເອົາທະນູກັບລູກທະນູໄປໝົດສິ້ນອີກ, ກະລຸນາພະອົງຈົ່ງທົງອຳນາດ ເປັນຄຳເດັດຂາດໃຫ້ຜູ້ຫລັກ ດັ່ງຜູ້ຂ້າໄດ້ບອກ ຈຶ່ງໃຫ້ນັ້ນຈົ່ງນຳຂອງທັງມວນມາສົ່ງຜູ້ຂ້າເຖີນ ! ຜູ້ຂ້າຈະໃຊ້ ຂອງຂຸມນັ້ນເພື່ອປາບຍັກ !"

ເຈົ້າຊີວິດຮັບແນວນັ້ນກໍຂຽວສັ່ງການໃຫ້ ທີລບາກາ ນຳເຄື່ອງທັງມວນມາສົ່ງພ້ອມ ຂໍໂທດຂໍໂພຍຢ່າງຄົບຣິດຕໍເຈົ້າຊາຍນີ້, ໃນບໍ່ຊ້າເຈົ້າຊາຍກໍໄດ້ຮັບເອົາແກ້ວວິເສດຈັດເມັດ, ທະນູແລະລູກຂອງມັນຄືນຄົບຖ້ວນດີມາ. ເຫັນວ່າໄດ້ຄອງມີສົບເສີກທັງແກ້ວເມັດ ວິໂສແລ້ວເຈົ້າຊາຍກໍເລີ່ມອອກເດີນທາງມຸ່ງໜ້າໄປສູ່ວັງນ້ຳບໍ່ ບ່ອນຍັກຮ້າຍລີ້ຢູ່ນັ້ນຢ່າງບໍ່ຫວັ່ນເກງຫຍັງເລີຍ, ໄປຮອດແລ້ວ ທຳອິດ ລາວ

ກໍ່ແກວ່ງແກ້ວທັງເຈັດເມັດລົງໄປໃນວັງນ້ຳບໍ່, ລາວຄອຍເບິ່ງ ແກ້ວທັງເຈັດໃນບໍ່ນານກໍ່ປ່ຽນຕົວເປັນເປັດວິເສດອີກ ເຈັດໂຕ. ເບິ່ງຊຸມນຸມກໍໄລ່ກັນທັງພີປີກພີກນ້ຳຢ່າງສຳລານໃຈ, ເຫັນວ່າໄດ້ຈັງຫວະກະວິທີຄົບແລ້ວ ເປັດທັງເຈັດກໍເລີ່ມດື່ມນ້ຳບໍ່ນະໂລດ. ບໍ່ນານພຽງ ໃດນ້ຳວັງນັ້ນ ກໍເຄື່ອດລົງໆຈົນທີ່ສຸດກໍແຫ້ງວາບ, ຄາວນັ້ນກໍເຫັນ ເສົາຫີນທີ່ຕັ້ງຢູ່ກາງວັງກໍປະກົດພົ້ນອອກ, ເຈົ້າຊາຍນ້ອຍກໍລົງໄປຕີນ ເຕະຫລັກເສົານັ້ນຢ່າງແຮງເຕັມຂີດ ເສົານັ້ນກໍໂຄ່ນລົ້ມລົງດັງຕືນໂລດ !

ສຽງດັງຂອງເສົາຫີນລົ້ມທັບໄດ້ສະເທືອນໄປເຖິງພີຍັກ, ມັນໄດ້ຍິນກໍ່ຂ້ຽວຜູດພາດຂຶ້ນມາຈາກພື້ນດິນຂອງວັງນ້ຳບໍ່ແລ້ວ ເຮັດໃຫ້ດິນກໍ່ແຕກງາດທັງກີ່ນອອກແລ້ວ ພີຍັກກໍໂພ້ໂອ້ຂຶ້ນມາ ທັງກະຊາກແຂ້ວ ຮ້ອງພ້ອມ. ເຈົ້າຊາຍນ້ອຍກໍໄດ້ແຕ່ງຫາງທະນູກຽມຕາມລູກໃສ່ຄັກໆ ແລ້ວກໍ່ລົ້ນໄປໃສ່ຍັກ, ລູກທະນູພຸ່ງໄປຕຳເອິກພິດເຈາະເຂົ້າຖືກຫົວໃຈຂອງມັນແລ້ວກໍຮ້ອງໂກກໆຂຶ້ນດັ່ງດາວໆແລ້ວກໍຊັກຕາຍໄປ. ແຕ່ຄິດວ່າຍັກໂຕນັ້ນຕາຍໄປແລ້ວເລືອດມັນຊຸແລ້ວລົງກໍບໍ່ແມ່ນ ພັດມີຍັກ 2 ໂຕເກີດຂຶ້ນມາແທນທີ່ ເຈົ້າຊາຍນ້ອຍກໍຫາງທະນູຂຶ້ນອີກແລ້ວຕາມລູກທະນູ ຄູ່ຫນ່ວຍຍິງພຸ່ງໄປໃສ່ຍັກໃຫຍ່ສອງໂຕນັ້ນກໍດົນຕາຍລົງອີກ, ບໍ່ນານພັດມີຍັກສີ່ໂຕເກີດຂຶ້ນ, ເຈົ້າຊາຍນ້ອຍກໍຫາງທະນູຍິງຍັກທັງສີ່ໃຫ້ ຕາຍລົງ, ບັດແລ້ວພັດມີ 8 ໂຕ, ສິບໂຕແລະເປັນພັນໆເກີດຂຶ້ນມາເພື່ອບັງເຈົ້າຊາຍນ້ອຍກໍຫາງທະນູຍິງຮວາດເອົາຮວາດເອົາຈົນຍັກທັງມວນຕາຍ ກອງອາເນກນອງເນືອງລົ້ນ, ຍັກມັນເຫັນບໍ່ໄດ້ກໍຕາຍໄປນັບບໍ່ໄຫວ ທັງໂຕ

ໃຫຍ່ໂຕນ້ອຍກໍຕາຍກ້ຽງບໍ່ຫລໍ.

ເມື່ອປາບຍັກເຖິງຄວາມສຳເລັດແລ້ວ ເຈົ້າຊາຍນິ ຍົງມີສີສະຫງ່າຂຶ້ນອີກ, ຊາວບ້ານຊາວເມືອງຕ່າງກໍຍົກຍ້ອງອາຄົມ ພົມຈາລິດຂອງຊາຍຄົນນີ້ແລ້ວເຂົາກໍຈັດງານສະຫລອງ ທັງຕີກອງຮ້ອງເພງ ຜູ້ບັນເລງຜູ້ຟ້ອນຜູ້ກໍຟ້ອນຜູ້ກໍລຳ ເອົາຈົນເຕັມມັກໃຜມັກມັນ ກ່າວເຖິງເຈົ້າຊີວິດ ເມື່ອການປາບຍັກສຳເລັດເມື່ອໃດກໍຫວນຄືນເຖິງຄຳໝັ້ນສັນຍາທີ່ມີຕໍ່ຊາຍນິເມື່ອກ່ອນນັ້ນ. ສະນັ້ນຈຶ່ງໄດ້ຍົກຊາຍນິ ໃຫ້ເປັນມະຫາພົມມະຈາລີ ມີທະນູແລ້ວຍົກຂຶ້ນຄອງບັນລັງເປັນເຈົ້າຊີວິດແທນພະອົງແຕ່ວັນນັ້ນເປັນຕົ້ນໄປ. ຈາກນັ້ນເຈົ້າຊາຍນິກໍຈັດຫາງານວິວາຫາສີທຳສີລິມົງຄຸນກັບເຈົ້າສາວ ລາທິກພັນ ຜູ້ເຊິ່ງກ່ອນນັ້ນເຄີຍອູ້ມຊູ ຕົນມາຢ່າງມີຄວາມສຸກ.



## ນິທານ ອີຣານ

# ນາງແມງສາບ

ແຕ່ເປີງກີ້ເປີງກ່ອນ ຍັງມີນາງສາວແມງສາບນ້ອຍໜຶ່ງ ທີ່ຢູ່ຢ່າງດ່ຽວຢ່າງດາຍແຕ່ໂຕຜູ້ດຽວ ເຊຶ່ງນອກຈາກມີພຽງແຕ່ພໍ່ ຂອງລາວອີກຜູ້ໜຶ່ງເທົ່ານັ້ນ. ຢູ່ມາເຖິງມື້ໜຶ່ງພໍ່ຂອງລາວເວົ້າວ່າ :" ລູກສາວພໍ ! ດຽວນີ້ພໍບໍສາມາດຊິເບິງແຍງດູແລເຈົ້າຕໍໄປຢ່າງເຫີງ ນານໄດ້ອີກ, ພໍ່ນັບວັນນັບຈະເຖົ້າເຂົ້າຈັກໃຊແລະເກີດເຈັບ ເກີດເປັນຕາມມາ. ເຫດນີ້ແລ້ວລູກເອີຍ ! ໃຫ້ເຈົ້າຫາກໄປຊອກໄປຫາບ່ອນຫາທາງທີ່ຈະຊ່ວຍຕົວຂອງເຈົ້າ ໃນພາຍໜ້ານັ້ນໄວ້ພໍຊິໄດ້ບໍ ?" ເມື່ອພໍເວົ້າຄວາມນີ້ສຸດລົງນາງແມງສາບກໍຖາມພໍ :" ຊັ້ນຊິໃຫ້ ລູກເຮັດແນວໃດ ? ຊິໃຫ້ຂ້ອຍໄປທາງໃດ ?"

ແລ້ວພໍກໍຕອບວ່າ :" ຕາມພໍໄດ້ຍິນວ່າ : ຢູ່ເມືອງ ຣາເມດງ ຍັງມີຊາຍຜູ້ໜຶ່ງ ຊື່ຂອງລາວແມ່ນ : ຣາເມຊນ ເປັນຄົນຜູ້ຖະໜອມຮັກ ຜູ້ຍິງສາວທີ່ສະຫລາດສ່ອງໃສຢ່າງຈິງໃຈແທ້ໆ. ດຽວນີ້ເຫັນວ່າເຈົ້າຄວນກຽມຕົວເດີນໄປທີ່ ຣາເມດງ ກ່ອນຖ້າວ່າ ເຈົ້າຫາກຊອກພົບບ່ອນສຳຫລັບເຈົ້າ ເປັນນາງສະໜົມຂອງ ຣາເມຊັນ ແລ້ວເຈົ້າຈະໄດ້ຮັບຄວາມປອດໄພແລະສະບາຍທີ່ສຸດແກ່ຕົວເຈົ້າ "

ນາງແມງສາບກໍຕອບວ່າ :" ແມ່ນແລ້ວຖ້າເປັນຕາມຄຳຂອງພໍ່ເວົ້າ " ໃນບໍ່ນານນາງກໍຫາຍໃຈໃຫຍ່ແລ້ວສະແດງຄວາມລູລົ່ງໃຈແລະກຽມຕົວ ເພື່ອເດີນທາງໄປສູ່ນະຄອນ ຣາເມດັງ ກ່ອນຈະອອກເດີນທາງລາວໄດ້ກຽມຕົວທຸກຢ່າງ, ທັງແຍງຕົວແຍງຄີງ.

ໃນບໍ່ດົນ ນາງແມງສາບກໍຕົກລົງໃຈກຽມຈະໄປ, ລາວຍ່າງໄປຢືນຢູ່ຕໍ່ໜ້າແວ່ນໃຫຍ່ທັງແຍງເບິ່ງຕົນຕົວແລ້ວກໍເລີ່ມ ແຕ່ງຕົວ, ແຕ່ງໃບໜ້າແຕ້ມສີໃສ່ແຈສົບເບື້ອງໜຶ່ງ, ທາແປ້ງໃສ່ໜ້າ, ທາງຂອບຕາ, ຂົນຄິ້ວ, ແຈະເຫຼັບຕີນເຫຼັບມືຢ່າງຄົບຖ້ວນແລ້ວກໍເອົາສີມາເປ່າຍ້ອມຜົມໃຫ້ເປັນສີຄຳເຫຼືອງ.

ຕໍ່ຈາກນັ້ນກໍເຮັດເສື້ອຫົ່ມນອກດ້ວຍເປືອກຜັກບົ່ວ, ເອົາເປືອກຜັກທຽມມາເຮັດຜ້າປົກໜ້າທີ່ຍາວໆທີ່ງາມບໍ່ເຄີຍມີໃນເມືອງນີ້ ມາກ່ອນ, ເຮັດອັນນີ້ແລ້ວກໍໄປເອົາເກີບຄູ່ໜຶ່ງທີ່ເຮັດດ້ວຍກາບ ໝາກໂປ່ມມາຖື. ເຮັດໄປເຮັດມາກໍຮຽບຮ້ອຍທຸກອັນ ນາງແມງສາບເລີ່ມຍ່າງແອ່ນຕົວໄປກັບທັງແຍງຕົວເອງແລ້ວກໍຍ່າງອອກລະບຽງ ເຮືອນເພື່ອອາງຕົວຕອບກັບແສງແດດ, ຄາວນັ້ນຄືກັບວ່ານາງແມງສາບໄດ້ກົດຊົງງາມສູດທີ່ງາມດັ່ງດວງອາທິດ.

ນາງແມງສາບອອກເດີນທາງຈາກເຮືອນຂອງຕົນ ເພື່ອໄປຫາເມືອງ ຣາເມດັງ ລາວຍ່າງໄປຕາມທາງເສັ້ນກຽວງາມທັນໃດກໍພົບຮ້ານຂາຍຂອງກິນ. ທັນໃດນັ້ນຜູ້ຂາຍຂອງກິນກໍຮ້ອງໂກກມາຖາມວ່າ " ອ້າວ ! ແມ່ນເຈົ້າຄິດວ່າ ເຈົ້າຈະໄປໃສ ນາງແມງສາບນ້ອຍ"

ແມງສາບນ້ອຍໜວກ" ນາງແມງສາບຕອບ : ເຈົ້າຮູ້ບໍ່ວ່າ "ຕົວຂ້ອຍງາມກວ່ານາລາ ໜ້າຕາເສາະໃສກວ່ານົງກູດເກົ້າ !"

" ອ່າວ ! ຄັນຊັ້ນຈິໃຫ້ຂ້ອຍຮຽກເຈົ້າວ່າແນວໃດຈຶ່ງເໝາະ

" ເຈົ້າຄວນເວົ້າວ່າ :- ສະບາຍດີ ສາວນ້ອຍແສນສວຍເຣີຍ ແມ່ນເຈົ້າຈິໄປໃສ່ຈຶ່ງໄດ້ໃສ່ເກີບອັນໜ້າແພງຄູ່ນັ້ນມາເດ ?" ເມື່ອນາງແມງສາບແນະນຳແນວນັ້ນແລ້ວ, ຜູ້ຊາຍຂອງກົ້ນກໍຖາມສະບາຍດີ ສາວນ້ອຍແສນສວຍເຣີຍ ! ແມ່ນເຈົ້າຈິໄປໃສ່ຈຶ່ງໃສ່ເກີບ ອັນໜ້າແພງຄູ່ນັ້ນມານໍ ?" ນາງແມງສາບກໍຂຽວຕອບ :" ຂ້ອຍຈິໄປຫາ ຣາເມດົງ ແລ້ວຈະໄປແຕ່ງງານກັບຄົນຮັ່ງ ອິງເກີນ ຣາເມຈັ້ນ. ແລ້ວຂ້ອຍຈະໄດ້ກິນເຂົ້າຈີ່ແຊບ, ສູບກອກຢາຫອມ, ກິນນ້ຳເຜີ້ງແລະນ້ຳມັນຢ່າງສຳລານໃຈນັກ. ດັ່ງນັ້ນຂ້ອຍຈະບໍ່ສາງ ພາລະອັນໜັກໜ່ວງໃຫ້ພໍ່ຂ້ອຍຕໍ່ໄປ.

ຜູ້ຊາຍຂອງກົ້ນກໍຖາມຂຶ້ນ " ຈັ່ງເຈົ້າຈະແຕ່ງງານ ກັບຂ້ອຍແທນໄດ້ບໍ່ ?" ຄັນຂ້ອຍຫາກແຕ່ງງານກັບເຈົ້າ, ເວລາເກີດ ຜິດຖຽງກັນມາເຈົ້າຈະເອົາຫຍັງຕີຂ້ອຍ ?" ນາງແມງສາບຖາມ ແນວນັ້ນ. ຜູ້ຊາຍເຄື່ອງຕອບ :" ເອົາຄ້ອນຫັລກຕີ" ໂອຍ ! ບໍ່ໄດ້ແລ້ວ !ໆ! ຄັນເປັນແນວນັ້ນໝາຍວ່າຈິຂ້າຂ້ອຍລາຕີ໋, ຂ້ອຍບໍ່ສາມາດແຕ່ງງານກັບເຈົ້າໄດ້ດອກ ! ນາງແມງສາບທັງເວົ້າທັງແກວ່ງຫົວ, ພໍ່ວ່າສຸດຄວາມແລ້ວກໍຍ່າງໜີໄປໜ້າຢ່າງບໍ່ຫົວຊາຕາເບິ່ງກັບຜູ້ຊາຍເຄື່ອງຊ້ຳ.

ນາງແມງສາບໄປຕາມໄປກໍພໍ້ໂຮງຂາສັດ, ຜູ້ຂ້າສັດກໍຮ້ອງມາຖາມວ່າ :" ແມ່ນເຈົ້າຄິດວ່າຊິໄປທາງໃດຫັ້ນນ໋າ ນາງແມງສາບຜູ້ນ້ອຍໆເຮີຍ !" ໂຮ່ ! ເອົາອີກແລ້ວ, ນາງແມງສາບຜູ້ນ້ອຍໆອີກແລ້ວ ! ເຈົ້າຮູ້ບໍ່ວ່າຕົວຂ້ອຍງາມເດັ່ນກວ່າມາລາຫນ້າຕາເສາະໃສກ່ວາມົງກຸດເທິງເກົ້າພຸ້ມນ໋າ !" ນາງແມງສາບຕອບແນວນັ້ນ, ທັນໃດຜູ້ຂ້າສັດກໍຖາມອີກ. ໂອຍ ! ຄັນຊັ້ນຊິໃຫ້ຂ້ອຍເຮຽກເຈົ້າວ່າແນວໃດຈຶ່ງເໝາະ ? ນາງແມງສາບຕອບ : ເຈົ້າຄວນເຮຽກແບບນີ້ : ສະບາຍດີສາວນ້ອຍແສນສວຍເຮີຍ ! ແມ່ນເຈົ້າຊິໄປໃສຈຶ່ງໃສ່ເກີບອັນຫນ້າແຟ້ງດູນມເດັ່ນ ?" ແລ້ວນາງແມງສາບກໍຕອບ :" ຂ້ອຍຊິໄປຫາ ຣາເມດົງ ແລ້ວຈະແຕ່ງງານກັບຄົນຮັ່ງ ອັງເກີນ ຣາເມຊນ ຊັ້ນແລ້ວຂ້ອຍຈະໄດ້ກິນເຂົ້າຈີ່ແຊບ, ສູບຢາກອກຫອມ, ກິນນ້ຳເຜິ້ງແລະນ້ຳມັນຢ່າງສຳລານໃຈມັກ, ດັ່ງນັ້ນຂ້ອຍຈະບໍ່ສ້າງພາລະ ອັນຫນັກຫຍັງໃຫ້ພໍ່ຂ້ອຍຕໍ່ໄປອີກ "

" ເອີ໋ ! ຄັນຊັ້ນກໍແຕ່ງກັນກັບຂ້ອຍແທນສາຕີ !" ຜູ້ຂ້າສັດຖາມແນວນັ້ນ. ນາງແມງສາບກໍຕອບ :" ຄັນວ່າຂ້ອຍຫາກ ແຕ່ງງານກັບເຈົ້າ, ເມື່ອເຮົາຫາກຜິດຖຽງກັນ ເຈົ້າຊິເອົາຫຍັງຕີຂ້ອຍ?

" ເອົາມີດຂ້າສັດນີ້ແຫລະ ເຮັດວຽກນ໋າ !" ຜູ້ຂ້າສັດ ຕອບຄວາມແນວນີ້ ທັນໃດນາງແມງສາບກໍຮ້ອງຂຶ້ນ " ໂອຍ ! ຕາຍໆ! ຂ້ອຍຢ້ານ ! ບໍ່ກ້າຊິແຕ່ງງານກັບເຈົ້າໄດ້ແລ້ວ, ລາວທັງເວົ້າ ທັງແກ່ວງຫົວ ແລ້ວກໍຍ່າງຫນີໄປຫນ້າຈ້ອຍ ໂດຍບໍ່ສັ່ງບໍລາຜູ້ຂ້າສັດຊ້ຳ.

ນາງແມວສາບເດີນທາງໄປຕາມໄປກັບພໍ່ຄ້າຫຍ້າແຫ້ງ. ພໍ່ຄ້າຖາມວ່າ :" ເຈົ້າຄິດວ່າຊິໄປໃສຫັ້ນນ໋າ ! ນາງແມວສາບນ້ອຍເຮີຍ !" ນາງແມວສາບກໍ່ຕອບ :" ຂ້ອຍບໍ່ແມ່ນນາງນ້ອຍເນີ ! ເຈົ້າເອີ້ນບໍ່ຖືກແລ້ວ, ເຈົ້າຮູ້ບໍ່ວ່າຂ້ອຍມີງາມກວ່າມາລາ ຫນ້າຕາເສາະໃສກວ່າມົງກຸດເທິງເກົ້າ ?" ເອົ໋າ ! ຂັນຊິເອີ້ນແມວໃດເດນີ້ຈຶ່ງເໝາະຈິດເໝາະໃຈ ? ພໍ່ຄ້າຫຍ້າຖາມແມວນັ້ນ. ນາງແມວສາບບອກກ່ອນ :" ເຈົ້າຄວນຮຽກຂ້ອຍວ່າ :" ສະບາຍດີສາວນ້ອຍແສນສວຍເຮີຍ ! ແມ່ນຊິໄປໃສເດນີ້ຈຶ່ງໃສ່ເກີບງາມປານນັ້ນ ?" ແລ້ວພໍ່ຄ້າກໍ່ເວົ້າສ້ອຍຄວາມນະຂັ້ນຕາມທີ່ນາງແມວສາບບອກ. ຈາກນັ້ນນາງແມວສາບນ້ອຍກໍ່ເວົ້າຕໍ່ :" ຂ້ອຍຊິໄປຫາ ຮາເມດົງ ແລ້ວຊິແຕ່ງງານກັບຄົນຮັ້ງ ອັງເກີນ ຮາເມຊັນ. ຄັນຫາກໄດ້ແຕ່ງ ແລ້ວຂ້ອຍຊິໄດ້ກິນເຂົ້າຈີ່ຫວານແຊບ, ສູບຢາຫອມ, ກິນນ້ຳເຜິ້ງ ກັບນ້ຳມັນຢ່າງສຳລານໃຈ. ບັດແລ້ວຂ້ອຍຊິບໍ່ໄດ້ສ້າງພາລະອັນໜັກ ຫຍັງເລີຍໃຫ້ພໍ່ຂ້ອຍ " ເມື່ອເວົ້າສຸດຄວາມ ພໍ່ຄ້າຫຍ້າກໍ່ຖາມ :" ຊັ້ນກໍ່ແຕ່ງງານກັບຂ້ອຍແທນສາຕື້ ! ໄດ້ບໍ່ ?" ນາງແມວສາບຕອບ :" ຄັນຫາກແຕ່ງກັບເຈົ້າຍາມເກີດພິດຖຽງກັນຂຶ້ນ, ເຈົ້າຊິເອົາຫຍັງ ຕີຂ້ອຍ ?"

" ຂ້ອຍຊິເອົາຄ້ອນ ! "

" ໂອຍ ! ຕາຍ ! ເອົາຄ້ອນຕີມັນກໍ່ແມ່ນຊິຂ້າຂ້ອຍລະຕີ, ບໍ່ໄດ້ແລ້ວຂ້ອຍບໍ່ສາມາດແຕ່ງງານກັບເຈົ້າໄດ້ດອກ. ນາງແມວສາບຕອບ

ແນວນັ້ນທັງແກ່ວງຫົວໄປມາ. ຈັກບຶດກໍລຸກປຶບປັບຫນີໄປທາງ ຫນ້າ ຈ້ອຍໂດຍບໍ່ຫ່ວງໃຍກັບພໍ່ຄ້າຫຍ້າອີກ.

ໃນບໍ່ດົນນາງແມງສາບໄດ້ໄປເຖິງຮ່ອມພູແຫ່ງຫນຶ່ງ. ຮອດຫັ້ນ ພົບພໍ້ກັບຫນູໂຕຫນຶ່ງ. ອ້າຍຫນູນັ້ນນຸ່ງເສື້ອຄຸມລາຍດອກ ນຸ່ງສົ້ງຂອງ ຍານຂາຍາວຊຸມຊວະແລະໃສ່ຫມວກຂົນນວນ ຢ່າງເຕັມຊຸດ ທັນໃດ ນັ້ນອ້າຍຫນູກໍເຫັນສາວແມງສາບເຊັ່ນກັນ, ພໍເຫັນແລ້ວອ້າຍບ່າວຫນູ ກໍເປັນຜູ້ເອີ້ຍສຽງຖາມກ່ອນ :" ສະບາຍດີນາງສາວແສນສວຍແມ່ນ ຊິໄປໃສເດນໍ້ຈຶ່ງໃສ່ເກີບງາມປານນັ້ນ ?" ພໍໄດ້ຍິນຄຳຖາມແນວນັ້ນ ນາງແມງສາບນ້ອຍກໍຕອບ :" ຂ້ອຍຊິໄປຫາ ຮາເມດົງແລ້ວຊິແຕ່ງ ງານກັບຊາຍຜູ້ຮັ່ງ ອັງເກີນ ຮາເມຊັນ, ຂ້ອຍຊິຢູ່ທາງກິນ ເຂົ້າຈີ່ ແຊບ, ກິນນ້ຳເຜິ້ງຫວານ, ກິນນ້ຳມັນແຊບແລະສູບຢາຫອມຢ່າງສຳ ລານໃຈ. ທັງຊິບໍ່ໄດ້ມີພາລະອັນຫນັກຫນ່ວງຫຍັງນຳພໍ່ຂອງຂ້ອຍ.

ອ້າຍຫນູກໍກ່າວຂຶ້ນ :" ດີຫລາຍ ສາວນ້ອຍຫນ້າສວຍເອີຍ ! ດັ່ງນັ້ນເຈົ້າຄວນຕັດຮອນເສັ້ນທາງເດີນທຽວຂອງເຈົ້າລົງສາ ແລ້ວ ມາແຕ່ງດອງກັບຂ້ອຍສາ !"

" ຄັນຂ້ອຍຫາກຕົກລົງເຮັດແນວນັ້ນ, ເຈົ້າຈະເອົາຕຽງນອນ ອັນອ່ອນນອນສະບາຍໃຫ້ບໍ່ ?" ນາງແມງສາບຖາມແນວນັ້ນ. ແລ້ວ ຫນູກໍຕອບ :" ໄດ້ ! ຈະເອົາຜ້າປູອ່ອນເຮັດດ້ວຍຂົນແກະໃຫ້ເຈົ້າ

" ໂອ ! ຜ້າຂົນແກະຫວາ ? ມັນຄາຍທັງຈະຄັນໃສ່ຕົວຂ້ອຍ ຂ້ອຍ ບໍ່ໄດ້ນອນເທິງຜ້າປູຂົນແກະຈັກເທື່ອ "

" ເອົ້າ ! ຄັນຊັ້ນເຈົ້າຊິການອນເຫິງຕັກຂ້ອຍບໍ່ ?" ຫນູຖາມແມວ
ນ້, ນາງແມງສາບ : " ເຫິງຕັກເຈົ້າຫວ໋າ ? ແລ້ວເຈົ້າ ຈະເອົາ
ຫຍັງມາວາງໃຫ້ຂ້ອຍຫນູນ ?" ກໍ...! ແຂນຂ້ອຍນັ້ນແລ້ວ !" ຊັ້ນ
ຄັນຢູ່ນຳກັນໄປຕາມໄປແລ້ວຫາກເກີດເປັນເລື່ອງໄດ້ຜິດຖຽງກັບເຈົ້າ
ຊິເອົາຫຍັງຕີຂ້ອຍ ?"

" ຈະເອົາແນວອ່ອນໆ ! ຫາງຂ້ອຍນັ້ນແຫລະຕີເຈົ້ານ໋າ !"

" ຫວ໋າ ! ເຈົ້າຊິເຮັດແນວນັ້ນໄດ້ອີຫລີຫວ໋າ ?" ນາງ ແມງສາບ
ຖາມ. " ກໍ່ບໍ່ເຮັດດອກຄັນບໍ່ມີເລື່ອງຫຍັງທີ່ໄດ້ຜິດຖຽງກັນ ! ບໍ່ແລ້ວ
ເທື່ອນັ້ນຂ້ອຍຈະໃຊ້ປາຍຫາງອັນນິ່ມອ່ອນໆ ຈຸ່ມລົງກັບສີແລ້ວທາວົງ
ຕາວົງຄິ້ວໃຫ້ເຈົ້ານຳອີກ !" ຫນູເວົ້າແນວນັ້ນກັບ ນາງແມງສາບ.
ພໍເອົາທັງສອງຖາມກັນໄປໄຂປັນຍາໃສ່ກັນ ມາຮອດນີ້ ບໍ່ພໍຄາວນາງ
ແມງສາບກໍຍິ້ມທັງເອີຍອື່ນ : " ຊັ້ນຂ້ອຍຕົກລົງໃຈຈະແຕ່ງດອງ ກັບ
ເຈົ້າ "

ນັບແຕ່ຄູ່ບ່າວຫນູກັບສາວສາບ ໄດ້ຜູກພັນໝັ້ນໝາຍກັນ ມາ
ແລ້ວເຂົາກໍ່ເລີ່ມຫາງຫາກະກຽມ ເພື່ອຈັດງານບາສີ ທຳສິລມຸງ ຄຸນ
ກັນໃຫ້ຄຶກຄື້ນຊື່ນໃຈ. ເຂົາກຽມອາຫານຂອງກິນ ແລະ ເຊື້ອເຊີນ
ເພື່ອນຝູງທີ່ສະຫນິດກັນຂອງທັງຝ່າຍຫນູແລະຝ່າຍນາງແມງສາບ...
ເພື່ອນຝູງຂອງເຈົ້າບ່າວກັບເຈົ້າສາວ ກໍ່ຫາໄປເຊີນຜູ້ອື່ນໆ ຕໍ່ໃນວົງ
ວານຂອງນົກຫນູປູຮອກ ມີຮອດນົກຈອກນົກແຊວ, ນົກແຕວແວວ ນົກ
ແອ່ນ ນົກອີ່ແຕ່ນ ກາເວົາ, ນົກຕະເພົາ ນົກຕູ່ ຈົນຄົບຫນ້າໄຂ່ວຕາ

ຍັງມີຮອດເສືອຮອດສິງ ທັງພວກລິງພວກຄ່າງ, ທັງຊ້າງທັງໝາໄນ ຈົນລາມໄປຮອດກະຕ່າຍ ນົກຍູງ ໂຕຕະລຸງ ໂຕບ່າງ ແມງຂາຍາງ ແມງມູມ ຈົນບໍ່ຈື່ຮອດຊື່ກໍ່ມີ. ພໍແຕ່ເຂົາຊຸມນັ້ນໄດ້ຮັບຄຳເຊີນກໍ່ພາກັນລູ່ລັ່ງທັງເໝົາໂຮມໃຫ້ພອນປ້ອນໂຊກແກ່ຄູ່ສົມລົດໃໝ່ລະຫວ່າງເຈົ້າສາວສາຍກັບເຈົ້າບ່າວໜູ.

ເຂົາໄດ້ພາເຈົ້າສາວເດີນໄປສູ່ເຮືອນເຈົ້າບ່າວ ຈາກນັ້ນເຈົ້າບ່າວກໍ່ອອກມາຮັບເຈົ້າສາວເຂົ້າໄປສູ່ພິທີແຕ່ງການປະກາດຄູ່ສົມລົດ, ເມື່ອພິທີດຳເນີນໄປເຖິງຕອນທ້າຍກໍ່ແມ່ນບົນທີ່ເຈົ້າບ່າວ ແລະເຈົ້າສາວສຳພັດມື, ເຂົາໄດ້ເອົາມືເຈົ້າສາວວາງໃສ່ມືເຈົ້າບ່າວອັນເປັນສັນຍານທີ່ສາບານຄວາມຮັກ ປັກໃຈເປັນຜົວເປັນເມຍ ນຳກັນຕໍ່ໄປ. ເພື່ອນຝູງຕ່າງກໍ່ພັດປ່ຽນກັນເຂົ້າອວຍພອນວອນໂຊກ ຈາກນັ້ນ ກໍ່ພາກັນຮັບປະທານອາຫານຢ່າງສຳລານສຸກ ແລ້ວກໍ່ຟ້ອນລຳມ່ວນຊື່ນ ຕັ້ງແຕ່ແລງຈົນເຖິງເດິກດື່ນຈຶ່ງລາເລີກກັນໄປ.

ພາຍຫລັງແຕ່ງງານຜ່ານໄປຫລາຍວັນ, ອ້າຍໜູກໍ່ເລີ່ມ ເດີນບໍ່ສູ້ໜ້າວຽກໜ້າງານຂອງລາວຢ່າງປົກກະຕິ, ສ່ວນນາງແມງສາບກໍ່ຮັດໜ້າທີ່ເຝົ້າເຮືອນ, ມື້ໜຶ່ງລາວໄດ້ເອົາເຄື່ອງນຸ່ງຂອງໜູໄປຊັກຢູ່ແຄມຫ້ວຍແຫ່ງໜຶ່ງໃກ້ກັບເຮືອນຂອງລາວ ເມື່ອລາວຊັກເຄື່ອງຢູ່ນັ້ນໃດກໍ່ຫລອນພະລາດລົງຫ້ວຍແລ້ວດິກນ້ຳນັ້ນ. ຈັກບຶດກໍ່ຫັນ ເຫັນຫຍ້າທີ່ປີ່ງເປັນຍວຍອອກມາສູ່ຫ້ວຍ ນາງແມງສາບກໍ່ຂ້ຽວ ໄປຈ່ອງຫຍ້ານັ້ນໄວ້, ແລະເວລານັ້ນເອງກໍ່ສຸດທີ່ມີສິ່ງປະຫລາດເກີດຂຶ້ນ.

ໃນເວລານັ້ນກໍ່ມອງເຫັນທະຫານຮັກສາ ເຈົ້າຊີວິດ ກາຍມາແຖວນັ້ນ ລາວກໍຄິດຫາວິທີໃຫ້ທະຫານນັ້ນໄດ້ຊ່ວຍຕົນ ພົ້ນຈາກອັນຕະລາຍຄັ້ງນີ້ໂລດ. ນາງແມງສາບ ຮ້ອງອອກໄປວ່າ :

" ເຮີຍ ! ອ້າຍທະຫານຜູ້ສະຫງ່າ, ນີ້ມາໂຕຫນ້າແພງເຮີຍ ຂ້ອຍຈະເວົ້າກັບເຈົ້າແລະມ້າ, ເວົ້າກັບຫມວກແກັບປີ ໄຫມຄຳຂອງເຈົ້າວ່າ : ກະລຸນາຈົ່ງໄປທີ່ເຮືອນຄົວຂອງເຈົ້າຊີວິດຊ່ວຍແດ່ຖ້ອນ, ໄປທີ່ນັ້ນເຈົ້າອາດຈະໄດ້ພົບຫນູນ້ອຍໂຕຫນຶ່ງ, ຫນູນ້ອຍໂຕນັ້ນ ມີຫູບາງໆຫນ້າຮັກແລະມີຂົນອ່ອນເປັນຍູຍໆທົ່ວຕົວ, ພົບລາວແລ້ວ ຈົ່ງເວົ້າວ່າ : ທີ່ຮັກສຸດໃຈຂອງເຈົ້າ, ມາລາຂວັນໃຈຂອງເຈົ້າ ແລະແສງສະຫວ່າງຂອງຫ້ອງບັນທົມຂອງເຈົ້າໄດ້ຕົກນ້ຳ. ແລ້ວບອກ ໃຫ້ລາວມາທີ່ນີ້ໄວໆພ້ອມກັບເອົາຂັ້ນໄດຄຳມາກ່າຍໃຫ້ຂ້ອຍຂຶ້ນຈາກຫ້ວຍນ້ຳແດ່ຖ້ອນ ! ນາງແມງສາບໄດ້ອ້ອນວອນກັບທະຫານຂອງເຈົ້າຊີວິດແນວນັ້ນ.

ໃນເມື່ອທະຫານຄົນນັ້ນໄດ້ກັບໄປເຖິງລາຊະວັງ ໄດ້ນຳເອົາເລື່ອງທີ່ຕົນພົບເຫັນມາເລົ່າສູ່ເຈົ້າຊີວິດພ້ອມກັບເສນາອາມາດ ທັ້ງຫມົດຟັງ, ເບິ່ງພວກເພິ່ນພາກັນຫົວຂວັນຕໍ່ຄວາມເວົ້າຂອງນາງແມງສາບຈົນນ້ຳຫູມານ້ຳຕາຍ້ອຍ ຍ້ອນບໍ່ເຄີຍຍິນໃຜເວົ້າແບບນັ້ນຈັກເທື່ອແຕ່ວ່າທັນໃດນັ້ນ ປູ່ແຈຫ້ອງຫັ້ນກໍມີຫນູນ້ອຍໂຕຫນຶ່ງ, ເຊິ່ງຫນູ ໂຕນີ້ແມ່ນໂຕທີ່ທຽວມາລັກຂອງຢູ່ເຮືອນຄົວເລື້ອຍໆ. ພໍມັນໄດ້ຍິນ ສຽງບອກເລົ່າແລະຫົວຂວັນແຊວໆເຖິງເລື່ອງນາງແມງສາບ ໄດ້ເວົ້າກັບ

ທະຫານ ອ້າຍໜູກໍ່ໂດດປ່ຽວອອກຫ້ອງເຮືອນຄົວຢ່າງບໍ່ລໍຊ້າ ແລ້ວກໍ່ແລ່ນຢ່າງຫົວຫມຸ້ນກຸ້ນໄຖ້ໄປສູ່ຫ້ອງບ່ອນນາງແມວສາບ ພວມຕົກ ແຊ່ນ້ຳຢູ່ພໍ່ໄປຮອດມັນກໍ່ຮ້ອງຕື່ນຄ່ວາ :

" ໂອຍ ! ເມຍຂ້ອຍເຮີຍ ! ເຈົ້າສັງມາເຮັດແນວ ຫນ້າຢ້ານແທ້ເດ ! ແມ່ນເຈົ້າເຮັດແນວໃດຈຶ່ງຕົກລົງໄປແນວນັ້ນ ! ມາດູມາຈັບມືຂ້ອຍແດ່ ແລ້ວຊິດຶງເຈົ້າຂຶ້ນໃຫ້ວິດນ້ຳ " ວ່າແລ້ວອ້າຍໜູກໍ່ຍື່ນມືລົງ ເພື່ອໃຫ້ນາງແມວສາບຈັບ, ທັນໃດກໍ່ຮ້ອງຂຶ້ນ :

" ໂອຍ ! ມືຂ້ອຍກໍ່ຊ້ຳວ່ານ້ອຍວ່າບາງແທ້, ຢ້ານມັນຂາດຊ້ຳນີ້ !"

" ຊັ້ນເອົາຕີນເຈົ້າຢ່ອນລົງມາ ຂ້ອຍຊິຈັບ "

" ບໍ່ ! ບໍ່, ບາງທີເຈົ້າຈັບແລ້ວຊິບິດພ້ອມ ຢ້ານມັນຫັກ "

" ຊັ້ນເຈົ້າຢ່ອນຜົມລົງມາໃຫ້ຂ້ອຍສ່ຳ !"

" ບໍ່ເຈົ້າຊິຈັບຍາກ ຢ້ານມັນຫລຸດມືເຈົ້າ "

" ອາວ ຊັ້ນຊິໃຫ້ຂ້ອຍເຮັດແນວໃດເປັນ ໆ ! ໆ !"

" ອາວ ! ກະດຽວວ່າຂ້ອຍໄດ້ຝາກຄວາມໄປວ່າ ໃຫ້ເຈົ້າເອົາຂັ້ນໄດລຳມາກາຍຢ່ອນເອົາຂ້ອຍ !" ພໍໄດ້ຍິນນາງ ແມວສາບວ່າແນວນີ້. ອ້າຍໜູກໍ່ຂຽວແລ່ນໄປຫາຮ້ານຂາຍຜັກບ່ອນຫນຶ່ງແລ້ວໄປລັກເອົາຫົວມັນກາຣົດ, ໄດ້ຫົວກາຣົດຍາວອັນຫນຶ່ງມາແລ້ວ ອ້າຍໜູກໍ່ແຫ່ນອອມເຮັດເປັນພັກເປັນພັກຄືຂັ້ນໄດ ແລ້ວກໍ່ຢ່ອນລົງໃຫ້ນາງແມວສາບ, ນາງສາບກໍ່ຈັບຂັ້ນໄດຫົວກາຣົດ ແລ້ວກໍ່ຄ່ອຍໄຕ່ຂຶ້ນ ມາ

ຕາມພັກຈີນພົມນ້ຳ, ຈາກນັ້ນອ້າຍທຸກໍຈັບເອົານາງແມງສາບ ເນີຍແສນແພງຂອງລາວແລ່ວຍ່າງຄືນເຮືອນດ້ວຍຄວາມອຶດເນື້ອຍ ພໍຮອດເຮືອນກໍວາງລົງຕຽງໃຫ້ນາງສາບໄດ້ຢຽດໂຕ ໂຊແຮງ.

ນາງແມງສາບໄດ້ນອນຫລັບຈົນເຖິງຊາມແມ່າ ຈຶ່ງຕື່ນຂຶ້ນໄດ້ເວລານັ້ນຕົນໂຕຂອງລາວບ້ອນໃດກໍເຈັບ ທັງປວດເສັ້ນປວດເອັນເປັນຫວັດນຳອີກ. ເຫັນແນວນັ້ນ ອ້າຍທຸຜູ້ເປັນຜົວກໍຮີບໄປຫາໝໍເພື່ອໃຫ້ມາກວດເບິ່ງທັງຖາມແພດວ່າ : ໃຫ້ຂອຍເຮັດຫຍັງແດ່ນາຍໝໍເອີຍຜ່ານການແນະນຳຂອງໝໍຜູ້ນັ້ນ ທ້າວທຸຈຶ່ງຂຽວໄປເຮັດແກງ ຮ້ອນມາໃຫ້ເມຍກິນ.

ທ້າວທຸໄປເຮືອນຄືວ, ລາວເອົາໝໍ້ໃຫຍ່ອອກມາລ້າງ ແລ້ວດັງໄຟຂຶ້ນ ເມື່ອໄຟລຸກ ກໍເອົານ້ຳໃສ່ໝໍ້ມາຕົ້ມ. ຈາກນັ້ນກໍເອົາຊຸ້ນແກນໜາກຖົ່ວ ປ່ອນລົງຕົ້ມ ແລ້ວກໍເອົາຜັກຫອມມາປອກຊອຍ ໃຫ້ແລບໆ ພ້ອມກັບເອົາເຄື່ອງຫອມອື່ນໆ ປ່ອນລົງໃນໝໍ້ຕົ້ມ ແລ້ວກໍຄືນໄປຄືນມາຢ່າງເມົາມົວ, ຍ້ອນລາວບໍ່ມີສະຕິທັງຂາດຄວາມລະວັງໃຈພໍແຕ່ລາວລືນໝໍ້ໄປມາ ກໍຫລອນຕົກປຸ້ມລົງໃນໝໍ້ແກງທີ່ຝົດຮ້ອນ.

ນາງແມງສາບຄອຍອ້າຍທຸຈະເອົາແກງຖົ່ວຮ້ອນມາໃຫ້ ກິນຄອງແລ້ວຄອງເຫລົ່າກໍບໍ່ເຫັນອ້າຍທຸມາ, ນາງແມງສາບ ເລີ່ມວິນວາຍໃຈທັງຫອງກໍຫວ່ນຈຸກໄຈ ເມື່ອລໍຖ້າໄປບໍ່ໄດ້ອີກກໍເລີ່ມ ເອີ້ນຂຶ້ນວ່າ :

" ອ້າຍທຸນ້ອຍເອີຍ ! ໆ !"

ລາວຮ້ອງປານໃດກໍ່ບໍ່ຍິນສຽງຂານຕອບ, ໃນທີ່ສຸດລາວກໍ່ພະ ຫລາດລົງຕຽງ. ເວລານີ້ເຮັດໃຫ້ລາວຍິ່ງຕົກໃຈຈົນໜ້າຕາເຄັ່ງ. ລາວແລ່ນຊອກພຸ້ນຊອກພີ້ອ້ອມທິບ ທັນໃດກໍ່ໄປຮອດເຮືອນຄົວ ແຕ່ກໍ່ຍັງ ບໍ່ເຫັນອ້າຍໜູຢູ່ທີ່ໃດເທື່ອ, ນາງແມງສາບໄດ້ເຫັນໝໍ້ແກງພວມຟົດຢູ່ກໍ່ຍ່າງໄປເອົາໄມ້ດ້ານຄົບ, ທັນໃດນາງກໍ່ໄດ້ເຫັນທ້າວໜູປີ້ນຂອນລູບລົງຕາມປຸ້ມນ້ຳຟົດໃນໝໍ້ແກງ.

ນາງແມງສາບເຫັນແນວນີ້ກໍ່ຮ້ອງໄຫ້ຢ່າງເຫຼີງເຫຼີດ ທັງສັ່ນເຊັນບໍ່ມີແຕ່ໄຫ້ຫລາຍ ລາວຍັງດຶງພຸ້ນທ້າວພໍ້ຈົນຫລົກຖືກຜົມລາວເອງ ແດ, ລາວຮ້ອງທັງໄຫ້ນ້ຳຕາອາບໜ້າຢູ່ຢ່າງເສຍໃຈ ໃນທີ່ສຸດກໍ່ຈົນ ເປັນລົມລົງ.

ເພື່ອນຝູງຂອງນາງແມງສາບໄດ້ຍິນສຽງໄຫ້ ແລ້ວພາກັນແລ່ນມາເຫັນລາວພວມສະຫລົບ ສິບແຫລຢູ່ ເຂົາພາກັ່ນບີບຄັ້ນຕົວ, ບາງຄົນກໍ່ໄປເອົານ້ຳດອກກຸຫລາບມາຈີດໃສ່ໜ້າ ເອົາຢາທາຕາມຄີງຈົນໃຫ້ນາງແມງສາບຟື້ນຕົວຮູ້ຕົວຮູ້ທາຍຂຶ້ນມາ. ນາງແມງສາບໄດ້ເວົ້າເປັນຄວາມອອກມາວ່າ :" ຄວນຈະຢູ່ໄປຢ່າງໃດນໍຈຶ່ງຊິດີ " ແລະແຕ່ນັ້ນມານາງແມງສາບກໍ່ມີແຕ່ໄຫ້ນ້ຳຕາອາບແກ້ມຢູ່ຍ້ວມຍັງຄືນ.

ຈາກສົບຂອງທ້າວໜູໄດ້ຖືກນຳໄປຝັງເປັນຢ່າງດີ, ໝູ່ຄູ່ເພື່ອນຝູງຕ່າງກໍ່ສະແດງຄວາມສະຫລົດໃຈ ໄວ້ທຸກຢ່າງສຸດຊຶ້ງ. ແຕ່ນັ້ນມານາງແມງສາບກໍ່ທຳຕົວເປັນຜູ້ປະຕິເສດທີ່ຈະແຕ່ງງານກັບຜູ້ໃດອີກ , ໃນເມື່ອມີບ່າວຜູ້ໃດຫາກມາຖາມນາງເລື່ອງແຕ່ງດອງຄອງເປັນເມຍ

ແລ້ວ, ນາງແມງສາບກໍຕອບວ່າ :

" ແຕນີ້ໄປມີສອງຢ່າງທີ່ຂ້ອຍຈະບໍ່ເຮັດອີກເດັດຂາດຄື : ອັນທີໜຶ່ງຂ້ອຍຈະບໍ່ກ່າວຣອດເລືອງຈະແຕ່ງດອງກັບໃຜອີກ, ອັນທີ່ສອງຂ້ອຍຈະບໍ່ແກ້ເຄືອງຊຸດນຸ່ງໄວ້ທຸກເຖິງຜົວຂອງຂ້ອຍນີ້ຕະຫລອດໄປ "

ນັບແຕ່ໄດ້ເວົ້າແນວນັ້ນມາ ນາງແມງສາບກໍບໍ່ຍອມແຕ່ງ ງານກັບໃຜ, ແລ້ວກໍນຸ່ງເຄືອງລ້ານປົກຕົວເປັນສີແກ່ນຂາມແກ່ທີ່ໄວ້ ທຸກເຖິງທ້າວໜູ, ແຕ່ມື້ນັ້ນຈົນມາເຖິງມື້ນີ້ຢ່າງບໍ່ໃຫ້ຄິດວ່າຈະມີຍາມແກ້ຍາມຖ່າຍເຄືອງນັ້ນເລີຍ.



ສາລະບານ


| | | | |
|---|---|---|---|
| 1. | ຊຸມນາງກັບພີຣີງຣີດ | ອິນເດຍ | 4 |
| 2. | ສາມອ້າຍນ້ອງກັບຄວາມຝັນ | ຟີລິບປິນ | 16 |
| 3. | ເຈົ້າຊີວິດກັບໄກ່ຜູ້ໂອກ | ປາກິສະຖານ | 26 |
| 4. | ຄາຖາສາມອັນ | ຍີ່ປຸ່ນ | 34 |
| 5. | ເຈົ້າຊີວິດກັບສາມອ້າຍຂີ້ລັກ | ມາເລເຊຍ | 46 |
| 6. | ເຈົ້າຊາຍນີ ນັກຍິງທະນູ | ພະມ້າ | 60 |
| 7. | ນາງແມງສາບ | ອິຣານ | 73 |


24/VII

* * * * *

ຫ້າມຈຳໜ່າຍ

ພິມຄັ້ງທີ 1

ຈຳນວນ 2000 ຫົວ

ທ/ບ 869 /ພທປ 190595

ພິມທີ່ໂຮງພິມຊາວໜຸ່ມ ໂທ : 21. 6338-215721